**ສຶກສາພຣະຄັມພີພາສາລາວ**

Copyright © 2000 by BAPTISTWAY.
ສງວນລິກຂະສິດ

ອະນຸຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY, Baptist General Convention of Texas, 333 North Washington, Dallas, TX 75246-1798.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, State Missions Commission: James Semple
Director, Sunday School/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Bible Comments Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas
Bible Comments Writer for Unit 2
Sidney Kahn, Saginaw Community Church, Fort Worth, Texas
Teaching Procedures Writer for Unit 2
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas
Bible Comments Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Teaching Procedures Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team

Joe Haag, Associate Director, Christian Life Commission, Baptist General Convention of Texas
Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Sunday School/Discipleship Division, Baptist General Convention of Texas

## ເປັນພຍານແກ່ໃຜ?
## ບົດຮຽນທີ່ 1

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 1:1-14
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ກິຈການ 1
<u>ຈຸດສຳຄັນຂອງບົດຮຽນນີ້:</u> ສິດຂອງພຣະເຢຊູເປັນພຍານແກ່ທຸກຄົນ

<u>ຄຳຖາມເພື່ອການສຳຣວດ:</u> ຂ້າພະເຈົ້າຈະເສີມຂຍາຍທາງໃດແດ່ໃນການທີ່ເປັນພຍານເຣື່ອງພຣະຄຣິດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສຳຣວດເບິ່ງການເສີມຂຍາຍການເປັນພຍານຂອງຂ້າພະເຈົ້າ

<u>ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ພັດທະນາ ຄອບຄົວຄຣິສຕຽນ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເລີ່ມຕັ້ງໂບດໃໝ່ຕໍ່

<u>ຄຳນຳ</u>

ພຣະເຢຊູ ມາສ້າງແຜ່ນດິນສວັນເທິງແຜ່ນດິນໂລກ. ເມື່ອເຮົາຕິດຕາມພຣະອົງ, ເອົາຄວາມຄິດແລະແຜນການຂອງພຣະອົງແລ້ວ ເຮົາທັງຫລາຍກໍກາຍເປັນພຍານຝ່າຍພຣະອົງແລະທົນທຸກທໍຣະມານຢ່າງພຣະອົງ.

ຂ້າພະເຈົ້າຈຳໄດ້ຕອນທີ່ຂ້າພະເຈົ້າຍັງຮຽນທີ່ Southwestern Seminary ໃນເວລາເກືອບຊາວປີຜ່ານມາກໍຕາມຍັງຄ້າຍກັບວ່າວານນີ້ເທົ່ານັ້ນ. ຂ້າພະເຈົ້າບໍ່ມີຄວາມແນ່ໃຈແລະນ້ອຍໃຈໃນເຣື່ອງການປະກາດບໍ່ຄືຜູ້ອື່ນ. ຈົນວັນນຶ່ງສິດຍາພິບານຂອງຂ້າພະເຈົ້າໄດ້ເທສນາເຣື່ອງນີ້, ຂ້າພະເຈົ້າຈຶ່ງຮູ້ສຶກວ່າຜິດໄປແລ້ວ. ບາງທີທ່ານອາຈເປັນໃນທຳນອງດຽວກັນກັບຂ້າພະເຈົ້າ. ວັນນັ້ນຂ້າພະເຈົ້າກໍປ່ຽນແປງ.

ທີ່ໂຮງຮຽນ . Professor ໄດ້ເຊີນສິດຍາພິບານມາທີ່ຫ້ອງຮຽນແລະໄດ້ກ່າວວ່າ

"ຫລາຍຄົນໃນພວກທ່ານພາກັນຢ້ານໃນການເປັນພຍານ, ຢ້ານຈະບໍ່ໄດ້ຜົນ ແລະຢ້ານຄົນບໍ່ຟັງ" ທີ່ທ່ານເວົ້ານັ້ນຖືກຂ້າພະເຈົ້າໝົດ ທ່ານເວົ້າຕໍ່ໄປວ່າ "ທ່ານທັງຫລາຍກຳລັງຄຶດວ່າຖືກທົດລອງເບິ່ງຄວາມເຊື່ອ ແຕ່ບໍ່ແມ່ນແນວນັ້ນດອກ ພຣະເຢຊູຕ່າງຫາກທີ່ຖືກທົດລອງ.ພຣະວິນຍານບໍຣິສຸດເປັນທະນາຍຕໍ່ສູ້ແທນທ່ານ, ຊາຕານເປັນຝ່າຍຕໍ່ຕ້ານ, ແລະຄົນທີ່ບໍ່ເຊື່ອເປັນຄະນະຕຸລາການ. ໜ້າທີ່ຂອງທ່ານຄືອອກໄປເປັນພຍານເມື່ອຖືກຮຽກເອີ້ນ ຈົ່ງບອກສິ່ງທີ່ທ່ານຮູ້ ສ່ວນຜົນຮັບເປັນໜ້າທີ່ຂອງພຣະວິນຍານບໍຣິສຸດ" ຂ້າພະເຈົ້າບໍ່ເຄີຍຄຶດໃນການເປັນພຍານແບບນີ້. ທ່ານໄດ້ກ່າວຕໍ່ໄປອີກ "ທ່ານອາຈເປັນຄົນທຳອິດທີ່ພຣະວິນຍານ

ບໍຣິສຸດໄດ້ເອີ້ນ,ຫລືອາຈເປັນຜູ້ສຸດທ້າຍກໍບໍ່ຮູ້ຈັກ. ທ່ານຈະມາເມື່ອຄະນະຕຸລາການຕັດສິນຊີ້ຂາດ ຫລືບາງທີທ່ານອາຈບໍ່ມີໂອກາດໄດ້ຍິນຄຳຕັດສິນຂອງຄະນະຕຸລາການເລີຽ ນັ້ນບໍ່ແມ່ນຂຶ້ນກັບທ່ານ. ຫນ້າທີ່ຂອງທ່ານຄືປະຕິບັດເມື່ອຖືກຮ້ອງອອກໄປເປັນພຍານ ແລະບອກສິ່ງທີ່ທ່ານຮູ້. " ສິດຍາພິບານນັ້ນເວົ້າຖືກຫມົດ.

ພຣະເຢຊູໄດ້ເອີ້ນພວກເຮົາມາເປັນພຍານ. ສິ່ງໃດຈະເກີດຂຶ້ນເມື່ອທ່ານໄປກໍແມ່ນພຣະວິນຍານຊົງນຳ? ທ່ານຢາກມີຄວາມຊຳນານການເປັນພຍານເຣື່ອງຄວາມເຊື່ອຂອງທ່ານຢ່າງມີປະສິດທິພາບບໍ່? ເປັນຫນ້າຕື່ນເຕັ້ນທີ່ຈະນຳພາໃຜຜູ້ນຶ່ງມາຮັບຊີວິດນິຣັນໃນພຣະເຢຊູຄຣິດບໍ່? ທ່ານຢາກມີສິດທິພິເສດທີ່ຈະນຳຂ່າວຂອງອົງພຣະຜູ້ເປັນເຈົ້າດ້ວຍໃຈກ້າຫານບໍ່?

Elton Trueblood ນັກປັຣຊຍາຄຣິສຕຽນຜູ້ຍິ່ງໃຫຍ່ໄດ້ກ່າວວ່າ "ທຸກອົງການຈັດຕັ້ງ ແລະສ່ວນບຸກຄົນທີ່ສຳເຣັດການງານຈຳເປັນຕ້ອງມີຄວາມອົດທຸກລຳບາກ ທາງການວາງແຜນແລະອອກແຮງເຮັດງານດ້ວຍ". ຄຳເວົ້າ ຂອງທ່ານຄືຖືກກັບພວກເຮົາແທ້.

<u>ທ່ານມີຄວາມຮູ້ສຶກແນວໃດ?</u> ກິຈການ 1:1-6

ພຣະເຢຊູຊົງເລີ້ມກິຈການດ້ວຍການປະກາດະ "ເວລາກຳນົດມາເຖິງແລ້ວ ຣາຊອານາຈັກຂອງພຣະເຈົ້າມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ແລະເຊື່ອໃນຂ່າວປະເສີດ!" (ມາຣະໂກ 1:15) ແລະ (ມັດທາຍ 4:17) ນີ້ແມ່ນການເລີ້ມຕົ້ນ ແລະພຣະອົງກໍລົງທ້າຍດ້ວຍການໃຊ້ເວລາ 40 ວັນສຸດທ້າຍກັບສາວົກ. "ພຣະອົງໄດ້ປາກົດແກ່ເຂົາລະຫວ່າງສີ່ສິບວັນ ແລະໄດ້ສົນທະນາກັບເຂົາເຣື່ອງຣາຊອານາຈັກຂອງພຣະອົງ" (ກິຈການ 1:3)

ພຣະເຢຊູໄດ້ສອນເຣື່ອງແຜ່ນດິນສວັນໂດຍສອນເຖິງການອ້ອນວອນດັ່ງນີ້ະ "ຂໍໃຫ້ພຣະຣາຊອານາຈັກຂອງພຣະອົງມາຕັ້ງຢູ່ຂໍໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງ" (ມັດທາຍ 6:10) ແຜ່ນດິນສວັນຂອງພຣະອົງຈະມາເມື່ອໃດນັ້ນແມ່ນຕາມນ້ຳພຣະທັຍຂອງພຣະອົງ ເມື່ອທ່ານແລະຂ້າພະເຈົ້າຍອມໃຫ້ພຣະເຈົ້າເປັນເຈົ້າຊີວິດແລະເຮົາຍອມຖວາຍຕົວແກ່ພຣະອົງ ເຮົາທັງຫລາຍກໍເຂົ້າໃນແຜ່ນດິນສວັນຂອງພຣະອົງແລ້ວ. ເມື່ອເຮົານຳຄົນອື່ນມາກໍເຊັ່ນດຽວກັນ ຄືເຮົາໄດ້ສ້າງແຜ່ນດິນສວັນຂອງພຣະອົງແລ້ວ.

ດ້ວຍເຫດນີ້ແຫລະພຣະເຢຊູຈຶ່ງສະເດັດມາໃນໂລກເພື່ອສ້າງແຜ່ນດິນສວັນ. ໃນພຣະທັມລູກາທີ່ໄດ້ຮຽນຜ່ານມາແລ້ວ (ກິຈການ 1:1) ໄດ້ກ່າວເຣື່ອງແຜ່ນດິນສວັນແມ່ນແນໃສ່ ການເກີດ, ການວາຍພຣະຊົນ ແລະການຄືນມາຈາກຕາຍຂອງພຣະເຢຊູ. ພຣະທັມລູກາໄດ້ຢ້ຳເຖິງເຫດຜົນທີ່ພຣະເຢຊູຢູ່ໃນໂລກອີກສີ່ສິບວັນຫລັງຈາກຄືນມາຈາກຕາຍແລ້ວະ ເພື່ອສ້າງແຜ່ນດິນສວັນຂອງພຣະເຈົ້າພຣະອົງໄດ້ຊົງແນະນຳສາວົກເຖິງພຣະວິນຍານບໍຣິສຸດທັງນີ້ກໍເພື່ອພິສູດການຄືນມາຈາກຕາຍໃຫ້ແກ່ສາວົກນັ້ນເອງ ແລະຍັງສົນທະນາກັບເຂົາເຖິງຣາຊອານາຈັກຂອງພຣະເຈົ້າອີກ ( ກິຈການ 1: 2-3)

ສາວົກພາກັນຕັ້ງຕົ້ນຖາມ "ພຣະອົງຈະຕັ້ງຣາຊອານາຈັກຄືນໃຫມ່ໃຫ້ແກ່ພວກອິສຣາເອັນໃນບັດນີ້ຫລື." (ກິຈການ 1:6) ພວກເຂົາຮູ້ດີວ່າການສ້າງຣາຊອານາຈັກຂອງພຣະເຈົ້າເປັນຈຸດປະສົງຂອງພຣະເຢຊູ ແຕ່ສາວົກບໍ່ໄດ້ເຮັດຕາມນ້ຳພຣະທັຍຂອງພຣະອົງ.

<u>ທ່ານມີຄວາມຄິດເຫັນແນວໃດ (ກິຈການ 1:7 -8)</u>

ໃຈຮ້ອນຮົນເທົ່ານັ້ນຍັງບໍ່ພໍເຮົາຈຳຕ້ອງຄິດວາງແຜນການໃນການດຳເນີນງານ. ພຣະເຢຊູມີຄວາມຄິດຢ່າງໃດ? ພຣະທັມກິຈການ ໄດ້ກ່າວໄວ້ຢ່າງແຈ່ມແຈ້ງໃນເຣື່ອງຣິດອຳນາດຊຶ່ງມາຈາກພຣະເຈົ້າ " ແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດ(ຈະ)ສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນຝ່າຍເຮົາໃນກຸງເຢລູຊາເລັມ, ຕລອດເຖິງແຂວງຢູດາຍ, ກັບແຂວງຊາມາເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ" (ກິຈການ 1:8) ຈົ່ງພິຈາຣະນາຄຳສັນຍາຂອງພຣະເຢຊູທີ່ໃຫ້ໄວ້ແກ່ສາວົກ.

- ໂຜດປະທານພຣະວິນຍານບໍຣິສຸດ ເປັນຣິດເດດທີ່ມາຈາກພຣະວິນຍານຂອງພຣະເຈົ້າອົງສູງສຸດ
- ໂຜດປະທານພະລັງອຳນາດໃນການເປັນພຍານ
- ການເປັນພຍານຈະໄດ້ຮັບຜົນດ້ວຍຣິດອຳນາດຂອງພຣະວິນຍານບໍຣິສຸດ

ພຣະເຈົ້າມີງານສຳລັບໃຫ້ເຮົາເຮັດແຕ່ເຮົາຕ້ອງເຮັດດ້ວຍຣິດອຳນາດພຣະວິນຍານບໍຣິສຸດໃນພຣະນາມແຫ່ງພຣະເຢຊູຄຣິດ. ພຣະອົງໄດ້ສັ່ງຢ່າງແຈ້ມແຈ້ງໃນການອອກໄປເປັນພຍານສິ່ງທີ່ເຮົາຮູ້ໃຫ້ແກ່ຄົນທັງປວງ.

<u>ທ່ານມີແຜນການແນວໃດ?</u> (ກິຈການ 1:9-14)
ເພື່ອຈະໃຫ້ເປັນໄປໂດຍດີເຮົາຈຳເປັນຕ້ອງເລີ້ມເຮັດແຕ່ວັນນີ້ໄປ (ກິຈການ 1:9-11) ພາຣະນັ້ນກໍຮີບດ່ວນແທ້. ເຫມືອນດັ່ງເທວະດາໄດ້ກ່າວວ່າ "ຊາວຄາລີເລເອີຍ, ເປັນຫຍັງພວກທ່ານຈຶ່ງຢືນເບິ່ງທ້ອງຟ້າ ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວ ຈະສະເດັດກັບມາອີກເຫມືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ" ຫລືຈະເວົ້າຢ່າງແຈ້ງວ່າ "ຈົ່ງໄປເຮັດຫນ້າທີ່ຂອງທ່ານສາ ເບິ່ງລ້າໆ ເຮັດຫຍັງ" ນັ້ນເອງ.

ຄຣິສຕຽນໃນສມັຍກ່ອນມີຄວາມຫວັງຢາກເຫັນພຣະເຢຊູກັບມາໄວໆ ພວກເຂົາເຈົ້າບໍ່ເຂົ້າໃຈເມື່ອເຫັນຫລາຍຄົນໄດ້ລ່ວງລັບໄປກ່ອນການສະເດັດກັບຄືນມາ. ສາວົກໄດ້ເລົ້າໂລມຄົນທັງຫລາຍທີ່ຖືກສູນເສັຽຜູ້ທີ່ຮັກໃນຄອບຄົວໄປໃນຂະນະທີ່ລໍຖ້າການກັບມາຂອງພຣະເຢຊູ. ສາວົກພຍາຍາມເລົ້າໂລມ ບໍ່ໃຫ້ໂສກເສົ້າເຫມືອນຄົນບໍ່ມີຄວາມຫວັງ

ຊາຍຄົນຫນຶ່ງໄດ້ປະກາດໃນຫ້ອງຮຽນວັນອາທິດວ່າ ລາວຈະຕາຍໄວໆນີ້ດ້ວຍພະຍາດ ແຄນເຊີ ສນັ້ນຈຶ່ງຕຽມພ້ອມທີ່ຈະພົບກັບອົງພຣະຜູ້ເປັນເຈົ້າ. ໃນວັນນັ້ນມີຜູ້ນຶ່ງໄດ້ຕາຍດ້ວຍອຸບັດຕິເຫດຣົຖຕຳກັນ ຊາຍຜູ້ເປັນພະຍາດແຄນເຊີ ກໍໄປໃນງານສົບນັ້ນ ລາວໄດ້ເວົ້າວ່າ ວັນນີ້ເປັນວັນດຽວເທົ່ານັ້ນ ດ້ວຍວ່າເຮົາທຸກຄົນຈຳເປັນຈະຕ້ອງປາກົດຕໍ່ຫນ້າບັນລັງພິພາກສາຂອງພຣະຄຣິດ (2ໂກຣິນໂທ 5:10) ສະນັ້ນຢ່າເສົ້າໃຈ ຈົ່ງເຮັດງານຂອງອົງພຣະຜູ້ເປັນເຈົ້າສ້າງຜົນງານກ່ອນທີ່ເຮົາຈະໄປຢືນຢູ່ຕໍ່ຫນ້າພຣະອົງ.

<u>ພຣະເຈົ້າມີພຣະປະສົງໃຫ້ທ່ານເຮັດຫຍັງ?</u>
ທ່ານຈະເວົ້າຢ່າງໃດຫາກທ່ານເປັນຄຣິສຕຽນສມັຍກ່ອນທີ່ມີຜູ້ທີ່ທ່ານຮັກໄດ້ເສັຽຊີວິດໄປໃນຂະນະທີ່ເຊື່ອພຣະອົງຢູ່ ? ທ່ານຮູ້ດີວ່າພຣະເຢຊູໄດ້ວາຍພຣະຊົນເພື່ອທ່ານແລະພຣະອົງໄດ້ຄືນພຣະຊົນມາເພື່ອຄວາມເຊື່ອຂອງທ່ານຈະບໍ່ໄດ້ເປັນຫມັນ. ທ່ານມີຄວາມເຊື່ອວ່າພຣະອົງຊົງເປັນພຣະເຈົ້າແລະເປັນເຈົ້ານາຍ, ແຕ່ທ່ານບໍ່ມີຄວາມແນ່ໃຈໃນຄວາມເຊື່ອຂອງທ່ານ. ນອກຈາກການນະມັສການໃນວັນອາທິດ, ຖວາຍ, ແລະການຮຽນພຣະຄັມພີຕາມບ້ານແລ້ວ ທ່ານຄິດວ່າຫມົດເທົ່ານັ້ນບໍ່? ຫລືພຣະອົງມີພຣະປະສົງໃຫ້ທ່ານເຮັດຫຍັງອີກແດ່?

ຕອບຄຳຖາມຂ້າງເທິງນັ້ນກໍງ່າຍນ້ອຍດຽວ. ພຣະເຈົ້າມີພຣະປະສົງໃຫ້ທ່ານສ້າງຣາຊແຜ່ນດິນຂອງພຣະອົງເປັນສິ່ງສຳຄັນທີ່ສຸດ. ພຣະອົງມີພຣະປະສົງໃຫ້ທ່ານເປັນພາຊະນະຂອງພຣະອົງໃນການນຳຄົນອື່ນເຂົ້າມາໃນພຣະຣາຊແຜ່ນດິນສວັນຂອງພຣະອົງແຕ່ລະວັນໆ ແຕ່ພຣະອົງຮູ້ດີວ່າທ່ານຈະເຮັດສິ່ງນີ້ດ້ວຍຕົວຄົນດຽວບໍ່ໄດ້ ພຣະອົງຈຶ່ງໄດ້ໂຜດປະທານພຣະວິນຍານບໍຣິສຸດໃຫ້ແກ່ທ່ານເພື່ອທ່ານຈະມີໃຈກ້າເປັນພຍານຮ່ວມກັບເພື່ອນຮ່ວມງານຜູ້ທີ່ອຸທິດຕົນເອງເພື່ອສນອງຄວາມຮັກຂອງພຣະເຈົ້າ. ແລະພຣະອົງມີພຣະປະສົງໃຫ້ທ່ານເລີ້ມແຕ່ດຽວນີ້.

ທ່ານບໍ່ໄດ້ອ່ານແລະຮຽນບົດນີ້ໂດຍບັງເອີນດອກ, ແຕ່ແມ່ນພຣະປະສົງຂອງພຣະເຈົ້າທີ່ມີຕໍ່ທ່ານໃນເວລານີ້ະ

<u>ຄຳຖາມ</u>

- ທ່ານຈະອະທິບາຍຄວາມຮູ້ສຶກສ່ວນຕົວໃນຊີວິດຂອງທ່ານຢ່າງໃດ? ທ່ານຈະຕອບສນອງຄວາມປະສົງຂອງພຣະເຢຊູໃຫ້ທ່ານເຮັດຄືແນວໃດ?

- ເວລາໃດທ່ານໄດ້ໃຊ້ເວລາເຂົ້າເຝົ້າພຣະເຈົ້າເພື່ອສແວງຫາຣິດອຳນາດຂອງພຣະອົງ? ຕໍ່ໄປຈະເຮັດແນວໃດເພື່ອຈະໄດ້ຮັບອຳນາດ?

- ທ່ານຈະຂຽນລົງຊ່ອງວ່າງນີ້ຢ່າງໃດ " ໜ້າທີ່ການຮັບໃຊ້ຂ້າພະເຈົ້າແມ່ນ............................" ຫາກທ່ານບໍ່ແນ່ໃຈ ທ່ານມີແຜນການຫຍັງເພື່ອຊອກຫາຂອງພຣະຣາຊທານທີ່ທ່ານມີ?

- ມີໃຜແດ່ທີ່ທ່ານຄວນຈະຂຽນລົງບັນຊີແລະອ້ອນວອນເພື່ອລາວແຕ່ລະວັນ? ຈະອ້ອນວອນຂໍແນວໃດ?

- ທ່ານຮູ້ ຫລືມີໝູ່ຄົນໃດທີ່ຍອມຈຳນົນຮັບໃຊພຣະເຈົ້າບໍ່? ທ່ານຈະຮ່ວມງານນຳເຂົາເຈົ້າໃນທາງໃດ
- ເພື່ອຈະນຳຄົນທັງຫລາຍມາຮູ້ຈັກກັບອົງພຣະຜູ້ເປັນເຈົ້າ?.

## ເຕັມໄປດ້ວຍພຣະວິນຍານ?ໃຜ? ເຮົາ?
## ບົດຮຽນທີ 2

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ກິຈການ 2:1-16,22-24,36-41
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ກິຈການ 2
ຈຸດສໍາຄັນຂອງບົດຮຽນນີ້: ດັ່ງທີ່ເປັນສາວົກຂອງພຣະເຢຊູທີ່ມີຣິດອໍານາດ, ເປໂຕໄດ້ຮຽກເອີ້ນຄົນທັງຫລາຍໃຫ້ກັບໃຈ, ຮັບບັບຕິສມາ, ແລະໃຫ້ມາຮັບຂອງພຣະຣາຊທານຝ່າຍພຣະວິນຍານທຸກຄົນ
ຄໍາຖາມເພື່ອການສໍາຣວດ: ຂ້າພະເຈົ້າຈະເສີມຂຍາຍທາງໃດແດ່ໃນການເປັນພຍານເຣື່ອງພຣະຄຣິດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອາທິບາຍໃຫ້ແຈ້ງເຣື່ອງຊີວິດທີ່ເຕັມໄປດ້ວຍພຣະວິນຍານ

| ເຣື່ອງທີ່ກໍາລັງເນັ້ນຫນັກໃນເທັກຊັດ: |
| --- |
| ● ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ. |
| ● ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ |
| ● ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເລີ້ມຕັ້ງໂບດໃຫມ່ຕໍ່ |

ອ່ານ: ທ່ານຜູ້ທີ່ໃຈເປັນຫ່ວງຄົນທັງຫລາຍໃນການເປັນພຍານຝ່າຍພຣະເຢຊູ, ເຮົາທັງຫລາຍຈໍາຕ້ອງ ເປັນ "ເຕັມໄປດ້ວຍພຣະວິນຍານ" ຫລືໃຫ້ພຣະວິນຍານເປັນຜູ້ນໍາເຮົາແຕ່ລະວັນ.

ຂ້າພະເຈົ້າບໍ່ແມ່ນຄົນຕື່ນເດິກລຸກເຊົ້າ. ຫາກບໍ່ມີໂມງປຸກຂ້າພະເຈົ້າຄົງຈະບໍ່ມີໂອກາດເຫັນຕາເວັນຂຶ້ນດອກ. ຄັ້ງນຶ່ງເກີດລົມພາຍຸເຮີຣິເຄນ ທີ່ຮິວສເຕີນ ເທັກຊັດ ບ່ອນພໍ່ແມ່ຂອງຂ້າພະເຈົ້າຢູ ຂ້າພະເຈົ້າຂັບຣົຖໄປຢາມເພິ່ນ ພໍໄປເຖິງຕອນຄໍ່າປາກົດວ່າໄຟຟ້າດັບໄປຫມົດ. ວັນຕໍ່ມາຂ້າພະເຈົ້າກໍຕື່ນແຕ່ເຊົ້າເພາະຢາກເຫັນຄວາມຮ້າຍແຮງຂອງເຮີຣິເຄນ, ຂ້າພະເຈົ້າໄດ້ໃຊ້ໄຟສາຍເພື່ອໄປຫ້ອງນໍ້າກ່ອນຈະອອກໄປຂ້າງນອກທີ່ຫ້ອງນໍ້ານັ້ນຂ້າພະເຈົ້າກໍເຫັນເຄື່ອງແຖຫນວດໄຟຟ້າຂອງພໍ່ຍັງປັກສຽບຢູ່ ຂ້າພະເຈົ້າຈຶ່ງຈັບມາເພື່ອຈະແຖຫນວດ ແຕ່ປາກົດວ່າມັນບໍ່ເຮັດວຽກ ຈຶ່ງເວົ້າກັບຕົນເອງວ່າ "ມັນເພແລ້ວ" ຂ້າພະເຈົ້າມາຮູ້ຄວາມຈິງທີຫລັງວ່າມັນຍັງບໍ່ເພ ແຕ່ມັນຕ້ອງການໄຟຟ້າເພື່ອຈະເຮັດວຽກ.

ເຮົາທັງຫລາຍຕ້ອງການພຣະເຢຊູເພື່ອຈະມີຣິດອໍານາດ. ສິ່ງນຶ່ງສໍາຄັນທີ່ເຮົາກໍາລັງຮຽນກັນຢູ່ນີ້ຄືການຍອມມອບຖວາຍຕົນເອງໃຫ້ກັບພຣະອົງ, ເຮົາຈະບໍ່ມີພະລັງອໍານາດຈົນກ່ວາເຮົາຍອມມອບກາຍຖວາຍຊີວິດ.

ທ່ານໄດ້ເຕັມໄປດ້ວຍພຣະວິນຍານແລ້ວບໍ່? (2:1-11)
ຄໍາວ່າ ເພັນເຕຄໍສເຕ Pentesost ມາຈາກພາສາກຣີກຊຶ່ງແປວ່າ 50ວັນຫລັງຈາກງານປັສຄາ (Passover) ເຫັນໃນພຣະທັມ (ເລວີຕິຄັດ 23:10,15-16) ຊຶ່ງມີຄົນເດີນທາງມາຍັງກຸງເຢຣູຊາເລັມຈາກເມືອງຕ່າງທີ່ຂຶ້ນກັບຈອມຈັກກະພັດໂຣມ ເພື່ອທໍາການສເລີມສລອງງານເກັບກ່ຽວຝ່າຍຈິດວິນຍານໄດ້ຜົນດີ.

ຄຣິສຕຽນໃນສມັຍກ່ອນໃນກຸງເຢຣູຊາເລັມມີຊີວິດມີອັນຕະລາຍ. ພວກຜູ້ທີ່ມີອຳນາດທີ່ໄດ້ປະຫານພຣະເຢຊູ ກໍຈັບຕາເບິ່ງເຂົາເຈົ້າຢູ່ສເມີ. ດັ່ງນັ້ນພຣະເຢຊູຈຶ່ງສັ່ງພວກເຂົາເຈົ້າໃຫ້ລໍຖ້າການສະເດັດມາຂອງພຣະວິນຍານບໍຣິສຸດ (ລູກາ 24:49; ກິຈການ 1:5,8) ແລະພວກເຂົາເຈົ້າກໍເຮັດດັ່ງນັ້ນ.

ສິ່ງທີ່ຈະເກີດຂຶ້ນໃນພາຍຫນ້າສາມາດປຽ່ນແປງໂລກໄດ້ຕລອດໄປ. ໃນຖານະທີ່ເປັນໄພ່ພົນຂອງອົງພຣະຜູ້ເປັນເຈົ້າພວກເຂົາເຈົ້າພາກັນອ້ອນວອນຢູ່ (ກິຈການ 1:14;2:1-4) ໃນທັນໃດນັ້ນກໍມີສຽງມາຈາກຟ້າເຫມືອນສຽງລົມພະຍຸກ້າ ກ້ອງສນັ່ນທົ່ວເຮືອນທີ່ເຂົານັ່ງຢູ່ນັ້ນ ມີລີ້ນເປັນຮູບເຫມືອນແປວໄຟໄດ້ປາກົດໃຫ້ເຂົາເຫັນແລະລີ້ນນັ້ນກໍແຕກກະຈາຍອອກໄປຢູ່ເທິງເຂົາທຸກຄົນຜູ້ລະລີ້ນ. ດັ່ງທີ່ໂຢຮັນໄດ້ທຳນວາຍໄວ້ແລ້ວໃນ (ມັດທາຍ 3:11) ແລະຈາກນັ້ນພວກເຂົາເຈົ້າກໍພາກັນເວົ້າພາສາແປກໆທີ່ເປັນພາສາມະນຸສໂລກ.

ວັນເພັນເຕຄໍສເຕ ມີການອັດສຈັນແນວໃດ? ແລະມີຄວາມຫມາຍຫຍັງສຳລັບເຮົາວັນນີ້? ຈົ່ງພິຈາຣະນາເພື່ອຈະຕອບຄຳຖາມຕໍ່ໄປນີ້:
1. ເຮົາເຕັມໄປດ້ວຍພຣະວິນຍານຢ່າງໃດ?
2. ການເວົ້າພາສາແປກໆນັ້ນເປັນເຄື່ອງພິສູດວ່າເຮົາເຕັມໄປດ້ວຍພຣະວິນຍານບໍ່?

1. ເຮົາເຕັມໄປດ້ວຍພຣະວິນຍານຢ່າງໃດ?
ທ່ານຫມໍລູກາໄດ້ໃຫ້ຄວາມຫມາຍວ່າ "ເຂົາເຫລົ່ານັ້ນກໍເຕັມໄປດ້ວຍພຣະວິນຍານ" ໃນພຣະທັມກິຈການໄດ້ບັນທຶກສີ່ຄັ້ງ ບົດ 4:8,31;9:17;13:9). ແຕ່ລະຄັ້ງທີ່ເຕັມໄປດ້ວຍພຣະວິນຍານ ເຂົາເຈົ້າກໍປະກາດໄດ້ຮັບຜົນດີ.

ການເຕັມໄປດ້ວຍພຣະວິນຍານເປັນຂອງສຳຄັນຫລາຍ ສນັ້ນໂປໂລຈຶ່ງສັ່ງ "ຢ່າເມົາເຫລົ້າແວງ ຊຶ່ງພາໃຫ້ເສັຽຄົນ ແຕ່ຈົ່ງເຕັມໄປດ້ວຍພຣະວິນຍານກໍດີກວ່າ" (ເອເຟໂຊ 5:18) ໃນພຣະທັມນີ້ເຮົາໄດ້ເຫັນຄວາມສຳຄັນຂອງຄຣິສຕຽນຣຸ່ນກ່ອນທີ່ປະກອບໄປດ້ວຍພຣະວິນຍານ.

<u>ກ່ອນອື່ນ, ໃຫ້ພຣະເຢຊູເປັນເຈົ້າແຫ່ງຊີວິດ.</u> ຖ້າແມ່ນພຣະວິນຍານຂອງພຣະເຈົ້າສຖິດໃນເຮົາແລ້ວ ພຣະອົງກໍຊົງນຳເຮົາແລະເປັນເຈົ້າແຫ່ງຊີວິດຂອງເຮົາ.

<u>ຕໍ່ມາ, ຍອມຮັບວ່າທ່ານຕ້ອງການຣິດອຳນາດພຣະວິນຍານ.</u> ພວກສາວົກພາກັນອ້ອນວອນຂໍຣິດອຳນາດຕາມທີ່ພຣະອົງໄດ້ສັນຍາໄວ້ແລ້ວ. ພວກເຂົາເຈົ້າຮູ້ດີວ່າເຂົາເຈົ້າບໍ່ສາມາດຊະນະໂລກໂດຍກຳລັງແລະຄວາມສາມາດຂອງຕົນເອງ

<u>ສາມ, ເຊົາເຮັດບາບ</u>. ເພື່ອຈະເຕັມໄປດ້ວຍພຣະວິນຍານ ເຮົາຕ້ອງຍອມໃຫ້ພຣະວິນຍານຊົງນຳ. ຈົ່ງຈຳໄວ້ວ່າ ພຣະວິນຍານເປັນ <u>ວິນຍານບໍຣິສຸດ</u> . ພຣະອົງຈະບໍ່ຊົງນຳສິ່ງທີ່ມີຮອຍດ່າງພ້ອຍເລີຍ. ກໍເຊັ່ນດຽວເຮົາບໍ່ເອົານ້ຳສົກກະປົກໃສ່ຈອກນຳດື່ມຊຶ່ງພາໃຫ້ເປິະເປື້ອນໄປຊື່ໆ. ພຣະວິນຍານບໍຣິສຸດຈະບໍ່ສຖິດກັບຈິດໃຈທີ່ເປິະເປື້ອນ ສນັ້ນຫາກເຮົາຢາກໃຫ້ພຣະວິນຍານບໍຣິສຸດມາສຖິດນຳຈົ່ງທຳໃຈໃຫ້ບໍຣິສຸດເສັຽກ່ອນ.

<u>ສີ່. ຖວາຍຕົວແກ່ພຣະເຈົ້າ.</u> ເຮົາຄວນມອບຕົວໃຫ້ພຣະເຈົ້າ ຕັດຄວາມທະເຍີທະຍານເຮົາອອກຈາກຊີວິດຈິດໃຈ.

ຫ້າ. ຂໍໃຫ້ພຣະວິນຍານນໍາທ່ານ. ຈົ່ງຍອມໃຫ້ພຣະວິນຍານເປັນຜູ້ຊົງນໍາພາ ເພື່ອທ່ານຈະບໍ່ເຮັດຕາມກິເລດຕັນຫາຂອງມະນຸດ (ຄາລາເຕັຽ 5:16)

ຫົກ. ເຮັດດັ່ງນີ້ທຸກວັນ. ຕາມພຣະທັມ ເອເຟໂຊ 5:18 ຕາມພາສາກຣີກ {Pleerousthe} ແປວ່າ "ເຕັມ" ຊຶ່ງເປັນ [Present tense] ປັດຈຸບັນການ ຊຶ່ງບົ່ງບອກວ່າທຸກວັນ. ເມື່ອເຮົາຮັບພຣະເຢຊູມາເປັນພຣະຜູ້ຊ່ອຍແລ້ວເຮົາກໍໄດ້ຮັບຄວາມລອດພົ້ນ ແຕ່ເຮົາຈໍາຕ້ອງຍອມຖວາຍຕົວໃຫ້ພຣະອົງເຕີມວິນຍານຈິດໃຫ້ເຕັມແຕ່ລະວັນ.

ຫາກທ່ານເປັນຄຣິສຕຽນ ທ່ານກໍມີພຣະວິນຍານ. ນີ້ຄືຄໍາຖາມທີ່ຫນ້າຄຶດ: ພຣະວິນຍານມີທ່ານບໍ່?

2. ການເວົ້າພາສາແປກໆເປັນເຄື່ອງຄໍ້າປະກັນການເຕັມໄປດ້ວຍພຣະວິນຍານບໍ່?
ໃນປະໂຫຍກຕໍ່ໄປນີ້ ເປັນເຣື່ອງທີ່ເຂົ້າໃຈຍາກ "ຕັ້ງຕົ້ນເວົ້າພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ເຂົາວັນນັ້ນ" (ກິຈການ 2:4)

Glossa ເປັນຄໍາເດີມຂອງພາສາກຣີກຊຶ່ງມີຄວາມຫມາຍວ່າ "ລີ້ນ ຫລື ພາສາ" ແລະອາດຈະແຍກອອກເປັນສາມປະເພດ ຄື 1. ໃນຢາໂກໂບ 3:5 ເວົ້າເຖິງລີ້ນ; 2. ໃນກິຈການ 2 ພຣະວິນຍານສະເດັດລົງມາເປັນຄືລີ້ນແລະເວົ້າໃນພາສາ (ລີ້ນ)ຕ່າງໆ. 3. ໃນກິຈການ 2 ໄດ້ຫມາຍເຖິງພຣະຣາຊທານພຣະວິນຍານ. ເພື່ອຈະຮູ້ວ່າຕອນໃດຫມາຍຄວາມວ່າລີ້ນຫລືຂອງພຣະຣາຊທານໃຫ້ເບິ່ງຕາມ ບົດຄວາມ {Contex} ຊຶ່ງບອກເຖິງທີ່ມາ, ຈຸດປະສົງແລະຜົນສລຸບ.

ກ່ອນອື່ນ, ຜູ້ຟັງໄດ້ຍິນພາສາເປັນພາສາຂອງເຂົາເຈົ້າເອງຊຶ່ງຜູ້ເວົ້ານັ້ນບໍ່ເຄີຍຮຽນຮູ້ມາກ່ອນ (ກິຈການ 2:6)
ເປັນແນວໃດພວກເຮົາທຸກຄົນຈຶ່ງໄດ້ຍິນເຂົາເວົ້າພາສາບ້ານເກີດເມືອງນອນຂອງເຮົາ? (ກິຈການ 2:8)

ຕໍ່ມາ, ຄຣິສຕຽນທຸກຄົນໄດ້ເວົ້າພາສາແປກກັນຫມົດເມື່ອເຂົາເຈົ້າໄດ້ເຕັມໄປ ດ້ວຍພະວິນຍານ ການເວົ້າພາສາຊາດອື່ນບໍ່ແມ່ນຂອງພຣະຣາຊທານທີ່ໃຫ້ແຕ່ບາງຄົນ ແຕ່ແມ່ນໃຫ້ທຸກຄົນທີ່ຢູ່ທີ່ນັ້ນແລະໃນເວລານັ້ນ.

ສາມ, ຈຸດປະສົງໃນການເວົ້າພາສາອື່ນກໍແມ່ນການປະກາດຂ່າວປະເສີດນັ້ນເອງ, ເຫມືອນດັ່ງເຮົາໄດ້ຍິນຂ່າວປະເສີດເປັນພາສາເຮົາເອງໃນເວລານີ້.

ກໍຣະນີອື່ນອີກໃນຄໍາວ່າ glossa ເປັນພາສາທີ່ຄົນຕ່າງຊາດຟັງແລ້ວເປັນພາສາຕົນເອງ. ສັງເກດເບິ່ງ 1ໂກຣິນໂທ 13 ແລະ 14 ໂປໂລໄດ້ກ່າວເຖິງການເວົ້າພາສາແປກໆທີ່ສາມາດແປໄດ້,.

ກ່ອນອື່ນ. ເມື່ອເວົ້າພາສາແປກໆຕ້ອງສາມາດແປໄດ້ດ້ວຍ. ຫາກບໍ່ສາມາດແປໄດ້ຜູ້ທີ່ເວົ້າຄວນມິດຢູ່ໃຫ້ເວົ້າພາສານັ້ນຣະຫວ່າງລາວເອງກັບພຣະເຈົ້າ (1ໂກຣິນໂທ14:28) ແຕ່ຢ່າງໃດກໍຕາມວັນເພັນເຕຄໍສະເຕນັ້ນບໍ່ຈໍາເປັນຕ້ອງແປ ເພາະຜູ້ຟັງແຕ່ລະຄົນໄດ້ຍິນເປັນພາສາຕົນເອງ (ກິຈການ 2:11)

ຕໍ່ມາ. ທີ່ຄຣິສຕະຈັກໃນເມືອງໂກຣິນໂທບໍ່ແມ່ນໄດ້ຮັບຂອງພຣະຣາຊທານພາສາແປກໆ ກັນຫມົດ ບາງຄົນເປັນ

ສາວົກບາງຄົນເປັນຜູ້ປະກາດພຣະທັມ, ບາງຄົນເປັນຄຣູບາອາຈານ ແລະບາງຄົນກໍເປັນຜູ້ເຮັດການອິດທິຣິດ (1ໂກຣິນໂທ 12:28-30) ແລະໃນທີ່ສຸດໂປໂລກ່າວຕໍ່ໄປ ໃຫ້ທ່ານທັງຫລາຍສແວງຫາຂອງພຣະຣາຊທານອັນສຳຄັນກວ່ານັ້ນ.

ສາມ. ໂປໂລເຕືອນເຣື່ອງພາສາແປກໆ ເຖິງການປາກເວົ້າແລະການຟັງ.

ສລຸບເຣື່ອງພາສາແປກໆ. ບໍ່ແມ່ນຂອງຈຳເປັນພິສູດໃນການເຕັມໄປດ້ວຍພຣະວິນຍານດັ່ງທີ່ບາງຄົນເຂົ້າໃຈ ເພາະການເຕັມໄປດ້ວຍພຣະວິນຍານເຮັດຢ່າງອື່ນກໍມີຫລວງຫລາຍ.

ທ່ານໄດ້ເປັນພຍານດ້ວຍຣິດເດດຂອງພຣະວິນຍານບໍ່? ( ກິຈການ 2:12-16,22-24,36-41)

ເມື່ອເຮົາເປັນພຍານດ້ວຍສະຕິປັນຍາແລະຄວາມຮູ້ຂອງເຮົາກໍບໍ່ມີຜົນປາກົດຝ່າຍພຣະວິນຍານ, ແຕ່ຫາກເຮົາເປັນພະຍານດ້ວຍຣິດເດດພຣະວິນຍານຈະມີສິ່ງປຽ່ນແປງທັງສອງກ້ຳສອງຝ່າຍດ້ວຍ.

ກ່ອນອື່ນ. ບາງທ່ານອາຈ<u>ບໍ່ເຂົ້າໃຈ</u> ເຂົາທັງຫລາຍຈຶ່ງອັສຈັນໃຈແລະສງົບສົນເທເວົ້າກັນວ່າ ການນີ້ອາດຈະເປັນຢ່າງໃດຫນໍ? (ກິຈການ 2:12) ຄົນທີ່ບໍ່ມີພຣະວິນຍານກໍເປັນດັ່ງນັ້ນແທ້ ຕົວຢ່າງ "ແຕ່ມະນຸດທີ່ມີຈິດໃຈທັມມະດາຈະຮັບສິ່ງເຫລົ່ານັ້ນຊຶ່ງເປັນຂອງພຣະວິນຍານແຫ່ງພຣະເຈົ້າບໍ່ໄດ້ ເພາະວ່າການທີ່ຈະເຂົ້າໃຈສິ່ງນັ້ນໄດ້ກໍຕ້ອງອາສັຍພຣະວິນຍານ ( 1ໂກຣິນໂທ 2:14)

ຕໍ່ມາ. ບາງຄົນຊອກ <u>ຈັບຄວາມຜິດ</u> ລາງຄົນເວົ້າເຍາະເຍີ້ຍຫົວຂວັນຈຶ່ງເວົ້າວ່າ "ຄົນຫລົ່ານັ້ນເຕັມໄປດ້ວຍເຫລົ້າອະງຸ່ນໃຫມ່. (ກິຈການ 2:13). ດັ່ງນັ້ນພຣະເຢຊູຈຶ່ງເຕືອນເຮົາໄວ້ລ່ວງຫນ້າ "ເຂົາອົ່ມເຫງເຮົາ ເຂົາກໍຈະອົ່ມເຫງທ່ານທັງຫລາຍເຫມືອນກັນ" (ໂຢຮັນ 15:20)

ສາມ. ເມື່ອເຮົາເປັນພຍານດ້ວຍຣິດເດດຂອງພຣະວິນຍານ ເຮົາຈະໄດ້ຮັບຄວາມເລົ້າໂລມ (ກິຈການ 2:14-16) ເມື່ອ 50 ວັນກ່ອນນີ້ເປໂຕໄດ້ປະຕິເສດພຣະເຢຊູ (ມາຣະໂກ 14: 66-71) ແຕ່ວັນນີ້ເປໂຕກ່າວດ້ວຍພຣະວິນຍານຊົງນຳ (ກິຈການ 2:14-16) ດັ່ງນັ້ນເມື່ອທ່ານອ່ອນໃຈໃນການເປັນພຍານຈົ່ງຂໍໃຫ້ພຣະວິນຍານຊົງນຳເພື່ອທ່ານຈະມີໃຈກ້າຫານອີກໃຫມ່ (2ຕີໂມທຽວ 1:7)

ສີ່. ເມື່ອເຮົາເຕັມໄປດ້ວຍພຣະວິນຍານເມື່ອໃດ ເມື່ອນັ້ນແຫລະເຮົາຈະມີຄວາມຮູ້ສຶກຮ້ອນຮົນໃນການເປັນພຍານ (ກິຈການ 2:22-24)

<u>ຄຳຖາມສອງຄຳທີ່ຄວນຖາມຕົນເອງ:</u>

ຂ້າພະເຈົ້າເຄີຍເຊີນພຣະວິນຍານມາສະຖິດໃນໃຈຂ້າພະເຈົ້າແລ້ວບໍ່? ຫາກບໍ່ ມື້ໃດຈະເຊີນຫລືຮັບເອົາ? ເປັນຫຍັງຈຶ່ງບໍ່ຮັບເຊີນວັນນີ້?

ຂ້າພະເຈົ້າເຄີຍເຊີນພຣະວິນຍານມາເປັນຜູ້ນຳທາງຫລືບໍ່? ເປັນຫຍັງການເປັນພຍານຂ້າພະເຈົ້າບໍ່ເກີດຜົນດີ? ມີຫຍັງຕັນທາງຂ້າພະເຈົ້າທີ່ບໍ່ໄດ້ເຊີນເອົາພຣະວິນຍານເປັນຜູ້ນຳພາ?

ຄຳຖາມ

- ໃນຊີວິດຂອງຄຣິສຕຽນເຮົາແມ່ນຫຍັງເປັນເຄື່ອງກີດກັ້ນທີ່ຈະຍອມຈຳນົນຕໍ່ພຣະວິນຍານ? ແລະໃນຊີວິດທ່ານເອງເດຍາກຢູ່ບ່ອນໃດ?
- ໃນຄຣິສຕະຈັກຂອງຄະນະບັບຕິສເປັນຫຍັງບໍ່ສອນແລະເນັ້ນຫນັກເຣື່ອງ ເຕັມໄປດ້ວຍພຣະວິນຍານເປັນຈຸດຫນັກ? ສິ່ງໃດຈະຊ່ອຍໃຫ້ຄຣິສຕະຈັກຂອງທ່ານຈະເຣີນ?
- ທ່ານຈະຕອບເພື່ອນຄຣິສຕຽນຂອງທ່ານຜູ້ທີ່ມັກພາສາແປກໆ ແນວໃດ?
- ໃນຄຣິສຕະຈັກຂອງທ່ານຈະມີຫຍັງປ່ຽນແປງຫາກມີຫລາຍຄົນທີ່ເຕັມໄປດ້ວຍພຣະວິນຍານໃນການເປັນພຍານ? ໃນບ້ານເຮືອນແຖວນັ້ນຈະເປັນແນວໃດ.

# <u>ຊ່ວຍເຫລືອຄວາມຕ້ອງການຂອງມະນຸດ?ໃຜ? ເຮົາ?</u>

## <u>ບົດຮຽນທີ 3</u>

<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u> ກິຈການ 3:1-10
<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u> ກິຈການ 3
<u>ຈຸດສໍາຄັນຂອງບົດຮຽນນີ້:</u> ເປໂຕແລະໂຢຮັນຊ່ວຍເຫລືອຄວາມຈໍາເປັນຂອງມະນຸດ
<u>ຄໍາຖາມເພື່ອການສໍາຮວດ:</u> ການຊ່ວຍເຫລືອມີຄວາມຈໍາເປັນສໍາຄັນຫຍັງຕໍ່ຄຣິສຕະຈັກຂອງທ່ານ
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະຮູ້ວ່າພຣະເຈົ້າຮ້ອງທ່ານມາເພື່ອຊ່ວຍເຫລືອຄວາມຈໍາເປັນ

<u>ເຣື່ອງທີ່ກໍາລັງເນັ້ນຫນັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເລີ້ມຕັ້ງໂບດໃຫມ່ຕໍ່

ນາງ Tillie Burgin ບໍ່ເຂົ້າໃຈ. ພຣະເຈົ້າຮ້ອງນາງແລະຄອບຄົວໄປເປັນຜູ້ປະກາດຂ່າວປະເສີດທີ່ປະເທດເກົາຫຼີ, ນາງໄດ້ກັບຄືນມາອາເມຣິກາເມື່ອລູກຊາຍຜູ້ນ້ອຍຂອງລາວເຈັບຫນັກ. ລາວກັບມາຍັງເມືອງອາລິງຕັນ ເທັກຊັດ ແລະກໍກັບໄປໂບດເດີມFirst Baptist Church Arlington Texas. ທີ່ມີໂຮງຮຽນໃນໂບດ ນາງ Tillie Burgin ກໍເປັນສະມາຊິກແລະຮັບໃຊ້ເປັນຫົວຫນ້າພແນກການນຶ່ງຂອງໂຮງຮຽນນັ້ນ. ນາງເປັນຜູ້ສອນໂຮງຮຽນວັນອາທິດ ແລະນາງໄດ້ເອີ່ຍເຖິງການອອກໄປເປັນຜູ້ປະກາດຂ່າວປະເສີດເລື້ອຍໆ. ວັນນຶ່ງພຣະເຈົ້າໄດ້ເວົ້າກັບນາງທາງ ຄວາມຝັນວ່າ "ເຮົາຈະໃຫ້ເຈົ້າເປັນຜູ້ປະກາດຂ່າວປະເສີດທີ່ເມືອງນີ້ຄືກັນກັບເຈົ້າໄດ້ເຮັດທີ່ປະເທດເກົາຫຼີ" ຫລາຍ ວັນຜ່ານໄປນາງໄດ້ຕັດສິນໃຈລາງານທີ່ເຮັດຢູ່ແລ້ວກໍເລີ້ມເປີດ Mission Arlington ໃນໂບດຂອງນາງແລະນາງ ເອງກໍບໍ່ຮູ້ຈັກວ່າຈະເລີ້ມຕົ້ນຈາກຈຸດໃດ, ແຕ່ນາງຮູ້ແນ່ໃນໃຈວ່າພຣະຈົ້າຊົງນໍາສເມີ.

ໃນວັນແຣກ Tillie ໄດ້ໄປຊອ່ຍຄົນທີ່ ອາພາດເມັນແລະກໍມີການຮຽນພຣະຄັມພີເກີດຂຶ້ນໃນຄືນນັ້ນຊຶ່ງ ມີເຈັດຄົນມາຮຽນພຣະຄັມ ນີ້ຄືທີ່ມາຂອງ Mission Arlington. ທຸກມື້ນີ້ມີ2000 ກວ່າຄົນໄດ້ອາສາສມັກ ໃນວຽກງານຕ່າງໆແລະ 150 ພແນກການແລະໂບດທີ່ເກີດຂຶ້ນຈາກນີ້ ແລະກໍສາມາດນໍາຄົນມາຫາພຣະເຈົ້າເກີນ ກວ່າ 3000 ແຕ່ລະອາທິດ. ອະນາຄົດຈະມີໂຮງຫມໍປົວແຂ້ວ, ຊ່ວຍ Furnitures ແກ່ຄົນຍາກຈົນ, ເຄື່ອງນຸ່ງ, ແລະຊ່ວຍເປັນທີ່ປຶກສາໃຫ້ແກ່ ຄົນວ່າງງານ, ຄົນຕິດການພະນັນ, ຕິດເຫລົ້າ, ຕິດຢາ ຕລອດເຖິງຄົນທີ່ຊ່ວຍ ຄົນກໍ່ຄວາມວຸ້ນວາຍໃຫ້ກັບໃຈເຊື່ອພຣະເຈົ້າດ້ວຍ. ຈາກ Mission Arlington ມາເປັນຊື່ Woman of the year ໃນເວລານີ້.

ຕໍ່ໄປນີ້ແມ່ນເຄັດລັບໃນການທີ່ຈະຮູ້ຈັກວ່າຄົນນັ້ນຕ້ອງການຫຍັງ ຄືເຮົາຕ້ອງເຮັດໄປນໍາເທື່ອລະຄົນ. ນາງໄດ້ເຮັດສິ່ງທີ່ພຣະເຢຊູໄດ້ເຮັດໃນ ກິຈການ 3 ແລະພຣະອົງຍັງຈະເຮັດຢູ່ໃນວັນນີ້.

ສັງເກດເບິ່ງ (ກິຈການ 3:1-5)

ເປໂຕແລະໂຢຮັນຂຶ້ນໄປພຣະວິຫານທີ່ກຸງເຢຣູຊາເລັມບ່ອນທີ່ຄົນໄປນະມັສການຫລວງຫລາຍ ໄດ້ພົບກັບຊາຍງ່ອຍຄົນນຶ່ງມາແຕ່ທ້ອງແມ່. ຄົນຂໍທານຄົນນີ້ໄດ້ມາທີ່ປະຕູງາມເປັນປະຈຳເພື່ອຂໍທານກິນແຕ່ລະວັນໆເປັນເວລາ 40ປີປາຍແລ້ວຈົນເກືອບຈະບໍ່ມີໃຜຢາກໃຫ້ທານລາວແລ້ວ ແລະວັນນີ້ເອງພຣະເຈົ້າໄດ້ເຫັນຄວາມລຳບາກຂອງລາວ. ເປໂຕກັບໂຢຮັນມີຈິດວິນຍານສຳພັດກັບຊາຍພິການນີ້ຈຶ່ງຍ່າງເຂົ້າໄປໃກ້ລາວແລ້ວຈຶ່ງກ່າວວ່າ " ຈົ່ງເບິ່ງເຮົາ " ຊາຍຂໍທ່ານຈຶ່ງຫລຽວເບິ່ງແລະກໍຫວັງໃນໃຈວ່າຈະໄດ້ເງິນຫລືອາຫານສຳລັບຄາບນັ້ນ. ເປໂຕທີ່ເຕັມໄປດ້ວຍພຣະວິນຍານບໍຣິສຸດຈຶ່ງກ່າວວ່າ "ເງິນແລະຄຳເຮົາບໍ່ມີ ແຕ່ອັນທີ່ເຮົາມີຢູ່ນັ້ນເຮົາຈະໃຫ້ແກ່ເຈົ້າ ຄືໃນພຣະນາມແຫ່ງພຣະເຢຊູໄທນາຊາເຣັດຈົ່ງຍ່າງໄປ " (ກິຈການ 3:5-6) ພຣະທັມຕອນນີ້ໄດ້ຊີ້ໃຫ້ເຮົາເຫັນວ່າສາວົກທັງສອງຮູ້ຈັກຄວາມຕ້ອງການຂອງຊາຍພິການບໍ່ແມ່ນອາຫານແຕ່ແມ່ນສຸຂພາບດີນັ້ນເອງ.

ຕາມຄວາມຈິງແລ້ວເປໂຕແລະໂຢຮັນອາດຈະມີເງິນຕິດຖົງແດ່ບາງເລັກນ້ອຍ, ແຕ່ທີ່ເປໂຕເວົ້າວ່າ ເງິນແລະຄຳເຮົາບໍ່ມີນັ້ນກໍເພາະທັງສອງຮູ້ດີວ່າຫາກເອົາເງິນໃຫ້ລາວໄປຊື້ອາຫານກິນມື້ນີ້ ມື້ອື່ນກໍຈະຫິວແລະມາຂໍທານຄືເກົ່າ ສາວົກຮູ້ຈັກສິ່ງທີ່ຄົນງ່ອຍນັ້ນຕ້ອງການຈຶ່ງບໍ່ແມ່ນອາຫານແຕ່ແມ່ນພຣະເຢຊູພຣະຜູ້ຊ່ວຍໃຫ້ພົ້ນ.

ຫລັງຈາກລາວດີເປັນປົກກະຕິແລ້ວມີສອງຢ່າງທີ່ລາວເຮັດເປັນຂອງສຳຄັນທີ່ເຮົາທັງຫລາຍຄວນເຮັດເຊັ່ນກັນ;

1. ລາວສັຣເສີນພຣະເຈົ້າດ້ວຍການຍອມມອບກາຍຖວາຍຊີວິດຕິດຕາມພຣະອົງ
2. ລາວຂອບໃຈສາວົກທັງສອງທີ່ເປີດທາງໃຫ້ລາວໄດ້ຮູ້ຈັກກັບອົງພຣະຜູ້ເປັນເຈົ້າ.

ທ່ານພໍຈື່ໄດ້ບໍ່ ແມ່ນໃຜເປັນຜູ້ແນະນຳທ່ານໃຫ້ຮູ້ຈັກກັບອົງພຣະຜູ້ເປັນເຈົ້າ? ແມ່ນໃຜເປັນຜູ້ເວົ້າຂ່າວປະເສີດໃຫ້ທ່ານຟັງເປັນຜູ້ທີ່ແຣກ? ຂ້າພະເຈົ້າຂໍແນະນຳທ່ານຢ່າລືມຄົນນັ້ນເລີຍ.

ເຊື່ອໃນພຣະນາມ (ກິຈການ 3:6)

ການຮູ້ຈັກຄວາມຕ້ອງການຂອງເພື່ອນບ້ານນັ້ນກໍດີແທ້ແຕ່ຍັງມີສິ່ງທີ່ສຳຄັນກວ່ານັ້ນຄືຄວາມລອດພົ້ນຈົ່ງສັງເກດຄຳເວົ້າຂອງເປໂຕ " ສິ່ງທີ່ເຮົາມີເຮົາຈະໃຫ້ແກ່ເຈົ້າ " ແມ່ນສິ່ງໃດທີ່ສາວົກເປໂຕມີ? ສິ່ງທີ່ເປໂຕມີທ່ານກໍມີຄືກັນ "ໃນພຣະນາມແຫ່ງພຣະເຢຊູຄຣິດໄທນາຊາເຣັດຈົ່ງຍ່າງໄປ " ຫລືເວົ້າໄດ້ວ່າຈົ່ງດີເປັນປົກກະຕິສາ.ຊຶ່ງແປວ່າ <u>ໂດຍຣິດອຳນາດຂອງພຣະເຢຊູ</u>ຈົ່ງດີເປັນປົກກະຕິເສັຽ. ຊຶ່ງບົ່ງບອກວ່າບໍ່ແມ່ນເປໂຕເປັນຜູ້ເຮັດ.

ຈັບບາຍຜູ້ເຈັບເປັນ (ລູກາ 3:7-11)

ເປໂຕຈັບມືຂວາຄົນນັ້ນເພື່ອຊ່ອຍລາວໃຫ້ຢືນຂຶ້ນ ໃນທັນໃດນັ້ນຕີນແລະຂໍ່ຕີນຂອງລາວກໍມີແຮງ. ຊຶ່ງເປັນຄັ້ງແຣກໃນຊີວິດທີ່ຕີນແລະຂໍ່ຕີນຂອງລາວມີແຮງ ລາວກໍຟ້າວລຸກຂຶ້ນແລະແລ່ນໄປມາດ້ວຍຄວາມດີໃຈສຸດປະມານແລະສັຣເສີນພຣະເຈົ້າໄປພ້ອມ. ຊາຍຄົນນີ້ບໍ່ແມ່ນແຕ່ຮ່າງກາຍລາວດີເປັນປົກກະຕິເທົ່ານັ້ນຈິດວິນຍານຂອງລາວກໍບັງເກີດໃຫມ່ພ້ອມ.

ພົລເມືອງທັງຫລາຍກໍງຶດງໍ້ອັສຈັນໃນເຫດການນັ້ນເປັນດ້ວຍເຫດໃດຫນໍ? ເປໂຕແລະໂຢຮັນຈຶ່ງມີໂອກາດດີໃນການປະກາດພຣະນາມພຣະເຢຊູ:

- ພວກຂ້າພະເຈົ້າໄດ້ເຮັດສິ່ງນີ້ໃນພຣະນາມພຣະເຢຊູຜູ້ຊົງເປັນພຣະເຈົ້າມີຣິດອຳນາດບໍ່ມີຂອບເຂດຈຳກັດ.
- ພຣະເຢຊູອົງນີ້ແຫລະທີ່ຄົນຢືວປະຕິເສດບໍ່ຍອມເຊື່ອພຣະອົງ.
- ແຕ່ພຣະອົງຍັງໃຫ້ໂອກາດພວກທ່ານກັບໃຈຢູ່ສເມີ.

<u>ເຮົາກໍສາມາດເຮັດໄດ້ໃນສິ່ງທີ່ສາວົກເຮັດ</u>

ຄົນພິການຫລາຍຄົນໄດ້ລຽນແຖວກັນທີ່ປະຕູໂບດຂອງເຮົາໃນເວລານີ້. ສິ່ງທີ່ເຂົາເຈົ້າຕ້ອງການອາຈເປັນຝ່າຍຮ່າງກາຍ,ຄວາມນຶກຄຶດ, ຫລືຝ່າຍຈິດວິນຍານ. ຄົນຈຳພວກນີ້ກໍເຈັບເທົ່າໆກັນກັບຊາຍເປັນງ່ອຍມາແຕ່ກຳເນີດນັ້ນ. ສິ່ງທີ່ເຮົາຄວນເຮັດນັ້ນກໍແມ່ນສິ່ງທີ່ສາວົກໄດ້ເຮັດມານັ້ນຄືກັນ.

<u>ຄຳຖາມ</u>

1. ໃຜເປັນຜູ້ຊ່ອຍທ່ານໃຫ້ຮູ້ຈັກກັບພຣະເຈົ້າ? ທ່ານມີອະດີດຄ້າຍຄືຊາຍງ່ອຍນີ້ບໍ່?
2. ຄວາມບາບອັນໃດເຮັດໃຫ້ເຮົາເປັນລ່ອຍຝ່າຍຈິດວິນຍານ?
3. ບາງເທື່ອເຮົາເຮັດໃຫ້ຄົນເຈັບປວດຍ້ອນເງິນຄຳ ເຮົາ ແທນທີ່ເຮົາຈະຈັບບາຍຊ່ອຍເຫລືອໃຫ້ຮູ້ຈັກກັບພຣະເຈົ້າ ນັ້ນມີແນວໃດ?
4. ຈະເຮັດແນວໃດທ່ານຈຶ່ງຈະສາມາດຮູ້ແລະເຮັດໄດ້ຄືເປໂຕແລະໂຢຮັນ?
5. ຫາກທ່ານບໍ່ເລີ້ມເຮັດວັນນີ້ແລ້ວແມ່ນມື້ໃດຈະເຮັດ? ຫາກທ່ານບໍ່ເຮັດແລ້ວໃຜຈະເຮັດເພາະທ່ານເປັນສາວົກຂອງພຣະເຢຊູ.
6. ທ່ານຈະຕຽມຊ່ອຍເຫລືອຄົນຂັດສົນແນວໃດແດ່ໃນອາທິດນີ້?

# ຖືກປອງຮ້າຍກໍບໍ່ຢ້ານ
## ບົດຮຽນທີ 4

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 4:1-20
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 4:1-31; 5:12-42
ຈຸດສຳຄັນຂອງບົດຮຽນນີ້: ເປໂຕແລະໂຢຮັນຖືກປອງຮ້າຍແຕ່ຍັງເຊື່ອຫມັ້ນໃນພຣະເຈົ້າ
ຄຳຖາມເພື່ອການສຳຣວດ: ທ່ານຈະເຮັດແນວໃດເມື່ອຖືກຄົນໃນເຊື້ອຊາດກ່າວໃສ່ຮ້າຍ
ຈຸດປະສົງຂອງບົດຮຽນນີ້: ເພື່ອເຕືອນໃຫ້ຮູ້ວ່າທ່ານກໍຈະຖືກຄົນຂອງທ່ານເອງເປັນຜູ້ຕໍ່ສູ້ທ່ານ.

**ເຣື່ອງທີ່ກຳລັງເນັ້ນຫນັກໃນເທັກຊັດ:**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ.
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະ ທົ່ວໂລກ
- ພັດທະນາ ຄອບຄົວຄຣິສຕຽນ
- ຊ່ວຍອຸປຖັມໂບດທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເລີ້ມຕັ້ງໂບດໃຫມ່ຕໍ່

ອ່ານ. ພຣະວິນຍານຂອງອົງພຣະຜູ້ເປັນເຈົ້າຈະຊູກຳລັງແລະເປັນທີ່ກຳບັງແກ່ເຮົາ (ເພງສັຣເສີນ 62:2)

ທ່ານເຄີຍຖືກຂົ່ມເຫງຍ້ອນທ່ານໄດ້ເຊື່ອໃນພຣະເຢຊູຄຣິດບໍ່? ທ່ານໄດ້ເຮັດແນວໃດ? ບາງເທື່ອການຖືກຂົ່ມເຫງເນື່ອງຈາກວ່າເຮົາເຊື່ອພຣະເຢຊູຄຣິດນັ້ນບໍ່ໄດ້ເຮັດໃຫ້ຄຣິສຕຽນບາງຄົນທໍ້ຖອຍແຕ່ເຮັດໃຫ້ລາວຈະເຣີນຂຶ້ນ. ເມື່ອທ່ານຖືກບັນຫາເດທ່ານຈະຖອຍຫລືວ່າຈະຕໍ່ສູ້ເພື່ອກຳຈັດບັນຫາ. ຄົນເຮົາບໍ່ສາມາດຫນີບັນຫາໄດ້ ເຮົາຈະໄປຢູ່ທີ່ໃດບັນຫາກໍຕາມໄປ ສະນັ້ນຢ່ານ້ອຍໃຈເມື່ອຊີວິດມີບັນຫາ ແລະຈົ່ງນຳບັນຫາຂອງທ່ານເຂົ້າເຝົ້າພຣະເຈົ້າ.

ການປອງຮ້າຍທຳລາຍຄວາມເຊື່ອ (ກິຈການ 4:1-4)
ໃນບົດຮຽນທີ່ຜ່ານມາມີການອັສຈັນຫລາຍໆຢ່າງເກີດຂຶ້ນກໍຕາມແຕ່ພຣະເຢຊູຍັງໄດ້ກ່າວເຕືອນໄວ້ລ່ວງຫນ້າເຖິງການປອງຮ້າຍພວກທ່ານເພາະເຂົາປອງຮ້າຍພຣະອົງກ່ອນແລ້ວ (ໂຢຮັນ 15:20)

ພວກປະໂຣຫິດ, ພວກທະຫານຍາມຮັກສາພຣະວິຫານ ແລະ ພວກຊາດູກາຍມາຫາເປໂຕແລະໂຢຮັນໃນຂະນະທີ່ກຳລັງເທສນາສັ່ງສອນປະຊາຊົນຢູ່ (ກິຈການ 4:1)

- ພວກປະໂຣຫິດທີ່ມີຫນ້າທີ່ຮັບຜິດຊອບນຳພາການນະມັສການແລະອ້ອນວອນໃນພຣະວິຫານໃນຮອບຫົກເດືອນນີ້(ລູກາ 1:23)
- ພວກທະຫານຍາມພຣະວິຫານເປັນຜູ້ຢູ່ໃຕ້ອຳນາດຂອງປະໂຣຫິດແລະກໍມີຫນ້າທີ່ເວນຍາມທີ່ພຣະວິຫານເປັນປະຈຳ (ກິຈການ 5:24)
- ພວກຊາດູກາຍເປັນຜູ້ມີອຳນາດເຕັມໃນການບັງຄັບບັນຊາ, ເປັນຂຸນນາງຊັ້ນສູງໃນພຣະວິຫານຂອງຊາວຢິວ

ພວກເຂົາເຈົ້າມາຈັບເອົາຄວາມຜິດສາວົກທັງສອງເພາະພວກເຂົາເຈົ້າບໍ່ເຊື່ອໃນການຟື້ນພຣະຊົນຂອງພຣະເຢຊູນັ້ນມີຈິງ. ພວກເຂົາເຈົ້າກໍມີເຫດຜົນໃນການບໍ່ເຊື່ອ ແລະເຂົາເຈົ້າຈະບໍ່ຍອມໃຫ້ຂ່າວນີ້ແຜ່ອອກໄປຍັງປະຊາຊົນອີກດ້ວຍ. ເປໂຕແລະໂຢຮັນຖືກຈັບຂັງຄຸກວັນນັ້ນກໍເພາະເຂົາສືບຖາມຍັງບໍ່ທັນຫມົດຄຳຖາມກໍປາກົດວ່າເວລາຈວນຈະຄ່ຳແລ້ວແລະກໍຫວັງໃຈວ່າຈະສືບສວນຕໍ່ໃນວັນໃຫມ່. ສ່ວນຄົນທີ່ໄດ້ຍິນເຣື່ອງທີ່ເປໂຕແລະໂຢຮັນໄດ້ປະກາດໄປນັ້ນມີຈຳນວນຜູ້ຊາຍມາຮັບເຊື່ອປະມານຫ້າພັນຄົນ.

<u>ການຈັບກຸມເປັນໂອກາດປະກາດເຣື່ອງພຣະເຢຊູ</u> ກິຈການ 4:5-13

ໃນວັນຮຸ່ງເຊົ້າຕໍ່ມາ ພວກເຂົາເຈົ້າໄດ້ເອົາສາວົກທັງສອງມາສືບສວນຕໍ່ ທີ່ສານສູງສຸດຂອງຊາວຢິວ (ແຊນຮີດຣິນ) ເປໂຕແລະໂຢຮັນຖືກໄປຢືນຢູ່ຕໍ່ຫນ້າຜູ້ມີອຳນາດສູງສຸດໃນປະເທດ (ກິຈການ 4:6-7) ແລະໄດ້ຖາມວ່າ "ທ່ານທັງສອງໄດ້ເຮັດການນີ້ໂດຍຣິດເດດອັນໃດຫລືນາມອັນໃດ?" ເປໂຕທີ່ເຕັມໄປດ້ວຍພຣະວິນຍານບໍຣິສຸດຈຶ່ງຕອບຄຳຖາມ "ໂດຍພຣະນາມຂອງພຣະເຢຊູຄຣິດໄທນາຊາເຣັດ ທີ່ທ່ານທັງຫລາຍໄດ້ຕອກຄຶງໄວ້ທີ່ໄມ້ກາງແຂນ ທີ່ພຣະເຈົ້າໄດ້ຊົງບັນດານໃຫ້ຄືນພຣະຊົນ ດ້ວຍພຣະອົງນີ້ແຫລະຄົນຜູ້ນີ້ຈຶ່ງດີເປັນປົກກະຕິຢືນຢູ່ຕໍ່ຫນ້າພວກທ່ານ" (ກິຈການ 4:10) ເປໂຕໄດ້ຊີ້ມືໃສ່ຊາຍງ່ອຍທີ່ເຄີຍຂໍທານຕາມບໍຣິເວນພຣະວິຫານ.

ເປໂຕໄດ້ສວຍໂອກາດນີ້ປະກາດເຣື່ອງການຄືນມາຈາກຕາຍຂອງພຣະເຢຊູໃຫ້ເຈົ້ານາຍຊັ້ນຂຸນນາງໄດ້ຟັງ ແລະຍັງບອກອີກວ່າ "ທີ່ທ່ານທັງຫລາຍໄດ້ຕອກຄຶງໄວ້ທີ່ໄມ້ກາງແຂນ" ທີ່ໄດ້ກ່າວໄວ້ໃນມັດທາຍ 21:42 ເປໂຕໄດ້ກ່າວຕໍ່ໄປອີກວ່າ "ໃນຜູ້ອື່ນຄວາມລອດພົ້ນບໍ່ມີ" ເຮົາລອງຄຶດເບິ່ງວ່າເປັນຫຍັງຈຶ່ງບໍ່ມີ ເພາະໂລກນີ້ຍັງມີຫລາຍສາສນາ ແລະທຸກສາສນາຄົນເຮົາກໍວ່າດີຫມົດແທ້. ເປໂຕກ່າວຕໍ່ "ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອເຮົາທັງຫລາຍຕ້ອງໄດ້ພົ້ນ" (ກິຈການ 4:12)

ພວກປະໂລຫິດ, ພວກທະຫານຍາມພຣະວິຫານ ແລະພວກຊາດູກາຍ ຕລອດທັງຝູງເຈົ້ານາຍໃນສານສູງສຸດທີ່ເຄີຍຕັດສິນພຣະເຢຊູມາກ່ອນກໍງຶດງໍ້ປະຫລາດໃຈໃນຄຳຕອບຂອງສາວົກເປໂຕຜູ້ຂາດການສຶກສາແລະຍັງເປັນຄົນສາມັນອີກດ້ວຍ.

<u>ຫມາກຜົນຂອງຄວາມເຊື່ອໄວ້ວາງໃຈ</u> ກິຈການ 4:14-20

ຊາຍງ່ອຍຂໍທານໃນເມື່ອກ່ອນກໍໄດ້ຢືນຢູ່ທີ່ນັ້ນເປັນຫລັກຖານພຍານແກ່ສາວົກທັງສອງ. ສະນັ້ນການເທສນາຂອງເປໂຕແລະໂຢຮັນເຣື່ອງຣິດອຳນາດແລະການຄືນມາຈາກຕາຍຂອງພຣະເຢຊູກໍມີຫລັກຖານໃຫ້ເຫັນກັບຕາແທ້, ໃຜໆກໍເຄີຍເຫັນຊາຍງ່ອຍຄົນນີ້ມາຂໍທານໃນບໍຣິເວນພຣະວິຫານຕລອດ 40ປີ ທີ່ຜ່ານມາ. ເມື່ອຫລັກຖານມີເຊັ່ນນີ້ເຂົາກໍບໍ່ສາມາດປະຕິເສດຄວາມຈິງແລະກໍບໍ່ສາມາດຈັບຄວາມຜິດສາວົກໄດ້. ດັ່ງນັ້ນພວກເຂົາຈຶ່ງຕົກລົງກັນປ່ອຍທ່ານທັງສອງໄປແລະກໍຫ້າມບໍ່ໃຫ້ເວົ້າເຣື່ອງນີ້ຕໍ່ໄປ.

ສາວົກຈຶ່ງຕອບດ້ວຍຄວາມເຊື່ອ "ທີ່ຈະຟັງຄຳຂອງພວກທ່ານຫລາຍກວ່າຈະຟັງຄຳຂອງພຣະເຈົ້າ ຈະເປັນການຊອບຕໍ່ພຣະພັກພຣະເຈົ້າຫລື ຂໍໃຫ້ພວກທ່ານພິຈາຣະນາເບິ່ງ" (ກິຈການ 4:19) ມັນເປັນໄປບໍ່ໄດ້ທີ່ຈະໃຫ້ຄຣິສ

ຕຽນເຊົາເວົ້າເຣື່ອງທີ່ຮູ້ແລ້ວ.  ໂປໂລໄດ້ກ່າວ "ໃຜຈະໃຫ້ພວກເຮົາຂາດຈາກຄວາມຮັກຂອງພຣະຄຣິດໄດ້ ຈະເປັນຄວາມທຸກຍາກລຳບາກ, ຫລືຄວາມທໍຣະມານຈິດໃຈ, ຫລືການຂົ່ມເຫງ, ຫລືການອຶດຢາກ, ຫລືການເປືອຍກາຍ, ຫລືຖືກໂພຍພັຍ, ຫລືການຖືກຄົມດາບຫລື" (ໂຣມ 8:35).  ສາວົກທັງສອງຖືກປ່ອຍໄປໂດຍບໍ່ມີໂທດອັນໃດເລີຍ. ການໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າຂອງສາວົກເຮັດໃຫ້ຫລາຍຄົນໄດ້ກັບໃຈເຊື່ອພຣະເຈົ້າ

ລາງເທື່ອເຮົາຢ້ານໃນການເປັນພຍານຝ່າຍພຣະເຢຊູຄຣິດ, ຢ້ານວ່າຜູ້ຟັງບໍ່ຢາກຟັງ, ຜູ້ຟັງບໍ່ຍອມຮັບ? ບາງເທື່ອຈົນບໍ່ຮູ້ຈັກວ່າຈະເວົ້າຫຍັງເລີຍ. ຢ່າຢ້ານໃນສິ່ງເຫລົ່ານີ້ເລີຍເພາະວ່າເວລາທ່ານອອກໄປເປັນພຍານນັ້ນທ່ານກໍໄປໃນພຣະນາມຂອງພຣະເຢຊູຄຣິດແທ້ ດັ່ງນັ້ນຄົນທີ່ປະຕິເສດນັ້ນບໍ່ແມ່ນເພິ່ນປະຕິເສດທ່ານດອກ ແມ່ນເພິ່ນໄດ້ປະຕິເສດພຣະເຢຊູຄຣິດ.  ສິ່ງສຳຄັນຄືທ່ານຢ່າຄຽດຫລືກຽດຊັງເພິ່ນແລະຢ່າຍອມແພ້ງ່າຍໆ.ໃນເມື່ອທ່ານຖືກຕໍ່ສູ້ກໍຢ່າທໍ້ໃຈ ຂໍໃຫ້ອ້ອນວອນທູນຂໍແລ້ວພຣະອົງຈະປະທານຄວາມອົດທົນແກ່ທ່ານ.

<u>ຄຳຖາມ</u>

- ແມ່ນຫຍັງຕໍ່ສູ້ກັບຄຣິສຕຽນໃນອະເມຣິກາທຸກວັນນີ້?  ແລະໃນຊີວິດຂອງທ່ານເດ?
- ສາວົກທັງສອງຖືກຈັບເຂົ້າຄຸກວັນນັ້ນມີຫຍັງເກີດຂຶ້ນ? ຫາກທ່ານເປັນສາວົກວັນນັ້ນຈະເຮັດແນວໃດ? ຫາກວັນນີ້ທ່ານຖືກຈັບແລະຖືກຂູ່ເຂັນຄືສາວົກທັງສອງທ່ານຈະຕັ້ງຫມັ້ນຄົງໃນຄວາມເຊື່ອຢ່າງໃດ?
- ເປັນຫຍັງເປໂຕຈຶ່ງມີໃຈກ້າເວົ້າກັບເຈົ້ານາຍຊັ້ນຂຸນນາງແນວນັ້ນ? ເປໂຕມີຄວາມຮູ້ຂັ້ນໃດ?
- ການຮູ້ຈັກພຣະທັມພຣະເຈົ້າດີຫຍັງໃນເວລາອັດຕະຄັດເຊັ່ນນັ້ນ (ເພງສັຣເສີນ 118:22)
- ທ່ານໄດ້ຮຽນຫຍັງຈາກທ່ານເປໂຕແລະໂຢຮັນແດ່?

## ບົດຮຽນທີ 5

## ແບ່ງປັນຂ່າວປະເສີດກັບຄົນທີ່ແຕກຕ່າງກັບເຮົາ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 8:4-8; 25-38
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 8
ຈຸດສຳຄັນຂອງບົດຮຽນນີ້: ຟີລິບປະກາດຂ່າວປະເສີດກັບຊາວຊາມາເຣັຽ ແລະຊາວເອທີໂອເປັຽຄົນນຶ່ງ; ຊຶ່ງຕາມປະເພນີແລ້ວ ຊາວຢິວຈະບໍ່ຍອມຮັບຮູ້ຄົນພວກນີ້.

ຄຳຖາມເພື່ອການສຳຣວດ: ທ່ານພ້ອມແລ້ວບໍ່ທີ່ຈະໄປປະກາດກັບຄົນທັງຫຼາຍທີ່ປະເພນີຂອງທ່ານຖືວ່າເປັນຜູ້ທີ່ແຕກຕ່າງກັບທ່ານແລະບໍ່ສົມຄວນຈະຮັບໄວ້ໄດ້.

ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍເຖິງອຸປສັກທີ່ທ່ານແລະຄຣິສຕະຈັກຂອງທ່ານຈະຕ້ອງຜ່ານຂ້າມເພື່ອໄປແບ່ງປັນຂ່າວປະເສີດກັບຄົນທັງຫຼາຍ ຕາມປົກຕິແລ້ວເຫັນວ່າແຕກຕ່າງກັບທ່ານແລະບໍ່ສົມຄວນຈະຮັບໄວ້ໄດ້.

ເຣື່ອງທີ່ກຳລັງເນັ້ນກັນໃນເທັກຊັດ:

. ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດ ກັບທຸກຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຈັດຕຽມຄຣິສຕຽນເພື່ອການຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເປີດຄຣິສຕະຈັກໃຫມ່

### ຄຳນຳ

ຖ້າເຮົາມີຄວາມຮັກຕໍ່ຄົນທົ່ວໆໄປ ຄວາມແຕກຕ່າງກັນດ້ານຜິວພັນ, ພາສາ, ແລະປະເພນີຈະບໍ່ສາມາດກີດກັ້ນເຮົາບໍ່ໃຫ້ໄປປະກາດຂ່າວປະເສີດກັບພວກເຂົາໄດ້. ຄຣິສຕຽນບໍ່ສາມາດຈະເລືອກເອງວ່າ ເຂົາຈະໄປຮັບໃຊ້ຢູ່ບ່ອນໃດ ຫຼື ຈະໄປປະກາດກັບໃຜ; ພຣະເຈົ້າເທົ່ານັ້ນທີ່ເປັນຜູ້ມີສິດໃນການທີ່ຈະສົ່ງພະນັກງານອອກໄປຕາມບ່ອນທີ່ພຣະອົງຊົງຈັດຕຽມໄວ້ກ່ອນແລ້ວ. ຖ້າເຮົາປ່ອຍໃຫ້ພຣະຜູ້ເປັນເຈົ້ານຳພາຊີວິດເຮົາ ຄວາມຄິດແບບແບ່ງແຍກໃນຕົວເຮົາຈະປຣັບແປງເອງ; ສິ່ງທີ່ເຄີຍຢ້ານກໍຈະກາຍເປັນຂອງທັມມະດາ. ຄົນທີ່ເຮົາເຄີຍພຍາຍາມຫຼີກເວັ້ນຈະກາຍເປັນຜູ້ທີ່ເຮົາສແວງຫາ. ບົດຮຽນຕໍ່ໄປນີ້ຈະເປັນຕົວຢ່າງແລະບົດຮຽນໃນການໄປປະກາດກັບຄົນທີ່ແຕກຕ່າງກັບພວກເຮົາ.

ຈາກຊາວຢິວໄປສູ່ຊາວຊາມາເຣັຽ (8:4-8)

ການຂົ່ມເຫັງຄຣິສຕະຈັກທີ່ກຸງເຢຣູຊາເລັມ ເຮັດໃຫ້ພວກອັຄສາວົກ ແລະພວກສິດທັງຫຼາຍ ພາກັນແຕກກະຈາຍໄປທົ່ວແຂວງຢູດາຍແລະແຂວງຊາມາເຣັຽ. ສັດຕູຂອງພຣະເຢຊູພຍາຍາມທີ່ຈະທໍາລາຍຄຣິສຕະຈັກຂອງພຣະອົງ ໂດຍການຈັບກຸມຄຣິສຕຽນ; ເຂົາສ້າງຄວາມຢ້ານກົວໃຫ້ກັບພວກລູກສິດທັງຫລາຍ. ແຜນການຂອງສັດຕູຄືການສ້າງຄວາມແຕກຕື່ນ ແລ້ວໃຫ້ແຕ່ລະຄົນແຕກຫນີຈາກເຢຣູຊາເລັມ ແລະໃຫ້ເຫລືອແຕ່ພຽງພວກອັກຄະສາວົກໄວ້ໃນຕົວເມືອງ (8:1). ການຕາຍຂອງຊະເຕຟາໂນເຮັດໃຫ້ຄຣິສຕະຈັກຂອງພຣະຄຣິດຕ້ອງສູນເສັຽຄໍາພະຍານທີ່ກ້າຫານຜູ້ນຶ່ງ. ແຕ່ພຣະເຈົ້າຊົງເລືອກຟີລິບຂຶ້ນມາແທນໃນການປະກາດ. ນອກນັ້ນອາດຈະມີຜູ້ດູແລຄົນອື່ນໆທີ່ໄດ້ຫນີຈາກກຸງເຢຣູຊາເລັມ, ແຕ່ພຣະຄັມພີໄດ້ບັນທຶກແຕ່ການທໍາງານຂອງຜູ້ດູແລຊື່ ຟີລິບ ເທົ່ານັ້ນ.

ຟີລິບໄດ້ລົງໄປຍັງເມືອງນຶ່ງທີ່ແຂວງຊາມາເຣັຽ ແລະເລີ້ມປະກາດ ເຣື່ອງພຣະຄຣິດໃຫ້ໄທເມືອງນັ້ນຟັງ. ຕາມປະເພນີແລ້ວແຂວງຊາມາເຣັຽ ເປັນບ່ອນທີ່ຄົນຢິວພຍາຍາມຫຼີກໃຫ້ໄກ ເພາະຊາວຢິວ ຖືວ່າ ຊາວຊາມາເຣັຽເປັນຄົນທີ່ບໍ່ເຫມາະສົມແລະເປັນຊົນຊາດທີ່ຊາວຢິວບໍ່ຄວນຄົບຄ້າສະມາຄົມດ້ວຍ;ເພາະເຂົາເປັນຊົນຊາດປະສົມ,ເປັນຊົນ ຊາດທີ່ບໍ່ບໍຣິສຸດ. ຄົນຢິວທີ່ດີຈະບໍ່ຄົບຄ້າສະມາຄົມກັບຄົນຊາວຊາມາເຣັຽ. ທ່ານອາດຈະຈໍາໄດ້ວ່າ ພຣະເຢຊູເອງເຄີຍໄປແຂວງຊາມາເຣັຽ (ໂຢຮັນ 4). ພຣະອົງຕ້ອງຜ່ານອຸປສັກດ້ານປະເພນີ ເພື່ອຈະປະກາດກັບຊາວຊາມາເຣັຽ. ທ່ານຄົງຈໍາໄດ້ວ່າ ບໍ່ແມ່ນແຕ່ພຽງຍິງຊາວຊາມາເຣັຽເທົ່ານັ້ນທີ່ມາເຊື່ອ ແຕ່ຄົນທັງເມືອງພາກັນອອກມາຫາພຣະອົງ. ຊາວຊາມາເຣັຽຫຼາຍຄົນໄດ້ກັບໃຈມາເຊື່ອໃນພຣະເຈົ້າແລະໃນອົງພຣະເຢຊູຄຣິດ.

<u>ຟີລິບແມ່ນຜູ້ໃດ?</u>

ຟີລິບເປັນຜູ້ດູແລຄົນນຶ່ງຂອງຄິສຕະຈັກໃນກຸງເຢຣູຊາເລັມ. ເຂົາເປັນຜູ້ທີ່ມີຊື່ສຽງດີ ຈຶ່ງໄດ້ຮັບການສະຖາປະນາໃຫ້ເປັນມັກຄະນາຍົກໃນຄຣິສຕະຈັກ. ຟີລິບເປັນຄົນທີ່ເຕັມໄປດ້ວຍຄວາມເຊື່ອ ແລະ ເຕັມດ້ວຍພຣະວິນຍານບໍຣິສຸດ (ກິຈການ 6: 1-7). ຫຼັງຈາກ ຊະເຕຟາໂນ ຖືກຈັບ ແລະ ຖືກປະຫານຊີວິດ. ການຂົ່ມເຫງຄຣິສຕະຈັກກໍໄດ້ເພີ້ມຂຶ້ນໄປເລື້ອຍໆຈົນເຮັດໃຫ້ຄຣິສຕຽນຫຼາຍຄົນຕ້ອງແຕກຫນີອອກຈາກກຸງເຢຣູຊາເລັມ ເພື່ອໄປລີ້ພັຍຢູ່ເມືອງຕ່າງໆ.

ຟີລິບໄດ້ເຮັດຕາມສິ່ງທີ່ພຣະເຈົ້າຊົງນໍາພາເຂົາ ເຖິງຈະເປັນການຝືນຕໍ່ປະເພນີທີ່ເຄີຍກະທໍາກັນມາ; ພຣະເຈົ້າໄດ້ສະແດງສິ່ງອັດສະຈັນຫຼາຍໆຢ່າງຜ່ານຟີລິບ(ກິຈການ 8:7-8).ຊາວຊາມາເຣັຽພາກັນຕ້ອນຮັບພຣະທັມຂອງພຣະເຈົ້າດ້ວຍຄວາມຊົມຊື່ນຍິນດີ. ຫລາຍຄົນໄດ້ຍອມຮັບເອົາພຣະເຢຊູເປັນພຣະເຈົ້າຂອງເຂົາ. ຄົນທີ່ຖືກຜີສິງກໍໄດ້ດີເປັນປົກກະຕິ; ຄົນຂາເສັ້ງກໍໄດ້ດີເປັນປົກກະຕິ; ຄົນໃນເຂດນັ້ນເກີດມີຄວາມຊົມຊື່ນຍິນດີເພາະໄດ້ຍິນພຣະທັມຂອງ ພຣະເຈົ້າ. ການ ປະກາດຂອງຟີລິບໄດ້ຜົນດີເພາະພຣະເຈົ້າຊົງຕຽມຄົນໄວ້ລ່ວງຫນ້າກ່ອນພຣະອົງຈະສົ່ງພະນັກງານອອກໄປ. ທຸກຄັ້ງທີ່ພວກເຮົາເຮັດຕາມການນໍາພາຂອງພຣະເຈົ້າອຸປສັກຕ່າງໆ ຈະບໍ່ສາມາດເອົາຊະນະ ພຣະທັມຂອງພຣະເຈົ້າ ໄດ້. ພຣະເຈົ້າຍັງຊົງກະທໍາເຊັ່ນນີ້ຢູ່ໃນປັດຈຸບັນ; ພວກເຮົາຄວນຕິດຕາມຕົວຢ່າງທີ່ຟີລິບ ໄດ້ເຮັດໄວ້. ໃຫ້ພວກເຮົາອອກໄປປະກາດກັບຄົນທົ່ວໄປ ໂດຍບໍ່ເລືອກຊັ້ນວັນນະ ແລະຜິວພັນ. ຖ້າເຮົາຍອມເຮັດ ຕາມທີ່ພຣະເຈົ້າຊົງນໍາພາ, ພຣະອົງຈະເຮັດໃຫ້ອຸປສັກເຫລົ່ານັ້ນກາຍມາເປັນພຣະພອນ.

ຈາກຊາວຊາມາເຣັຽໄປສູ່ຊາວເອທິໂອເປັຽຜູ້ນຶ່ງ (8:25-38)

ອຸປສັກຈະກາຍມາເປັນພຣະພອນໄດ້ໃນເມື່ອເຮົາປະຕິບັດຕາມການນຳພາຂອງພຣະເຈົ້າ ແລະອາສັຍພະລັງຂອງພຣະວິນຍານບໍຣິສຸດ. ໃນພຣະທັມກິຈການ 8:26, ເຮົາໄດ້ເຫັນພຣະເຈົ້າຊົງຈັດຕຽມການພົບກັນລະຫວ່າງ ຟີລິບ ແລະຊາວເອທິໂອເປັຽຜູ້ນຶ່ງໂດຍໃຊ້ເທວະດາເປັນຜູ້ມາບອກຂ່າວ. ພຣະເຈົ້າສາມາດໃຊ້ຫລາຍໆຢ່າງເພື່ອຊ່ວຍໃນວຽກງານຂອງພຣະອົງ. ພຣະເຈົ້າສາມາດໂຜດທຸກຄົນໃຫ້ພົ້ນໄດ້; ຈະເປັນຊາຍຫຼື ຍິງ, ຈະມີຜິວຂາວ ຫຼື ຜິວດຳ, ຈະລ້ຳລວຍ ຫຼື ຍາກຈົນ ທຸກໆຄົນຈະຕ້ອງມາຫາພຣະຜູ້ໂຜດໂດຍຜ່ານໄມ້ກາງແຂນດ້ວຍກັນທັງຫມົດ.

ລູກາ, ຊຶ່ງເປັນຜູ້ຂຽນພຣະຄັມພີ ກິຈການ, ໄດ້ບອກເຮົາວ່າ ຊາວເອທິໂອເປັຽຜູ້ນີ້ ໄດ້ໄປທີ່ກຸງເຢຣູຊາເລັມເພື່ອນະມັສການ. ທ່ານຜູ້ນີ້ອາດຈະໄປສແວງຫາຄວາມລອດພົ້ນ; ແລະລູກາບອກຕໍ່ໄປວ່າ ລາວກຳລັງອ່ານຫນັງສືເອຊາຢາຜູ້ປະກາດພຣະທັມຢູ່ຕອນຟີລິບມາພົບລາວ. ທ່ານຜູ້ທີ່ອາດຈະກຳລັງຊອກຫາຄຳຕອບກັບບັນຫາຕ່າງໆໃນຊີວິດ. ແຕ່ລະຄົນທີ່ອ່ານພຣະຄັມພີກໍມີເຈຕນາຕ່າງໆກັນ; ບາງຄົນອ່ານເພື່ອສແວງຫາຄວາມຮູ້, ບາງຄົນອ່ານເພື່ອຈະໄດ້ຕຳນິຕິຕຽນ, ແລະບາງຄົນກໍອ່ານເພື່ອເປັນການພັກຜ່ອນ. ແຕ່ເຮົາຮູ້ໄດ້ວ່າຊາວເອທິໂອເປັຽຄົນນີ້ອ່ານພຣະຄັມພີເພື່ອສແວງຫາຄວາມຈິງກ່ຽວກັບຄວາມລອດພົ້ນ.

ພຣະເຈົ້າສົ່ງ ຟີລິບໄປພົບ ຂ້າຣາຊການສັ້ນສູງຊາວເອທິໂອເປັຽຜູ້ນີ້ ບໍ່ແມ່ນເພື່ອຈະໄດ້ໂຕ້ຖຽງເຣື່ອງວຽກງານຂອງຕົນໃນເຂດ ຊາມາເຣັຽ ແຕ່ແມ່ນໃຫ້ຟີລິບໄປຊ່ວຍຊາຍຄົນນີ້ໂດຍສະເພາະ.ພຣະເຈົ້າຍັງໂຜດມະນຸດເທື່ອລະຄົນໆໄປ; ພຣະອົງສາມາດໂຜດຄົນທີ່ກຳລັງເດີນທາງໃນທະເລຊາຍ, ພຣະອົງສາມາດໂຜດຄົນຢູ່ໃນບ້ານ ແລະໃນທີ່ທຳງານ. ພຣະວິນຍານບໍຣິສຸດຂອງພຣະເຈົ້າເປັນຜູ້ບອກ ຟີລິບເປັນຂັ້ນໆໄປໃນການເປັນພະຍານຂອງເຂົາຄັ້ງນີ້ (8:29). ພຣະອົງສັ່ງໃຫ້ຟີລິບແລ່ນເຂົ້າໄປໄກ້ໆຈົນຟີລິບໄດ້ຍິນສຽງເພິ່ນອ່ານຫນັງສື ເອຊາຍາ. ຊາວເອທິໂອເປັຽຄົນນີ້ ກຳລັງອ່ານພຣະທັມເອຊາຢາ ບົດທີ 53. ພຣະເຈົ້າໃຊ້ຟີລິບໃຫ້ເປັນຄົນບັນລະຍາຍພຣະທັມ ແລະເປັນຜູ້ແນະນຳເຣື່ອງຄວາມລອດພົ້ນ. ທ້າຍສຸດຟີລິບໄດ້ແນະນຳເຂົາເຣື່ອງການບັບຕິສະມາຂອງຜູ້ທີ່ມີຄວາມເຊື່ອ.

ການບັບຕິສະມາບໍ່ໄດ້ຊ່ວຍໃຫ້ຄົນລອດພົ້ນ; ການບັບຕິສະມາຊ່ວຍໃຫ້ຄົນທີ່ເຊື່ອແລ້ວກາຍເປັນຜູ້ເຊື່ອຟັງ ແລະໃຫ້ເຂົາໄດ້ເຂົ້າເປັນສະມາຊິກໃນຄຣິສຕະຈັກຂອງພຣະເຈົ້າ. ການບັບຕິສະມາມີຄວາມສຳຄັນໃນພຣະສັນຍາໃຫມ່ເພາະມັນເປັນພຣະບັນຊາຂອງພຣະເຢຊູສຳລັບຄຣິສຕະຈັກ. ການບັບຕິສະມາມີຄວາມຫມາຍ 3 ຢ່າງ: 1. ການຝັງມະນຸດຜູ້ເກົ່າຊຶ່ງເຕັມໄປດ້ວຍຄວາມຜິດບາບ, 2. ການກັບຄືນມີຊີວິດໃຫມ່ເຫມືອນດັ່ງພຣະເຢຊູໄດ້ກັບຄືນ ຈາກຄວາມຕາຍ, 3. ການມີຄວາມຫວັງໃຫມ່ໃນຊີວິດນິຣັນ ແລະໃນການຈະກັບມາເທື່ອທີສອງຂອງພຣະຄຣິດ.

ການບັບຕິສະມາຈະຕ້ອງເຮັດຫຼັງຈາກການຍອມຮັບວ່າມີຄວາມຜິດບາບ, ຫຼັງຈາກການຍອມຖິ້ມໃຈເກົ່າ, ແລະຫຼັງຈາກການສາຣະພາບຍອມຮັບເອົາພຣະເຢຊູມາເປັນພຣະເຈົ້າໃນຊີວິດຂອງຜູ້ເຊື່ອ. ເຮົາໄດ້ຮັບຄວາມລອດບໍ່ແມ່ນຈາກການບັບຕິສະມາ; ການບັບຕິສະມາສະແດງເຖິງການເຊື່ອຟັງຂອງຜູ້ທີ່ເຊື່ອແລ້ວ. ການບັບຕິສະມາເປັນ ບາດກ້າວໄປສູ່ການເປັນສາວົກ ແລະການເປັນສະມາຊິກຖາວອນໃນຄຣິສຕະຈັກ. ຟີລິບໄດ້ນຳ ຊາວເອ

ທີ ໂອເປັຽ ຄົນນັ້ນໃຫ້ຮັບພຣະເຢຊູ ມາເປັນພຣະເຈົ້າຂອງເຂົາ ພ້ອມດຽວກັນຟີລິບໄດ້ສັ່ງສອນເຂົາເຣື່ອງການບັບຕິສະມາ. ທ່ານຄົນນັ້ນຈຶ່ງໄດ້ຂໍໃຫ້ຟີລິບທໍາພິທີບັບຕິສະມາໃຫ້.

<u>ບັບຕິດຈະຜ່ານຂ້າມອຸປສັກໃນເທັກຊັດບໍ່?</u>

ເທັກຊັດມີຄົນທີ່ມາຈາກຫຼາຍຊົນຊາດຊົນເຜົ່າອາສັຍຢູ່. ປະຊາຊົນແຕ່ລະກຸ່ມມີຈໍານວນເພີ້ມຂື້ນທຸກໆວັນ. ແມ່ນໃຜຈະເປັນຜູ້ອອກໄປປະກາດຂ່າວປະເສີດກັບຄົນເຫລົ່ານີ້ຊຶ່ງມີພາສາ ແລະວັດທະນະທັມແຕກຕ່າງກັນ. ຄຣິສຕຽນແຕ່ລະຄົນ ແລະ ຄຣິສຕະຈັກແຕ່ລະແຫ່ງຈະຕ້ອງຕອບຄໍາຖາມນີ້ເອງ. ພວກເຮົາຈະພາກັນຜ່ານຂ້າມອຸປສັກເຣື່ອງພາສາ ແລະ ຄະນົບທໍານຽມນີ້ບໍ່? ແນ່ນອນເຮົາຈະຕ້ອງຜ່ານຂ້າມອຸປສັກທຸກໆຢ່າງເພື່ອໄປປະກາດ.

<u>ຄໍາຖາມ</u>

1. ແມ່ນຫຍັງເຮັດໃຫ້ການປະກາດຂອງຟີລິບ ກັບຄົນຕ່າງຊາດໄດ້ຜົນສໍາເຣັດ?
2. ທ່ານກໍາລັງມີການຮັບໃຊ້ກັບຄົນທີ່ບໍ່ແມ່ນເຊື້ອຊາດແລະພາສາຂອງທ່ານບໍ່?
3. ທ່ານກໍາລັງຮັບໃຊ້ກັບຄົນເຜົ່າໃດ?
4. ທ່ານເຄີຍມີປະສົບການເຣື່ອງການປະກາດກັບຄົນເຜົ່າພັນອື່ນໆບໍ່?
5. ທ່ານຄິດຢາກຈະໄປເປັນ ສາສນາທູດ ໃນຕ່າງປະເທດບໍ່? ຖ້າທ່ານເຄີຍຄິດ, ດຽວນີ້ທ່ານກໍາລັງຮັບໃຊ້ແນວໃດແດ່ໃນຄຣິສຕະຈັກຂອງທ່ານ?

## ບົດຮຽນທີ 6

## ເລືອກໄວ້ເພື່ອນຳຂ່າວເຣື່ອງຂອງພຣະເຈົ້າ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 9 :1-22, 26-29
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 9: 1-31
ຈຸດສຳຄັນຂອງບົດຮຽນນີ້: ຫລັງຈາກໂປໂລຫລົບຕັ້ງໃຈໃຫມ່ພຣະເຈົ້າໄດ້ເລືອກລາວ ໄວ້ເພື່ອເປັນພາຊະນະເພື່ອ ຈະນຳຂ່າວປະເສີດໄປຍັງບັນດາປະຊາຊາດ ແລະໄປຍັງຊາວອິສຣາເອັນ
ຄຳຖາມເພື່ອການສຳຣວດ: ພຣະເຈົ້າໄດ້ເລືອກທ່ານໄວ້ເຮັດຫຍັງແດ່ ຫລັງຈາກທ່ານໄດ້ກັບໃຈມາເຊື່ອ?
ຈຸດປະສົງຂອງບົດຮຽນນີ້: ແບ່ງປັນສິ່ງທີ່ພຣະເຈົ້າໄດ້ເລືອກທ່ານໄວ້ເຮັດ ຫລັງຈາກທີ່ທ່ານໄດ້ກັບໃຈເຊື່ອໃນອົງ ພຣະເຢຊູຄຣິດເຈົ້າ.

| ເຣື່ອງທີ່ກຳລັງເນັ້ນກັນໃນເທັກຊັດ: |
|---|
| . ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດ ກັບທຸກຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ |
| . ຮັບໃຊ້ເພື່ອນມະນຸດທັງຫລາຍໃນພຣະນາມຂອງພຣະຄຣິດ |
| . ຈັດຕຽມຄຣິສຕຽນເພື່ອການຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ |
| . ຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເປີດຄຣິສຕະຈັກໃຫມ່ |

### ຄຳນຳ

ພຣະເຈົ້າຊົງເລືອກພວກເຮົາໄວ້ເພື່ອເປັນພະຍານເຣື່ອງຣິດອຳນາດຂອງພຣະອົງກຽ່ວກັບຄວາມລອດພົ້ນໃຫ້ກັບຄົນທັງຫລາຍໃນຣັຖເທັກຊັດແລະໄປເຖິງທີ່ສຸດປາຍຂອງໂລກ.ທ່ານໄດ້ເຮັດຫຍັງແດ່ເພື່ອໃຫ້ພາຣະກິດເຫລົ່ານັ້ນໄດ້ ພົບກັບຄວາມສຳເຣັດ? ພຣະເຈົ້າບໍ່ໄດ້ເອີ້ນທ່ານໃຫ້ເປັນຄົນເຫັນແກ່ຕົວ ແຕ່ໃຫ້ໄປຮັບໃຊ້ຄົນອື່ນ ເພື່ອຈະໄດ້ນຳ ເຂົາມາຫາພຣະເຢຊູ. ມີຄົນຫລາຍລ້ານຄົນໃນເທັກຊັດທີ່ຍັງບໍ່ຮູ້ພຣະເຈົ້າ; ແລະຈຳນວນນີ້ກໍເພີ້ມທະວີຂື້ນທຸກໆປີ. ທ່ານອາດຈະບໍ່ເປັນຜູ້ທຳລາຍຄຣິສຕະຈັກເຫມືອນໂຊໂລ, ແຕ່ທ່ານໄດ້ນຳຄົນມາເພີ້ມໃຫ້ຄຣິສຕະຈັກບໍ່?

ການກັບໃຈຂອງໂຊໂລ ໄທເມືອງຕາໂຊ(9:1-9)
ໂຊໂລໄດ້ເຮັດການຮ້າຍຂາດກັບໄພ່ພົນຂອງພຣະເຈົ້າ; ເຂົາຂູ່ເຂັນ ແລະຈັບຄຣິສຕຽນໄປຂັງຄຸກ; ເຂົາມີຄວາມຕັ້ງໃຈທີ່ຈະທຳລາຍຄຣິສຕະຈັກຂອງພຣະເຢຊູຄຣິດ. ໂຊໂລ ຄົນນີ້ແມ່ນໃຜກັນແທ້? ໂຊໂລ ເກີດທີ່ເມືອງຕາໂຊຢູ່ໃນ ແຂວງ ສີລີເສັຍ ຊຶ່ງເປັນເມືອງຂື້ນຂອງ ໂຣມ. ໂຊໂລ ຫລື ໂປໂລ ເປັນຄົນສັນຊາດໂຣມ ແຕ່ເຂົາເກີດຈາກພໍ່ແມ່ ຄົນຊາດຢິວ. ໂຊໂລໄດ້ຮັບການອົບຮົມເຣື່ອງພຣະສັນຍາເດີມ ແລະເປັນຄົນເຂັ່ງຄັດໃນການປະຕິບັດຕາມປະເພນີ ແລະຕາມພຣະບັນຍັດ. ທ່ານໄດ້ພົບກັບ ໂປໂລ ຕອນ ຊະເຕຟາໂນ ຖືກປະຫານຊີວິດ (ກິຈການ 8:1). ການຂົ່ມເຫງຄຣິສຕະຈັກຂອງໂປໂລອາດຈະເກີດຂື້ນຫລັງຈາກທີ່ເຂົາໄດ້ຍິນຄຳເທສນາຂອງຊະເຕຟາໂນ. ເຂົາມີຈຸດປະສົງທີ່ຈະທຳລາຍຄຣິສຕະຈັກຂອງພຣະເຈົ້າ.
ໂປໂລ ໄດ້ພົບພຣະເຢຊູຄຣິດໃນຂະນະທີ່ເຂົາກຳລັງເດີນທາງໄປເມືອງດາມາເຊ ເພື່ອຈະຈັບມັດຄຣິສຕຽນແລ້ວນຳພວກເຂົາມາຍັງກຸງເຢຣູຊາເລັມ. ທ່ານສາມາດອ່ານລາຍລະອຽດຕ່າງໆໃນ ກິຈການ 9:3-6. ສິ່ງສຳຄັນໃນ

ຕອນນີ້ຄື : 1. ໂປໂລໄດ້ຍິນສຽງເອີ້ນຊື່ຂອງເຂົາ, 2. ໂປໂລ ຖາມຄືນວ່າ "ທ່ານແມ່ນໃຜ?, 3. ມີສຽງຕອບວ່າ "ເຮົາແມ່ນເຢຊູຜູ້ເຈົ້າຂົ່ມເຫງນັ້ນແຫລະ," 4. ໂປໂລມີດວງຮູບແລະຍອມຮັບຟັງຄຳສັ່ງ. ກິຈການ 22:10 ບອກເພີ້ມເຕີມວ່າ ໂປໂລຖາມຄືນວ່າ "ຂ້າແດ່ພຣະຜູ້ເປັນເຈົ້າ, ຂ້າພຣະອົງຈະຕ້ອງເຮັດແນວໃດ." ຫລັງຈາກທີ່ໄດ້ພົບພຣະເຢຊູ ເປັນທາງສ່ວນຕົວ ໂປໂລໄດ້ ຫລົບຕັ້ງໃຈໃຫມ່; ຈາກຜູ້ທຳລາຍຄຣິສຕະຈັກ ເຂົາໄດ້ກາຍມາເປັນຜູ້ຮັບໃຊ້ພຣະເຢຊູ.

<u>ການຖືກເອີ້ນ</u>

ຕັ້ງແຕ່ໃດໆມາພຣະເຈົ້າຊົງເອີ້ນຄົນໃຫ້ອອກມາຮັບໃຊ້ພຣະອົງ. ໃນພຣະສັນຍາເດີມ ພຣະອົງຊົງເອີ້ນຜູ້ປະກາດພຣະທັມແຕ່ລະຄົນ ແລ້ວຊົງເຜີຍແຜນການຕ່າງໆຂອງພຣະອົງສຳລັບອິສຣາເອນໃຫ້ເຂົາຮູ້. ໃນພຣະສັນຍາໃຫມ່ພຣະເຈົ້າຊົງເອີ້ນຄຣິສຕຽນທຸກໆຄົນ. ຊີວິດຄຣິສຕຽນແມ່ນຊີວິດທີ່ໄດ້ຮັບການຊົງເອີ້ນຈາກພຣະເຈົ້າ (ເອເຟໂຊ 1:18; 4:1). ຄຣິສຕຽນ ແມ່ນຜູ້ທີ່ຖືກເອີ້ນໃຫ້ເປັນຜູ້ຮັບໃຊ້. ມີບຳເນັດຫຍັງແດ່ທີ່ທ່ານຈະໄດ້? ຄວາມຊົມຊື່ນຍິນດີທີ່ໄດ້ຮັບໃຊ້ພຣະເຈົ້າ, ທີ່ໄດ້ນຳຄົນມາເຊື່ອ, ທີ່ໄດ້ຮັບໃຊ້ຄົນຍາກຈົນ. ພະນິມິດ 2:10 ບອກວ່າ ຜູ້ທີ່ສັດຊື່ສຸດຈະອິດຈະໄດ້ຮັບພວງມາລັຍແຫ່ງຊີວິດ.

ຄຣິສຕຽນຫຼາຍຄົນໄດ້ພົບພຣະເຢຊູ; ເຂົາຮູ້ວ່າພຣະອົງຄືພຣະຜູ້ເປັນເຈົ້າ ແລະພຣະຜູ້ໂຜດໃຫ້ພົ້ນ. ຄຳຖາມຕໍ່ໄປສຳລັບຄຣິສຕຽນທັງຫຼາຍຄື "ພຣະອົງຈະໃຫ້ຂ້ານ້ອຍເຮັດຫຍັງ?"

<u>ອານາເນັຽ ຊ່ວຍໂປໂລ (9: 10-19)</u>

ໃນຂະນະທີ່ໂປໂລກຳລັງເດີນທາງມາເຖິງກຸງດາມາເຊ, ພຣະຜູ້ເປັນເຈົ້າຊົງໃຫ້ນິມິດກັບ ອານາເນັຽ. ພຣະອົງໄດ້ບອກລາຍລະອຽດຕ່າງໆກັບອານາເນັຽ , ພຣະອົງສັ່ງໃຫ້ເຂົາໄປພົບ ໂປໂລ ທີ່ຖນົນຊື່ ແລະທີ່ຢູ່ເຮືອນຂອງຢູດາ. ກ່ອນອານາເນັຽ ຈະມາເຖິງຈຸດຫມາຍ ພຣະເຈົ້າໄດ້ໃຫ້ນິມິດກັບໂປໂລໃນຂະນະທີ່ເຂົາກຳລັງໄຫວ້ວອນຢູ່. ພຣະເຈົ້າໄດ້ໃຊ້ ນິມິດເພື່ອນຳພາ ອານາເນັຽ ແລະ ໂປໂລໃຫ້ພົບກັນ. 1. ພຣະເຈົ້າໃຫ້ ໂປໂລໄດ້ເຫັນພຣະອົງໃນນິມິດ, 2. ໂປໂລ ໄດ້ເຫັນ ອານາເນັຽ ໃນນິມິດ, 3. ອານາເນັຽ ໄດ້ຮູ້ເຫດການຕ່າງໆກ່ຽວກັບໂປໂລໃນນິມິດ. ນິມິດເປັນສິ່ງນຶ່ງທີ່ພຣະເຈົ້າຍັງໃຊ້ຢູ່ໃນປັດຈຸບັນເພື່ອນຳພາໄພ່ພົນຂອງພຣະອົງ.

ສິ່ງນຶ່ງທີ່ຫນ້າສົນໃຈໃນຕອນນີ້ ຄືຄຳຕອບຂອງອານາເນັຽໃນ 9:13-14; "ພຣະອົງເຈົ້າຂ້າ, ຂ້າພຣະອົງໄດ້ຍິນຫລາຍຄົນເວົ້າເຖິງເຣື່ອງຄົນນັ້ນ ວ່າເພິ່ນໄດ້ເຮັດການຮ້າຍຂາດຕໍ່ໄພ່ພົນຂອງພຣະອົງຫລາຍມາແລ້ວໃນກຸງເຢຣູຊາເລັມ . ແລະໃນທີ່ນີ້ເພິ່ນໄດ້ຖືອຳນາດມາຈາກພວກປະໂຣຫິດຕົນໃຫຽ່ ມາມັດເອົາຄົນທັງຫມົດຜູ້ຮ້ອງອອກພຣະນາມຂອງພຣະອົງ." ອານາເນັຽບໍ່ໄດ້ຄິດຈະປະຕິເສດຄຳສັ່ງຂອງພຣະເຢຊູ ແຕ່ເຂົາເວົ້າເພື່ອຢາກຫມັ້ນໃຈວ່າສິ່ງນັ້ນຄືພຣະປະສົງຂອງພຣະອົງສຳລັບເຂົາ.

ທ່ານເຄີຍຢູ່ໃນສະພາບແບບດຽວກັນກັບອານາເນັຽບໍ່?ທ່ານອາດຈະຄິດສົງສັຍ ວ່າສິ່ງທີ່ພຣະເຢຊູບອກໃຫ້ທ່ານ

ເຮັດ ມັນເປັນໄປບໍ່ໄດ້; ບາງຄັ້ງທ່ານອາດຈະຄິດສົງສັຍວ່າພຣະເຈົ້າ ຄົງຈະບໍ່ຮູ້ສະຖານະການແນ່ນອນ ພຣະອົງຈຶ່ງສັ່ງ ໃຫ້ທ່ານເຮັດສິ່ງເຫລົ່ານັ້ນ. ແຕ່ຫລັງຈາກທີ່ທ່ານຍອມເຮັດຕາມນ້ຳພຣະທັຍຂອງພຣະອົງ ແລະປ່ອຍໃຫ້ພຣະອົງ ນຳ ພາທ່ານ ທ່ານຈຶ່ງໄດ້ເຫັນທຸກຢ່າງເກີດຜົນ. ແລ້ວທ່ານກໍເກີດຄວາມເຂົ້າໃຈດີຂຶ້ນ ແລະ ຍອມຮັບວ່າພຣະອົງຊົງຮູ້ ເຫັນທຸກຢ່າງກ່ອນພຣະອົງຈະບອກໃຫ້ທ່ານເຮັດສິ່ງຕ່າງໆເຫລົ່ານັ້ນ.

ພຣະເຢຊູຊົງເລືອກເອົາ ໂປໂລມາເປັນພາຊະນະເພື່ອໄປປະກາດຂ່າວປະເສີດກັບບັນດາປະຊາຊາດ, ກັບກະສັດ ທັງຫລາຍ, ແລະກັບຊາວຢິວ. ພຣະເຈົ້າຍັງໄດ້ໃຊ້ໂປໂລໃຫ້ນຳພຣະນາມຂອງພຣະອົງໄປເຖິງ ເຟລີກຜູ້ປົກຄອງ ແລະ ກະສັດອາຄຣີປາ. ເນື່ອງຈາກວ່າໂປໂລ ມີຄວາມຄຸ້ນເຄີຍກັບປະເພນີຂອງຊາວຢິວດີ ແລະພ້ອມດຽວກັນເຂົາ ກໍມີການສຶກສາດີ, ພຣະເຈົ້າຊົງໃຊ້ເຂົາໃຫ້ໄປປະກາດກັບຄົນທຸກປະເພດໄດ້. ໂປໂລສາມາດປະກາດຕາມໂຮງ ທັມ; ເຂົາສາມາດປະກາດຕໍ່ຫນ້າສານສູງ. ໂປໂລໄດ້ທົນທຸກລຳບາກຫລາຍຢ່າງເພາະພຣະນາມຂອງພຣະເຢຊູ ຄຣິດ. ແຕ່ໂປໂລບໍ່ໄດ້ອວດອ້າງ;ເຂົາເປັນພະຍານຢູ່ໃນ 2 ໂກຣິນໂທ 11:30 ວ່າ "ຖ້າເຮົາຈຳເປັນຕ້ອງອວດຕົວ ກ່ຽວກັບຄວາມອ່ອນແອຂອງເຮົາ."

ອານາເນັຽເອີ້ນ ໂປໂລເປັນອ້າຍ ແລະເຂົາບອກກັບ ໂປໂລວ່າ "ອົງພຣະຜູ້ເປັນເຈົ້າ ຄື ພຣະເຢຊູໄດ້ຊົງໃຊ້ເຮົາມາ ເພື່ອເຈົ້າຈະໄດ້ເຫັນຮຸ່ງອີກ ແລະຈະໄດ້ເຕັມໄປດ້ວຍພຣະວິນຍານບໍຣິສຸດ" (9:17). ໂປໂລຈະຕ້ອງເພິ່ງພຣະວິນ ຍານໃນການປະກາດ ແລະໃນການເອົາຊະນະອຸປສັກຕ່າງໆ. ໂປໂລໄດ້ຄືນເປັນປົກຕິ ແລະໄດ້ຮັບບັບຕິສະມາ ຈາກ ອານາເນັຽ. ໂປໂລອະທິບາຍເຣື່ອງການບັບຕິສະມາໃນ ໂຣມ 6: 1-4 ວ່າດັ່ງນີ້: ການບັບຕິສະມາ ຄືການ ຖືກຝັງ; 1. ຄວາມຜິດບາບ ແລະ ບຸກຄົນຜູ້ເກົ່າ ໄດ້ຖືກຝັງໄວ້ດ້ວຍການບັບຕິສະມາ, 2. ເພາະພຣະເຢຊູຖືກບັນ ດານໃຫ້ ຄືນພຣະຊົນ ເຮົາກໍໄດ້ເປັນຄືນມາໃຫມ່ກັບພຣະອົງ, 3. ການບັບຕິສະມາຫມາຍເຖິງຄວາມຫວັງໃຫມ່ໃນ ຊີວິດນິຣັນກັບ ອົງພຣະເຢຊູຄຣິດເຈົ້າ.

<u>ໂປໂລປະກາດທີ່ເມືອງດາມາເຊ (9: 19-22)</u>

ໂປໂລປ່ຽນແປງຈາກການເປັນສັດຕູມາເປັນຜູ້ປະກາດພຣະທັມ; ກິຈການ 9:19-22
ບັນລະຍາຍເຣື່ອງຂອງການເປັນ ພະຍານຂອງ ໂປໂລ ກ່ຽວກັບເຣື່ອງຂອງອົງພຣະເຢຊູຄຣິດ.
ການເປັນພະຍານຄືຫຍັງ? ການເປັນພະຍານຄື ການເລົ່າເຣື່ອງຂອງບຸກຄົນ ຫລືເຫດການ ຕາມທີ່ໄດ້ເຫັນ ແລະໄດ້ຍິນໂດຍເອົາຊີວິດຕົວເອງປະກັນ. ການເປັນ ພະຍານຂອງຄຣິສຕຽນແຕ່ລະມື້ຄວນຈະເປັນເຊັ່ນນັ້ນ.

ກິຈການ 1:8 ບອກໃຫ້ຄຣິສຕຽນໄປເປັນພະຍານຈົນເຖິງທີ່ສຸດປາຍແຜ່ນດິນໂລກ; ໃນປະວັດສາດທີ່ຜ່ານມາ ຄຣິສຕຽນຫລາຍໆ ຄົນໄດ້ສະລະຊີວິດຕົວເອງເພື່ອເປັນພະຍານເຣື່ອງພຣະເຢຊູ. ບັບຕິສໃນເທັກຊັດກໍໄດ້ມີສ່ວນ ໃນເຣື່ອງນີ້ເຊັ່ນກັນ. ການທຳງານຂອງໂປໂລໃນຕອນນີ້ ໄດ້ສະແດງເຖິງການມີຄວາມເຊື່ອທີ່ແທ້ຈິງຂອງເຂົາ; ຄວາມເຊື່ອທີ່ແທ້ຈິງຈະຕິດຕາມດ້ວຍການກະທຳ. ໂປໂລປະກາດກັບຄົນທັງຫລາຍວ່າ ພຣະເຢຊູ "ຊົງເປັນພຣະ ບຸດຂອງພຣະເຈົ້າ" (9:20). ໂປໂລເຄີຍມີຄວາມເຊື່ອທີ່ຜິດ; ແຕ່ດຽວນີ້ ເຂົາໄດ້ເຫັນພຣະເຢຊູ, ໄດ້ເວົ້ານຳພຣະ ເຢຊູ, ແລະໄດ້ຮຽນຈາກພຣະເຢຊູ ເຣື່ອງຊີວິດທີ່ດີກວ່າ

ການກັບໃຈຂອງໂປໂລເຮັດໃຫ້ຄົນທັງຫລາຍຕົກຕະລຶງ. ຜູ້ທີ່ເຄີຍຂົ່ມເຫງຄຣິສຕຽນ ກາຍມາເປັນຄົນໃຫ້ຄົນອື່ນຂົ່ມເຫງ. ຊີວິດການຮັບໃຊ້ຂອງໂປໂລເຕັມໄປດ້ວຍອຸປສັກແຕ່ເຂົາບໍ່ເຄີຍທໍ້ຖອຍ. ຄຣິສຕຽນໃນສມັຍນີ້ຄວນຈະຕິດຕາມຕົວຢ່າງຂອງໂປໂລ. ທ່ານໄດ້ກັບໃຈແລ້ວບໍ່? ທ່ານມີປະສົບການແນວໃດແດ່ທີ່ຈະເປັນພະຍານໃຫ້ຄົນອື່ນໆ?

<u>ໂປໂລປະກາດທີ່ກຸງເຢຣູຊາເລັມ (9:26-29)</u>
ກິຈການ 9:19-25 ເປັນລາຍລະອຽດແບບສັ້ນໆໃນຊີວິດຂອງໂປໂລ ແຕ່ ເຮົາພໍຈະສລຸບໄດ້ວ່າ ເຂົາໄດ້ຢູ່ຮ່ວມກັບພວກສາວົກຄົນອື່ນໆ ໃນເມືອງດາມາເຊຫລາຍມື້. ໂປໂລໄດ້ປະກາດຂ່າວປະເສີດໃນໂຮງທັມແລະບ່ອນຕ່າງໆຈົນພວກຢິວພາກັນຈະປອງຂ້າເຂົາ; ແຕ່ພວກລູກສິດທັງຫລາຍໄດ້ຊ່ວຍຊີວິດໂປໂລໃຫ້ພົ້ນຈາກອັນຕະລາຍເຫລົ່ານັ້ນ.

ໂປໂລໄດ້ເລົ່າເຖິງເຫດການນີ້ ຢູ່ໃນ 2 ໂກຣິນໂທ 11:32-33; ເຂົາຍັງໄດ້ເວົ້າເຣື່ອງການພົ້ນພັຍໃນ ເມືອງດາມາເຊ ໂດຍເຂົ້າຢູ່ໃນກວຍແລ້ວຖືກຢ່ອນລົງຕາມປ່ອງກຳແພງໃນ ຄາລາເຕັຽ 1:17-18. ຈາກເມືອງດາມາເຊ ໂປໂລ ໄດ້ໄປທີ່ ປະເທດອາຣະເບັຽ; ເຂົາໄດ້ຢູ່ທີ່ນັ້ນເຖິງ 3 ປີ ແລ້ວຈຶ່ງເດີນທາງມາສູ່ກຸງເຢຣູຊາເລັມ.

ໂປໂລພຍາຍາມຈະເຂົ້າສນິດສນົມກັບພວກລູກສິດ ທີ່ກຸງເຢຣູຊາເລັມ ແຕ່ທຸກຄົນປະຕິເສດເຂົາ; ເພາະທຸກຄົນເຄີຍຮູ້ວ່າໂປໂລເປັນຄົນຂົ່ມເຫງຄຣິສຕຽນ. ບາຣະນາບາ ເປັນຄົນແລກທີ່ຍອມຮັບ ໂປໂລ; ທ່ານໄດ້ນຳໂປໂລໄປພົບກັບພວກອັກຄະສາວົກ. ເຂົາໄດ້ເລົ່າເຣື່ອງການກັບໃຈ, ປະກາດ, ແລະການຮັບໃຊ້ຂອງໂປໂລໃຫ້ພວກເຂົາຟັງ. ຫລັງຈາກນັ້ນທຸກຄົນຈຶ່ງຍອມຮັບເອົາໂປໂລ. ໂປໂລໄດ້ປະກາດຢ່າງກ້າຫານຢູ່ໃນ ກຸງເຢຣູຊາເລັມ. ເຂົາໄດ້ໂຕ້ວາທີກັບຊາວຢິວທີ່ປາກພາສາກຣີກ; ແຕ່ຄົນພວກນີ້ພຍາຍາມຈະຂ້າທ່ານ, ພວກຄຣິສຕຽນທັງຫລາຍຈຶ່ງພາໂປໂລ ຫນີໄປທີ່ເມືອງກາຍຊາເຣັຽແລ້ວຈຶ່ງໄປເຖິງເມືອງຕາໂຊ. ໂປໂລຜູ້ຂົ່ມເຫງພຣະເຢຊູຄຣິດ ໄດ້ກາຍມາເປັນຜູ້ກ່າວຄຳພະຍານເຣື່ອງພຣະອົງ.

<u>ຄຳຖາມ:</u>
1. ພຣະເຈົ້າຊົງເລືອກໂປໂລໄວ້ເພື່ອເຮັດວຽກພິເສດ. ມີວຽກແນວໃດແດ່ທີ່ພຣະເຈົ້າຊົງເອີ້ນທ່ານໃຫ້ເຮັດ?
2. ພຣະເຈົ້າໃຫ້ໂປໂລໄດ້ຮັບຄວາມພົ້ນເພື່ອຈຸດປະສົງຂອງພຣະອົງ; ພຣະເຈົ້າປະທານຄວາມພົ້ນໃຫ້ກັບທ່ານ, ທ່ານຄິດວ່າພຣະອົງມີຈຸດປະສົງຫຍັງແດ່ ສຳລັບທ່ານ?
3. ພຣະເຈົ້າຊົງມອບວຽກໃຫ້ຄຣິສຕຽນຕາມຄວາມສາມາດແລະພຣະພອນຂອງແຕ່ລະຄົນ. ພຣະອົງໃຫ້ອານາເນັຽ ເຮັດຢ່າງນຶ່ງ; ພຣະອົງໃຫ້ໂປໂລ ເຮັດອີກຢ່າງນຶ່ງ. ອີງຕາມຄວາມສາມາດແລະພຣະພອນຂອງທ່ານ, ທ່ານພໍຈະຮູ້ບໍ່ວ່າ ພຣະເຈົ້າມີວຽກຫຍັງໃຫ້ທ່ານເຮັດ?
4. ໂປໂລຍອມເຮັດທຸກຢ່າງທີ່ພຣະເຈົ້າຊົງເອີ້ນເຂົາໃຫ້ເຮັດ. ພຣະເຈົ້າເອີ້ນທ່ານໃຫ້ເຮັດຫຍັງ? ທ່ານຈະຮູ້ວ່າພຣະເຈົ້າຊົງເອີ້ນທ່ານໄດ້ວິທີໃດ?

## ບົດຮຽນທີ 7

## ເປີດຕາພວກເຮົາໃຫ້ເຫັນໂລກອັນກວ້າງໃຫຍ່

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 10:1-5, 9-17, 23-48
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 10
ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງເປີດຕາຂອງເປໂຕເພື່ອເຂົາຈະໄດ້ໄປເປັນພະຍານເຣື່ອງພຣະເຢຊູຄຣິດໃຫ້ກັບໂກເນຣີໂອ ແລະຄອບຄົວ

ຄຳຖາມເພື່ອການສຳຣວດ: ມີໂອກາດສຳລັບການເປັນພະຍານຢູ່ໃສແດ່ ທີ່ພຣະເຈົ້າຈະຕ້ອງເປີດຕາຂອງທ່ານແລະຄຣິສຕະຈັກໃຫ້ໄດ້ເຫັນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກໂອກາດໃນການເປັນພະຍານ ໃນບ່ອນທີ່ທ່ານແລະ ຄຣິສຕະຈັກບໍ່ໄດ້ໃຫ້ຄວາມສົນໃຈມາກ່ອນ.

ເຣື່ອງທີ່ກຳລັງເນັ້ນກັນໃນເທັກຊັດ:

. ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດ ກັບທຸກຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຮັບໃຊ້ເພື່ອນມະນຸດທັງຫລາຍໃນພຣະນາມຂອງພຣະຄຣິດ
. ຈັດຕຽມຄຣິສຕຽນເພື່ອການຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເປີດຄຣິສຕະຈັກໃຫມ່

### ຄຳນຳ

ເທັກຊັດເປັນຣັຖທີ່ກວ້າງໃຫຍ່; ມີຫນ້າດິນທັງຫມົດປະມານ 250,000 ໄມມົນທົນ. ເທັກຊັດມີດອກໄມ້ທີ່ສວຍງາມ ທັງມີພູຜາ ແລະຫ້ວຍນ້ຳທີ່ຫນ້າຊົມເຊີຍ. ເທັກຊັດມີຄົນລ້ຽງງົວ, ມີຖນົນຫົນທາງຍາວຫລາຍພັນໄມ. ທັມມະຊາດແລະທິວທັດໃນຣັຖກໍເປັນຫນ້າຢາກເບິ່ງ. ແຕ່ໃນຂະນະດຽວກັນກໍມີຫລາຍໆຢ່າງໃນເທັກຊັດທີ່ເຮົາບໍ່ໄດ້ເຫັນຢູ່ເລື້ອຍໆເຊັ່ນ ຄົນຍາກຈົນ, ຄົນປ່ອຍໄຂ້, ຄົນແກ່ຊະລາ, ແລະຄົນຫນຸ່ມນ້ອຍທີ່ດຳເນີນຊີວິດແຕກຕ່າງກັບທັມນຽມທີ່ເຮົາຄຸ້ນເຄີຍ. ຫລາຍຄັ້ງເຮົາບໍ່ໄດ້ເຫັນຄົນເຜົ່າພັນຕ່າງໆທີ່ຢູ່ໃນຕົວເມືອງໃຫຍ່ໆທັງຫລາຍ. ສິ່ງສຳຄັນທີ່ສຸດ ເຮົາບໍ່ໄດ້ເຫັນຜູ້ຄົນທີ່ກຳລັງຫລົງທາງ ຊຶ່ງມີຈຳນວນຫລວງຫລາຍທີ່ຢູ່ໃນແລະຢູ່ນອກຣັຖເທັກຊັດ. ບາງທີເຮົາຈຳເປັນຈະຕ້ອງໄດ້ມີນຕາເບິ່ງໃຫ້ດີກວ່ານີ້. ພຣະທັມທີ່ຈະຮຽນຮ່ວມກັນໃນບົດຮຽນນີ້ ຈະເວົ້າເຖິງເຣື່ອງພຣະເຈົ້າຊົງເປີດຕາເປໂຕ ເພື່ອເຂົາຈະໄດ້ເຫັນຄົນຕ່າງຊາດຜູ້ນຶ່ງຊື່ ໂກເນຣີໂອ.

### ໂກເນຣີໂອເຫັນນິມິດເຣື່ອງຊາວຍິວຊື່ ເປໂຕ (10:1-5)

ໂກເນຣີໂອແມ່ນໃຜ? ໂກເນຣີໂອ ເປັນນາຍຮ້ອຍຢູ່ໃນກອງທະຫານຂອງອີຕາລີ. ເຂົາຢູ່ທີ່ເມືອງກາຍຊາເຣັຽຊຶ່ງເປັນເມືອງທ່າເຮືອ; ເມືອງກາຍຊາເຣັຽເປັນເມືອງເອກຂອງໂຣມ ໃນເຂດປາເລສໄຕ. ເມືອງກາຍ

ຊາເຣັຽນີສູບກາງເພື່ອການນະມັສການພວກຈັກກະພັດ ແລະ ມີໂຮງທັມຂອງຄົນຊາວຢິວ. ໂກເນຣີໂອ ແລະຄອບຄົວ ມີຄວາມ ເຊື່ອໃນພຣະເຈົ້າ; ເຂົາໃຫ້ທານແກ່ປະຊາຊົນຢ່າງຫລວງຫລາຍ; ເຂົາໄຫວ້ວອນພຣະເຈົ້າຢູ່ສເມີ.

ຊີວິດທີ່ມີການອະທິຖານເປັນປະຈຳ ຈະເປັນຊີວິດທີ່ເກີດຜົນດີ. ພຣະເຈົ້າຊົງຕອບຄຳອະທິຖານຢູ່ສເມີ. ເວລາອະທິຖານແມ່ນເວລາງຽບສງັດ, ເວລາສັນຕິສຸກ, ເວລາລໍຄອຍ, ແລະ ເວລາສົນທະນາກັບພຣະເຈົ້າ. ພຣະເຈົ້າຈະໃຊ້ເວລາຕອນນີ້ເພື່ອໃຫ້ແຜນການໃຫມ່ໆສຳລັບເຮົາ, ພຣະອົງອາດຈະປຽ່ນແປງແຜນຂອງເຮົາ, ຫລື ພຣະອົງອາດຈະເຫັນພ້ອມໃນແຜນຂອງເຮົາ.

ກິຈການ 10:4-5 ບອກວ່າ ຄຳໄຫວ້ວອນ ແລະການໃຫ້ທານຂອງ ໂກເນຣີໂອ ໄດ້ໄປເຖິງພຣະເຈົ້າ ແລະພຣະເຈົ້າຈະສົ່ງຜູ້ຮັບໃຊ້ຂອງພຣະອົງມາຫາເຂົາ. ພຣະເຈົ້າຊົງສັ່ງໃຫ້ໂກເນຣີໂອສົ່ງຄົນໃຊ້ຂອງເຂົາສອງຄົນໃຫ້ໄປຍັງເມືອງຢົບເປ ເພື່ອໄປເຊີນເອົາຄົນຢິວຊື່ເປໂຕມາທີ່ບ້ານຂອງເຂົາ. ໂກເນຣີໂອຈຶ່ງເຮັດຕາມທີ່ພຣະຜູ້ເປັນເຈົ້າຊົງຕັດສັ່ງ. ບາງຄັ້ງພຣະເຈົ້າຈະບໍ່ໃຫ້ລາຍລະອຽດ ໃນເວລາພຣະອົງເອີ້ນໃຫ້ເຮົາເຮັດສິ່ງໃດສິ່ງນຶ່ງ, ເຮົາຈະຕ້ອງໄດ້ອາສັຍຄວາມເຊື່ອເປັນນາຍທາງ. ພຣະເຈົ້າບໍ່ໄດ້ໃຫ້ຊື່ຖນົນ ຫລື ນ້ຳເບີເຮືອນເວລາພຣະອົງສັ່ງ ໂກເນຣີໂອ. ສິ່ງເຫລົ່ານີ້ອາດຈະເກີດຂຶ້ນກັບທ່ານໄດ້ເຫມືອນກັນ. ເຮົາຈະຕ້ອງເຮັດຕາມຄວາມເຊື່ອ ແທນທີ່ຈະເຮັດຕາມສິ່ງທີ່ ເຫັນດ້ວຍຕາ.

<u>ເປໂຕເຫັນນິມິດເຣື່ອງຄົນຕ່າງຊາດຊື່ ໂກເນຣີໂອ (10:9-17)</u>

ໃນຂະນະທີ່ ໂກເນຣີໂອ ແລະຄົນໃຊ້ຂອງເພິ່ນກຳລັງຈະເຮັດຕາມທີ່ພຣະຜູ້ເປັນເຈົ້າໄດ້ສັ່ງ ເປໂຕກໍກຳລັງອະທິຖານຢູ່ທີ່ເມືອງຢົບເປ. ທ່ານຄົງຈະຈົດຈຳ ເປໂຕໄດ້; ເຂົາເປັນອັກຄະສາວົກຊາວຢິວ ທີ່ພຣະເຈົ້າຊົງຕັ້ງໃຫ້ເປັນຜູ້ນຳຄຣິສຕະຈັກໃນສມັຍແລກ. ພຣະເຈົ້າຍັງມີແຜນທີ່ຈະໃຊ້ເປໂຕ ໃນການຂຍາຍຄຣິສຕະຈັກໃຫ້ກວ້າງອອກໄປ. ພຣະເຢຊູໄດ້ເອີ້ນເປໂຕມາເປັນອັກຄະສາວົກ; ເຂົາໄດ້ປຽ່ນຈາກຄົນຫາປາ ມາເປັນຜູ້ຫາຄົນ (ລູກາ 5:1-11). ພຣະເຢຊູໄດ້ເວົ້າກັບເປໂຕຢູ່ໃນ ມັດທາຍ 16:18 ວ່າ "ເຮົາບອກທ່ານວ່າທ່ານຄືເປໂຕ ເທິງສີລາກ້ອນນີ້ ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ."

ເປໂຕເຄີຍມີຄວາມບົກພ່ອງມາກ່ອນ; ເຂົາເຄີຍປະຕິເສດພຣະເຢຊູຄຣິດ ຕອນທີ່ພຣະອົງຊົງຕ້ອງການເຂົາທີ່ສຸດ. ແຕ່ເປໂຕຮັກພຣະເຈົ້າ. ພາຍຫລັງທີ່ພຣະເຢຊູໄດ້ຕາຍ ແລະໄດ້ເປັນຄືນມາ ພຣະອົງໄດ້ກັບມາຫາເປໂຕ; ແຕ່ນັ້ນໄປເປໂຕໄດ້ກາຍມາເປັນຜູ້ນຳທີ່ເຂັ້ມແຂງທີ່ສຸດ. ຈາກການເທສນາຂອງເປໂຕໃນວັນ ເພັນເຕຄໍສະເຕ ມີຄົນມາຮັບເຊື່ອປະມານສາມພັນຄົນ(ກິຈການ 2:41). ຄຣິສຕະຈັກໃນກຸງເຢຣູຊາເລັມໃນສມັຍນັ້ນບໍ່ໄດ້ປະກາດກັບຄົນຕ່າງຊາດເລີຍ; ຫລັງຈາກເປໂຕໄດ້ເຫັນນິມິດ ຈາກພຣະເຈົ້າ, ເຂົາຈຶ່ງໄດ້ຮູ້ວ່າຂ່າວປະເສີດເຣື່ອງພຣະເຢຊູບໍ່ແມ່ນ ມີໄວ້ເພື່ອແຕ່ຄົນຊາດຢິວ ແຕ່ເປັນຂ່າວດີສຳ ລັບທຸກໆຄົນໃນແຜ່ນດິນໂລກ.

ພຣະເຈົ້າໄດ້ຈັດຕຽມໂກເນຣີໂອ ໃຫ້ໄປຊອກຫາເປໂຕ, ພ້ອມດຽວກັນນັ້ນພຣະເຈົ້າກໍໄດ້ຈັດຕຽມເປໂຕເພື່ອຈະໃຫ້ໄປຫາ ໂກເນຣີໂອ. ເປໂຕໄດ້ຂຶ້ນໄປເທິງຫລັງຄາຕຶກເພື່ອໄຫວ້ວອນ; ແລ້ວເຂົາໄດ້ເຫັນນິມິດຈາກພຣະເຈົ້າ. ໃນພຣະຄັມພີຫລາຍໆຕອນ, ພຣະເຈົ້າໃຊ້ນິມິດເພື່ອເປີດເຜີຍວຽກງານໃຫ້ກັບຜູ້ຮັບໃຊ້ຂອງພຣະອົງ. ນິມິດເປັນວິທີ

ນຶ່ງທີ່ພຣະອົງຈະເປີດຕາຂອງຜູ້ຮັບໃຊ້ ເພື່ອເຂົາຈະໄດ້ເຫັນໂລກອັນກວ້າງໃຫຍ່ທີ່ຕ້ອງການຄວາມຊ່ວຍເຫລືອ.

ໃນນິມິດນີ້ ເປໂຕໄດ້ເຫັນ " ທ້ອງຟ້າໄຂອອກ ມີສິ່ງນຶ່ງກຳລັງລົງມາເຫມືອນຜ້າຜືນໃຫຍ່ຜູກໄວ້ທາງສີ່ແຈ ຢ່ອນລົງມາເຖິງດິນ " (ກິຈການ 10:11). ສີ່ແຈຂອງຜ້າຄົງຈະມີຄວາມຫມາຍວ່າ ສີ່ມຸມໂລກ ຊຶ່ງຄ້າຍຈະບອກເຖິງການປະກາດທົ່ວໂລກ. ຢູ່ໃນແຜ່ນຜ້ານັ້ນມີສັດທຸກສນິດ, ສັດສີ່ຕີນ, ສັດຄານ, ແລະນົກ (10:12); ພຣະເຈົ້າສັ່ງເປໂຕໃຫ້ຂ້າສັດເລົ່ານັ້ນກິນ. ແຕ່ເປໂຕປະຕິເສດ ເພາະມັນເປັນຂອງຕ້ອງຫ້າມສຳລັບຊາວຢິວ. ພຣະເຢຊູຊົງສອນ ຢູ່ໃນມາຣະໂກ 7:14-23 ວ່າ ພຣະອົງໄດ້ເຮັດໃຫ້ອາຫານທຸກຢ່າງສະອາດແລ້ວ. ບາງຄັ້ງ ພວກເຮົາໄດ້ປ່ອຍຕົວເອງໃຫ້ເປັນທາດຂອງປະເພນີ ຫລື ສິ່ງທີ່ເຄີຍກະທຳກັນມາກ່ອນ ເຖິງວ່າພຣະທັມຈະສັ່ງສອນປານໃດກໍຕາມ. ພຣະເຈົ້າບໍ່ໄດ້ເຈຕນາຈະສອນເປໂຕເຣື່ອງອາຫານໃນນິມິດນີ້ ແຕ່ພຣະອົງຢາກຈະສອນເຂົາເຣື່ອງການເຊື່ອຟັງ.

ບັບຕິດໃນເທັກຊັດເຄີຍຖື ປະເພນີທີ່ເປັນພັຍອັນຕະລາຍຢ່າງນີ້ບໍ່? ປະເພນີເຄີຍຫ້າມເຮົາບໍ່ໃຫ້ໄປປະກາດກັບຄົນທຸກໆຄົນບໍ່? ຂອບຄຸນພຣະເຈົ້າ ເພາະດຽວນີ້ ບັບຕິດໃນເທັກຊັດກຳລັງນຳພຣະທັມຂອງພຣະເຈົ້າໃຫ້ໄປເຖິງທີ່ສຸດຂອງໂລກ ແລະໃຫ້ໄປເຖິງທຸກໆຄົນ.

ພຣະເຈົ້າໄດ້ໃຫ້ນິມິດກັບເປໂຕເຖິງສາມຄັ້ງກ່ອນທີ່ເຂົາຈະຍອມຮັບສິ່ງໃຫມ່ໆນີ້; ໃນຂະນະນັ້ນຄົນໃຊ້ຂອງໂກເນຣິໂອ ກໍມາເຖິງບ້ານຂອງ ຊີໂມນ ຊຶ່ງເປັນບ່ອນທີ່ ເປໂຕພັກຢູ່. ພຣະວິນຍານບໍຣິສຸດຂອງພຣະເຈົ້າຊ່ວຍເປໂຕໃຫ້ເຂົ້າໃຈເຫດການເຫລົ່ານີ້ວ່າພຣະເຈົ້າໄດ້ເອີ້ນໃຫ້ເຂົາອອກໄປປະກາດພຣະທັມຂອງພຣະເຈົ້າກັບຄົນນາໆຊາດ.

<u>ນິມິດ</u>

ພຣະເຈົ້າໄດ້ໃຊ້ນິມິດເພື່ອນຳພາເປໂຕ ແລະ ໂກນີເຣໂອໃຫ້ໄດ້ພົບກັນ. ສິ່ງສຳຄັນທີ່ສຸດຄືພຣະເຈົ້າທຳງານໃນຊີວິດຂອງເຂົາທັງສອງໃນເວລາດຽວກັນ. ພຣະເຈົ້າໄດ້ໃຊ້ນິມິດເພື່ອໃຫ້ຄົນເຫັນສິ່ງສຳຄັນທີ່ພຣະອົງປະສົງໃຫ້ມະນຸດໄດ້ຮູ້. ບາງຄັ້ງ ພຣະອົງຈະເວົ້າກັບເຮົາໂດຍຕົງ ແລະ ບາງທີ ພຣະອົງອາດຈະໃຊ້ເທວະດາໃຫ້ເປັນຜູ້ນຳຂ່າວມາໃຫ້ເຮົາ. ຫລາຍເທື່ອພຣະເຈົ້າເວົ້າໃສ່ຈິດໃຈຂອງເຮົາເພື່ອຊ່ວຍໃຫ້ເຮົາເຂົ້າໃຈ. ພຣະເຈົ້າຊົງເປີດເຜີຍທຸກຢ່າງຜ່ານພຣະບຸດຂອງພຣະອົງ ຄື ພຣະເຢຊູຄຣິດ; ຜູ້ຊຶ່ງມີຣິດອຳນາດເຫນືອເທວະດາທຸກອົງ. ຫລາຍໄປກ່ອນນັ້ນພຣະເຈົ້າໄດ້ສົ່ງພຣະວິນຍານບໍຣິສຸດໃຫ້ມາເປັນຄູ ທີ່ຈະສັ່ງສອນພວກເຮົາທຸກໆຢ່າງ.

<u>ເຫດການເກີດຂຶ້ນຢູ່ຄົນລະແຫ່ງ ແຕ່ ເກີດຂຶ້ນພ້ອມໆກັນ</u> (10:23-48)

ຢົບປາ ແມ່ນເມືອງທີ່ ໂຢນາ ໄດ້ມາອາສັຍຢູ່ຕອນເຂົາຫລົບຫນີພຣະເຈົ້າ; ໂຢນາບໍ່ຍອມໄປປະກາດກັບຄົນຕ່າງຊາດ ຕາມທີ່ພຣະເຈົ້າໄດ້ຊົງສັ່ງເຂົາ (ໂຢນາ 1:3). ພຣະເຈົ້າໄດ້ເລືອກ ເມືອງຢົບປາ ອີກຄັ້ງນຶ່ງເພື່ອເປັນບ່ອນທີ່ພຣະອົງຊົງສັ່ງ ເປໂຕ ໃຫ້ໄປປະກາດກັບຄົນຕ່າງຊາດທີ່ເມືອງກາຍຊາເຣັຽ. ພຣະເຈົ້າຊົງເປັນຜູ້ບໍຣິຫານທີ່ດີ, ພວກເຮົາຄວນຕອບພຣະອົງໂດຍການເປັນຜູ້ຊ່ວຍທີ່ດີຂອງພຣະອົງ.

ພຣະທັມກິຈການ ເປັນປຶ້ມບັນທຶກວຽກງານທີ່ພຣະວິນຍານ ຂອງພຣະເຈົ້າຊົງກະທຳ. ກ່ອນພຣະເຢຊູຈະສະເດັດຂຶ້ນສູ່ສວັນພຣະອົງໄດ້ບອກແຜນການເຣື່ອງປະກາດຂ່າວປະ ເສີດໃຫ້ພວກເຮົາໃນ ກິຈການ 1: 8; ແຜນການຄືໃຫ້ພວກເຮົາເລີ້ມເປັນພະຍານໃນກຸງເຢຣູຊາເລັມ, ຢູດາຍ, ຊາ ມາເຣັຽ, ແລະ ຈົນເຖິງທີ່ສຸດປາຍຂອງໂລກ. ກິຈການ 1 ເວົ້າເຖິງການປະກາດຂອງຄຣິສຕະຈັກ ກັບຄົນຢິວທີ່ ເຢຣູຊາເລັມ; ກິຈການ 2 ເວົ້າເຣື່ອງຄົນ 3000 ທີ່ມາຮັບເຊື່ອ. ກິຈການ4 ບອກວ່າມີຊາວຢິວທີ່ເປັນຄຣິສຕຽນຈຳນວນ 5000 ຄົນ;ພວກເຂົາໄດ້ແຕກອອກໄປທົ່ວຢູດາຍ ແລະ ຊາມາເຣັຽ ເພາະການຖືກຂົ່ມເຫງ. ໃນ ກິຈການ 8 ຟີລິບ ໄປປະກາດທີ່ ຊາມາເຣັຽ; ພຣະເຈົ້າສົ່ງຟີລິບໃຫ້ໄປເປັນພະຍານກັບຊາວເອທີໂອເປັຽ. ມາເຖິງ ກິຈການ 10 ພຣະເຈົ້າຊ່ວຍເປໂຕ ໃຫ້ຖິ້ມປະເພນີເກົ່າໆເພື່ອໄປປະກາດກັບຄົນຕ່າງຊາດ.

ເມື່ອພວກຄົນໃຊ້ ແລະທະຫານຂອງ ໂກເນຣີໂອມາເຖິງ ບ້ານຂອງ ຊີໂມນເຂົາກໍໄດ້ພົບກັບເປໂຕ; ເປໂຕໄດ້ນຳຄະນະຂອງເຂົາ ເດີນທາງໄປທີ່ເມືອງກາຍຊາເຣັຽ. ເປໂຕໄດ້ສັ່ງສອນ ໂກເນຣີໂອ ພ້ອມດ້ວຍພີ່ນ້ອງແລະມິດສະຫາຍຂອງເຂົາ; ພຣະວິນຍານບໍຣິສຸດໄດ້ສະເດັດລົງມາເທິງຄົນທັງຫລາຍທີ່ກຳລັງຮັບຟັງພຣະທັມຈາກເປໂຕ. ເປໂຕຈຶ່ງບັບຕິສະມາທຸກໆຄົນທີ່ໄດ້ຮັບເຊື່ອດ້ວຍນ້ຳ. ຄວາມລອດພົ້ນໄດ້ແຜ່ໄປເຖິງຄົນຕ່າງຊາດເພາະເປໂຕເຊື່ອຟັງພຣະເຈົ້າ. ພວກເຮົາທຸກຄົນເປັນພີ່ນ້ອງໃນຄອບຄົວຂອງພຣະເຈົ້າໂດຍບໍ່ເລືອກເຜົ່າພັນ ແລະເພດວັຍ. ພວກເຮົາໄດ້ກາຍເປັນນຶ່ງໃນອົງພຣະຄຣິດ (ຄາລາເຕັຽ 3:28); ປະເພນີ ແລະ ນິສັຍ ບໍ່ສາມມາດຈະມາຫຍັ່ງໃຫຽ່ເທົ່າກັບການປະກາດພຣະທັມໃຫ້ກັບຄົນທົ່ວໆໄປໃນໂລກນີ້.

ຈາກການພິສຸດເບິ່ງບົດເທສນາຂອງເປໂຕ ຢູ່ໃນກິຈການ 10:34-43, ເຮົາສາມາດຮູ້ໄດ້ວ່າ ເປໂຕໄດ້ເທສນາແບບບໍ່ໄດ້ແບ່ງແຍກ ເຊື້ອຊາດ ແລະເຜົ່າພັນ; ເປໂຕປະກາດວ່າ ພຣະເຈົ້າບໍ່ໄດ້ຊົງເລືອກຫນ້າຜູ້ໃດ (10:34), ພຣະເຢຊູໄດ້ນຳຂ່າວປະເສີດມາຜ່ານຄົນອິສຣາເອັນ (10:36), ພຣະເຈົ້າໄດ້ຊົງຫົດສົງພຣະເຢຊູດ້ວຍພຣະວິນຍານບໍຣິສຸດເພື່ອຈະທຳການດີ (10:37-38),ພຣະເຢຊູຊົງໂຜດບັນດາຜູ້ຖືກມານບຽດບຽນໃຫ້ດີ (10:38), ພຣະເຢຊູໄດ້ຖືກຂ້າດ້ວຍການແຂວນໄວ້ທີ່ໄມ້ກາງແຂນ (10:39), ພຣະເຈົ້າໄດ້ຊົງບັນດານໃຫ້ພຣະເຢຊູເປັນຄືນມາໃນວັນຖ້ວນສາມ (10:40), ມີຫລາຍຄົນໄດ້ເຫັນແລະເປັນພະຍານສິ່ງອັດສະຈັນນີ້ (10:41), ພຣະເຢຊູໄດ້ສັ່ງໃຫ້ຜູ້ທີ່ເຊື່ອອອກໄປປະກາດແລະເປັນພະຍານເຣື່ອງພຣະອົງ (10:42),ພຣະເຈົ້າຊົງຕັ້ງພຣະເຢຊູໄວ້ເພື່ອພິພາກສາທັງຄົນເປັນແລະຄົນຕາຍ (10:43). ເມືອງກາຍຊາເຣັຽ ເປັນບ່ອນເລີ້ມຂອງການປະກາດກັບຄົນທົ່ວໄປໂດຍບໍ່ມີການ ເລືອກຊັ້ນວັນນະ ແລະເຜົ່າພັນ; ກຳແພງທີ່ແບ່ງແຍກ ຄົນຕ່າງຊາດ ແລະ ຊາວຢິວໄດ້ຖືກທຳລາຍໃຫ້ຫມົດສິ້ນໄປ. ເປໂຕເບິ່ງເຫດການທີ່ເກີດ ຂຶ້ນກັບເຂົາຄືການເລີ້ມຕົ້ນປະກາດກັບຊາວຕ່າງຊາດທີ່ ກາຍຊາເຣັຽ, ແຕ່ພຣະເຈົ້າມີເຈດຕະນາທີ່ຈະໃຫ້ ການປະກາດທີ່ເລີ້ມຈາກຄົນຢິວ ໃຫ້ແຜ່ອອກໄປຈົນເຖິງທີ່ສຸດປາຍຂອງໂລກ.

<u>ຄຳຖາມ</u>

1. ມີຫຍັງແດ່ທີ່ຊີ້ໃຫ້ເຮົາເຫັນວ່າ ໂກເນຣີໂອ ເປັນຄົນຖືສາສນາທີ່ຖືກຕ້ອງ?
2. ນິມິດທີ່ພຣະເຈົ້າໄດ້ໃຫ້ກັບເປໂຕ ມີຄວາມຫມາຍແນວໃດ ສຳລັບທ່ານ?
3. ເປັນຫຍັງເປໂຕຈຶ່ງເຊື່ອວ່າ ຄົນຢິວ ບໍ່ຄວນຈະໄປເຂົ້າບ້ານຊາວຕ່າງປະເທດ?
4. ເປໂຕເຮັດຫຍັງແດ່ ຫລັງຈາກ ໂກເນຣີໂອອະທິບາຍໃຫ້ເຂົາຟັງວ່າ ເປັນຫຍັງໂກເນຣີໂອຈຶ່ງສົ່ງຄົນໄປຊອກຫາເຂົາ?

5. ການປາກົດຂອງພຣະວິນຍານບໍຣິສຸດທ້າມກາງຄົນຕ່າງຊາດມີຄວາມໝາຍແນວໃດ?

6. ເຮັດແນວໃດເຮົາຈະສາມາດເປັນພຍານກັບຄົນທົ່ວໆໄປ ໂດຍບໍ່ເລືອກເຜົ່າພັນ ແລະຖານະ?

## ບົດຮຽນທີ 8

## ມີໃຈກ້າຫານພຽງພໍທີ່ຈະປຽ່ນແປງ

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ກິຈການ 11:1-4 ,15 -26
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ກິຈການ 11
ຈຸດສໍາຄັນຂອງບົດຮຽນນີ້: ຄຣິສຕະຈັກທີ່ກຸງເຢຣູຊາເລັມ ແລະທີ່ເມືອງ ອັນຕີໂອເຂັຽ ຕຽມພ້ອມທີ່ຈະອອກໄປປະກາດກັບຄົນທົ່ວໄປທີ່ບໍ່ແມ່ນຊາວຢິວ

ຄໍາຖາມເພື່ອການສໍາຣວດ: ຄຣິສຕະຈັກຈະປຽ່ນແປງ ແລະຍອມເຮັດຕາມໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບຫມາຍໃຫ້ໄດ້ແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຄຣິສຕະຈັກຈະໄດ້ຮູ້ວ່າມີຫຍັງແດ່ທີ່ຈໍາເປັນຕ້ອງປຽ່ນແປງເພື່ອຈະໄດ້ເຮັດໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບຫມາຍໃຫ້.

ເຣື່ອງທີ່ກໍາລັງເນັ້ນກັນໃນເທັກຊັດ:
. ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດ ກັບທຸກຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
. ຮັບໃຊ້ເພື່ອນມະນຸດທັງຫລາຍໃນພຣະນາມຂອງພຣະຄຣິດ
. ຈັດຕຽມຄຣິສຕຽນເພື່ອການຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
. ຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເປີດຄຣິສຕະຈັກໃຫມ່

### ຄໍານໍາ

ຄຣິສຕະຈັກໃນສມັຍນີ້ຈໍາເປັນຈະຕ້ອງມີຄວາມກ້າຫານ ເຫມືອນຄຣິສຕະຈັກໃນກຸງເຢຣູຊາເລັມ ແລະໃນເມືອງອັນຕີໂອເຂັຽ ໃນສມັຍກ່ອນ ທີ່ຍອມປຽ່ນແປງເພື່ອຈະໄດ້ເຮັດໜ້າທີ່ຮັບຜິດຊອບທີ່ພຣະເຈົ້າໄດ້ມອບຫມາຍໃຫ້.
ຄວາມ ກ້າຫານເກີດມາຈາກຄວາມເຊື່ອຫມັ້ນ; ຄວາມກ້າຫານຊ່ວຍໃຫ້ເຮົາຕໍ່ສູ້ກັບອຸປສັກດ້ວຍຄວາມຫມັ້ນໃຈ.
ບັບຕິດໃນ ເທັກຊັດມີປະວັດເຣື່ອງຄວາມກ້າຫານພໍສົມຄວນ. ຄະນະບັບຕິດໄດ້ເຂົ້າມາ ເທັກຊັດໃນປີ 1820; ໃນສມັຍແລກ ພວກເຂົາເຈົ້າບໍ່ໄດ້ມີເສລີພາບເຣື່ອງການນມັສການເລີຍ. ໃນສມັຍທີ່ ຄົນເທັກຊັດໄດ້ຕໍ່ສູ້ ເພື່ອເອກກະຣາຊຈາກ ເມກ ຊິໂກ ຊາວບັບຕິດຫລາຍຄົນໄດ້ຮ່ວມໃນການຕໍ່ສູ້ນັ້ນ.
ບັບຕິດໃນເທັກຊັດໄດ້ຕັ້ງສະຫະພັນຂຶ້ນໃນປີ 1848 ທີ່ເມືອງ ແອນເດີສັນ.
ວຽກງານຂອງບັບຕິດໄດ້ຂຍາຍຕົວຈາກຄຣິສຕະຈັກຈໍານວນນ້ອຍໆ ມາເຖິງຈໍານວນທີ່ຫລາຍກ່ວາ 5000 ຄຣິສຈັກ ແລະມີສມາຊິກຫລາຍກ່ວາ 2 ລ້ານຄົນ. ທຸກຢ່າງສໍາເຣັດໄດ້ກໍຍ້ອນວ່າພວກເຮົາມີຄວາມກ້າ ຫານ, ມີຄວາມເຊື່ອຫມັ້ນ, ມີນິມິດຫມາຍ, ແລະ ມີຄວາມດຸຫມັ່ນ.

ທຸກມື້ນີ້, ມີຄຣິສຕະຈັກຫລາຍບ່ອນທີ່ກໍາລັງຄົງຕົວຢູ່; ຄຣິສຕະຈັກຫລາຍແຫ່ງບໍ່ໄດ້ນໍາຄົນມາເຊື່ອແມ່ນແຕ່ຄົນ

ດຽວໃນປີທີ່ຜ່ານມາ; ຄຣິສຕະຈັກຫລາຍໆແຫ່ງບໍ່ໄດ້ມີການອອກແມ່ແພ່ລູກເລີຍ. ພວກເຮົາຈະຕ້ອງນໍາວິທີການໃນພຣະສັນຍາໃຫມ່ມາໃຊ້ໃນການເສີມສ້າງຄຣິສຕະຈັກ; ຄຣິສຕະຈັກທີ່ກຸງເຢຣູຊາເລັມໃນສມັຍນັ້ນໄດ້ຮຽນຮູ້ວ່າພຣະວິນຍານບໍຣິສຸດ ຂອງພຣະເຈົ້າສາມາດທໍາງານຖ້າມກາງພວກຊາວຕ່າງຊາດ.

## ການປ້ອງກັນຕົວຂອງເປໂຕ ແລະການຕໍ່ສູ້ຂອງຊາວຢິວ (11:1-4)

ແຜນການເຜີຍແຜ່ຂ່າວປະເສີດຂອງພຣະເຈົ້າໃນຕອນນີ້ ໄດ້ຂຍາຍຕົວຢ່າງວ່ອງໄວ. ຜູ້ຮັບໃຊ້ແຕ່ລະຄົນທີ່ພຣະເຈົ້າໄດ້ສົ່ງອອກໄປ ພາກັນປະຕິບັດງານດ້ວຍຄວາມສໍາເຣັດ. ພຣະເຢຊູ ໄດ້ວາງແຜນການປະກາດໄວ້ໃນ ກິຈການ 1:8; ພຣະວິນຍານບໍຣິສຸດຂອງພຣະເຈົ້າຊົງເປັນຣິດອໍານາດເພື່ອການທໍາງານ; 3000 ຄົນໄດ້ມາຮັບເຊື່ອໃນ ວັນເພັນເຕຄໍສະເຕ ເພາະຣິດອໍານາດຂອງພຣະເຈົ້າ.

ຄຣິສຕະຈັກໃນກຸງເຢຣູຊາເລັມໄດ້ເຫັນການເຕີບໃຫຍ່ ແຕ່ໃນຂະນະດຽວກັນເຂົາເຈົ້າກໍໄດ້ພົບກັບບັນຫາຫລາຍໆຢ່າງເຊັ່ນ: ຊະເຕຟາໂນ ຖືກປະຫານຊີວິດ; ຜູ້ນໍາຊາວຢິວເລີ້ມໂຈມຕີຄຣິສຈັກ; ລູກສິດທັງຫລາຍ, ຍົກເວັ້ນແຕ່ພວກອັຄສາວົກ, ໄດ້ແຕກກະຈາຍອອກຈາກ ກຸງເຢຣູຊາເລັມ. ໂຊໂລຂົ່ມເຫງຄຣິສຕຽນ ຈົນເຖິງເວລາ ພຣະເຢຊູຄຣິດປະກົດຕົວໃຫ້ເຂົາເຫັນ; ໂຊໂລຫລັງຈາກກັບໃຈເຊື່ອ ໄດ້ມີຊື່ວ່າ ໂປໂລ.

ຟີລິບໄປປະກາດທີ່ ຊາມາເຣັຽ ແລະໄປປະກາດກັບຄົນຊາວເອທີໂອເປັຽ. ພຣະເຈົ້າຊົງໃຊ້ເປໂຕໃຫ້ໄປປະກາດກັບຄົນຕ່າງຊາດ, ໂກເນລີໂອ, ທີ່ເມືອງກາຍຊາເຣັຽ. ຈາກການປະກາດຂອງເປໂຕ ພຣະເຈົ້າຊົງສະແດງໃຫ້ຄຣິສຕຽນຊາວຢິວທີ່ເຢຣູຊາເລັມຮູ້ວ່າ ພຣະເຢຊູ ເປັນພຣະຜູ້ໂຜດໃຫ້ພົ້ນຂອງຊາວຢິວ ແລະຂອງຊາວຕ່າງຊາດ. ຄຣິສຕຽນຢິວຕ້ອງມີຄວາມກ້າຫານພຽງພໍທີ່ຈະໄປບອກເຣື່ອງເຫລົ່ານີ້ໃຫ້ຊາວຢິວທົ່ວໆໄປ.

ຫລັງຈາກ ອັຄສາວົກ ແລະຄຣິສຕະຈັກທີ່ກຸງເຢຣູຊາເລັມໄດ້ຮູ້ເຣື່ອງຊາວຕ່າງຊາດມາເຊື່ອໃນອົງພຣະເຢຊູ, ຫລາຍຄົນພາກັນເລີ້ມບໍ່ພໍໃຈ ແລະພາກັນສອບສວນຫາຄວາມຈິງຈາກເປໂຕ ແລະຂະນະຂອງເຂົາ. ຫລາຍຄົນເວົ້າວ່າຄົນຕ່າງຊາດຈະຕ້ອງຍອມຮັບພິທີຕັດ ກ່ອນຈະມາເປັນຄຣິສຕຽນ. ເຣື່ອງນີ້ໄດ້ສ້າງບັນຫາໃຫ້ກັບຄຣິສຕະຈັກພໍສົມຄວນ. ເປໂຕ ແລະ ໂປໂລ ໄດ້ພົບກັນອີກເທື່ອນຶ່ງໃນກຸງເຢຣູຊາເລັມເພື່ອແກ້ໄຂບັນຫານີ້ (ກິຈການ 10).

ເປໂຕໄດ້ຕອບຄວາມສົນໃຈຂອງທຸກຄົນເຣື່ອງຊາວຕ່າງຊາດໄດ້ຮັບພຣະວິນຍານບໍຣິສຸດ; ເປໂຕຢືນຕໍ່ສູ້ດ້ວຍຄວາມກ້າຫານເພາະເຂົາຮູ້ວ່າສິ່ງທີ່ເຂົາໄດ້ເຮັດໄປນັ້ນເປັນສິ່ງທີ່ພຣະເຈົ້າຊົງພໍພຣະທັຍແລະເປັນສິ່ງທີ່ຖືກຕ້ອງ. ເປໂຕຢັ້ງຢືນວ່າພຣະເຈົ້າໄດ້ໂຜດຄົນຕ່າງຊາດໃຫ້ພົ້ນເພາະຄວາມເຊື່ອຂອງພວກເຂົາ, ບໍ່ແມ່ນດ້ວຍພິທີຕັດ. ເປໂຕ ໄດ້ລ່ວງລະເມີດປະເພນີ ທີ່ແບ່ງແຍກຊາວຢິວ ແລະຊາວຕ່າງຊາດ.

ຄຣິສຕຽນໃນສມັຍນີ້ຄວນເອົາຕົວຢ່າງຂອງເປໂຕເຣື່ອງການປະກາດ; ເຮົາຈໍາເປັນຈະຕ້ອງທໍາລາຍອຸປສັກທີ່ກີດກັ້ນບໍ່ໃຫ້ເຮົານໍາຂ່າວປະເສີດໄປຫາພວກຄົນທີ່ບໍ່ແມ່ນເຜົ່າດຽວກັບເຮົາ, ຄົນທີ່ບໍ່ມີຖານະເທົ່າກັບເຮົາ, ຫລືຄົນທີ່ບໍ່ມີການສຶກສາເທົ່າທຽມກັບເຮົາ.

## ເວລາພຣະວິນຍານບໍຣິສຸດກໍາລັງທໍາງານ (11:15-18)

ຄຣິສຕຽນຜູ້ທີ່ຍັງປະຕິບັດຕາມບັນຍັດຂອງ ໂມເຊ ພາກັນໂຈມຕີເປໂຕ. ເຂົາບອກວ່າພວກຕ່າງຊາດທີ່ ມາເຊື່ອຈະຕ້ອງປະຕິບັດຕາມປະເພນີຂອງຊາວຢິວ. ເປໂຕຢັ້ງຢືນວ່າສິ່ງທີ່ເກີດຂື້ນກັບຄົນຕ່າງຊາດ ໃນບ້ານຂອງ ໂກເນຣີໂອ ແມ່ນພຣະເຈົ້າເປັນຜູ້ເຮັດ ແລະ ເຂົາມີຄົນຢິວຈໍານວນ 6 ຄົນໄດ້ເຫັນແລະ ໄດ້ເປັນພະຍານໃນເຣື່ອງນີ້.ພຣະເຈົ້າສະແດງໃຫ້ຄົນຢິວເຫັນວ່າ ພຣະເຈົ້າຊົງ ໂຜດຄົນຕ່າງຊາດ ແລະ ພຣະອົງຊົງປະທານພຣະວິນຍານໃຫ້ ຄົນຕ່າງຊາດ. ພຣະເຈົ້າບໍ່ໄດ້ຈໍາແນກລະຫວ່າງຄົນຢິວແລະຄົນ ຕ່າງຊາດເຣື່ອງຄວາມລອດພົ້ນ.

ມີຫລັກຖານຫລາຍຢ່າງໃນ ພຣະທັມກິຈການທີ່ສະແດງໃຫ້ເຮົາເຫັນວ່າ ການເຕີບໃຫຍ່ຂອງຄຣິສຕະຈັກ ໃນກຸ່ມພວກຄົນຕ່າງຊາດແມ່ນການທໍາງານຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າ. ຢູ່ໃນ ກິຈການ 11:15-17, ເປໂຕເນັ້ນ 4 ຢ່າງໃຫ້ພວກຕໍ່ຕ້ານທັງຫລາຍຟັງ: 1. ພຣະເຈົ້າໄດ້ເຈີມຄົນຕ່າງຊາດດ້ວຍ ພຣະວິນຍານບໍຣິສຸດ, 2. ປະສົບການຂອງຄົນຕ່າງຊາດໃນເທື່ອນີ້ບໍ່ໄດ້ແຕກຕ່າງກັບປະສົບການທີ່ ຊາວຢິວ ໄດ້ຮັບໃນວັນເພັນເຕຄໍສະເຕ, 3. ພຣະເຈົ້າໄດ້ບອກທຸກໆຄົນໃຫ້ຮັບເອົາພຣະວິນຍານບໍຣິສຸດ, 4. ຖ້າ ພຣະເຈົ້າຊົງປະສົງຈະປະທານພຣະວິນຍານບໍຣິສຸດໃຫ້ກັບຄົນຕ່າງຊາດ; ເປໂຕແມ່ນໃຜ ເຖິງຈະກ້າ ຕໍ່ຕ້ານພຣະອົງໄດ້.

ເມື່ອພວກຕໍ່ຕ້ານໄດ້ຍິນເຊັ່ນນັ້ນ ເຂົາກໍຢຸດຕິການໂຈມຕີແລະຄວາມກ່າວຫາຕ່າງໆ. ບໍ່ມີໃຜທີ່ຈະສາມາດ ຕໍ່ຕ້ານ ການຊົງເຈີມ ແລະການບັບຕິສະມາ ຂອງພວກຄົນຕ່າງຊາດໄດ້; ເພາະທຸກຄົນຍອມຮັບວ່າ ການເຮັດສິ່ງນັ້ນຈະເປັນການ ຕໍ່ສູ້ພຣະຜູ້ເປັນເຈົ້າ. ການຕໍ່ສູ້ປະເພດນີ້ ຍັງມີມາເຖິງສມັຍປັດຈຸບັນ; ຜູ້ຄົນທີ່ປ້ອງກັນປະເພນີ ຫລືປ້ອງກັນຕໍາແຫນ່ງໃນຄຣິສຕະຈັກ ມັກຈະເປັນອຸປສັກບໍ່ໃຫ້ຄຣິສຕະຈັກໄດ້ ທົດລອງສິ່ງໃຫມ່ໆເພື່ອຈະຊ່ວຍໃຫ້ຄຣິສຕະຈັກເຕີບໃຫຍ່.

## ຄຣິສຕະຈັກຂອງຊາວຕ່າງຊາດຂຍາຍຕົວ (11:19-26)

ຍ້ອນການຂົ່ມເຫງຄຣິສຕະຈັກ, ຫລັງຈາກທີ່ ຊະເຕຟາໂນໄດ້ຖືກປະຫານຊີວິດ, ຄຣິສຕຽນຫລາຍຄົນໄດ້ແຕກ ກະຈາຍ ໄປເຖິງເມືອງອັນຕີໂອເຂັຽ. ອັນຕີໂອເຂັຽ ເປັນເມືອງໃຫຍ່ເມືອງນຶ່ງຂອງ ຈັກພັດໂຣມມັນ ລອງຈາກ ກຸງໂຣມ ແລະ ອາເລັກຊານດຣີອາ. ອັນຕີໂອເຂັຽ ເປັນສູນກາງໃຫຍ່ ທາງສາສນາ ແລະການໄຫວ້ພຣະທຽມ; ຄຣິສຕຽນໄດ້ພາກັນມາສ້າງພື້ນຖານໃຫມ່ໃນເມືອງນີ້ ແລະເປັນເມືອງທີ່ຜູ້ທີ່ເຊື່ອໃນອົງພຣະເຢຊູຄຣິດ ໄດ້ຖືກເອີ້ນ ຊື່ວ່າ "ຄຣິສຕຽນ" ເປັນຄັ້ງທໍາອິດ (11:26). ຄຣິສຕຽນຢິວໄດ້ພາກັນປະກາດຢ່າງກ້າຫານກັບຄົນຕ່າງຊາດໃນ ເມືອງອັນຕີໂອເຂັຽ. ອັນຕີໂອເຂັຽໄດ້ກາຍເປັນສູນກາງເພື່ອການປ່າວປະກາດກັບຄົນຕ່າງຊາດ.

ທ່ານກ້າທີ່ຈະໄປປະກາດກັບຄົນທີ່ບໍ່ແມ່ນເຊື້ອຊາດແລະພາສາດຽວກັບທ່ານບໍ່? ກິຈການ 11:20-21 ບອກວ່າ ຄຣິສຕຽນຈາກເກາະກຸບໂຣ ແລະຈາກກີເຣເນກໍໄດ້ມາອາສັຍຢູ່ ທີ່ ອັນຕີໂອເຂັຽເຫມືອນກັນ. ພວກຄຣິສຕຽນຢິວ

ໃນເຂດນີ້ສ່ວນຫລາຍຈະໃຊ້ພາສາກຣີກ; ຟີລິບ ແລະ ຊະເຕຟາໂນ ກໍມາຈາກເຂດນີ້. ການປະກາດໄດ້ຜົນດີ ເພາະພຣະວິນຍານຂອງພຣະເຈົ້າຊົງຢູ່ນຳພວກເຂົາ; ຄົນເປັນຈຳນວນຫລວງຫລາຍໄດ້ກັບໃຈມາເຊື່ອໃນອົງພຣະຜູ້ເປັນເຈົ້າ. ຂ່າວເຣື່ອງການປະກາດໃນເມືອງອັນຕີໂອເຂັຽ ໄດ້ແຜ່ໄປເຖິງ ກຸງເຢຣູຊາເລັມ; ພວກອັກຄະສາວົກຈຶ່ງໄດ້ສົ່ງ ບາຣະນາບາ ໄປສອບສວນຫາຄວາມຈິງ. ເມື່ອເຂົາໄປເຖິງ ອັນຕີໂອເຂັຽ, ບາຣະນາບາຈຶ່ງໄດ້ເຫັນພຣະຄຸນຂອງ ພຣະເຈົ້າຖ້າມກາງຄົນໃນເມືອງນັ້ນ. ເຂົາກໍມີຄວາມປິຕິຍິນດີຫລາຍ ແລະໄດ້ຕັກເຕືອນຄຣິສຕຽນທັງຫລາຍໃຫ້ພາກັນຕິດສນິດ ຢູ່ກັບພຣະເຈົ້າ.

ບາຣະນາບາ ແມ່ນໃຜ? ບາຣະນາບາ ເປັນຄຣິສຕຽນ; ເຂົາເປັນຊາວເລວີ ມາຈາກ ເກາະກຸບໂຣ, ຊື່ເດີມຂອງເຂົາແມ່ນ ໂຢເຊບ; ແຕ່ຄົນທັງຫລາຍເອີ້ນເຂົາວ່າ "ບາຣະນາບາ" ຊຶ່ງແປວ່າຜູ້ມີໃຈອຸດຫນູນ. ເຂົາ ເປັນຄົນດີ ແລະເຕັມໄປດ້ວຍ ພຣະວິນຍານບໍຣິສຸດ ແລະຄວາມເຊື່ອ. ບາຣະນາບາໄດ້ຂາຍນາຂອງຕົນນຶ່ງທົ່ງແລ້ວນຳເງິນມາມອບໃຫ້ພວກອັກຄະສາວົກ ເພື່ອຈະໄດ້ແຈກຢາຍໃຫ້ຄົນທຸກຕາມຄວາມຕ້ອງການ (ກິຈການ 4:37). ບາຣະນາບາ ຍັງມີພຣະພອນເຣື່ອງຮູ້ຈັກສັງເກດ; ເຂົາຮູ້ວ່າສິ່ງໃດຈະເກີດຜົນດີ ແລະເຂົາຮູ້ສັງເກດຄົນອື່ນວ່າ ຈະເປັນຄົນດີ ຫລືຄົນຮ້າຍ. ເຂົາເປັນຜູ້ຊ່ວຍ ໂປໂລໃຫ້ກັບໄປຮັບໃຊ້ທີ່ເມືອງຕາໂຊ. ບາຣະນາບາ ຮູ້ລ່ວງຫນ້າວ່າ ການຮັບໃຊ້ຂອງໂປໂລ ຈະໄດ້ຜົນດີໃນເມືອງທີ່ມີຄົນຢິວປາກພາສາກຣີກ ເພາະ ໂປໂລ ເປັນຄົນມີຄວາມສຳນານ ດ້ານສາສນາ ແລະປະເພນີ ຂອງຊາວຢິວ; ໂປໂລ ສາມາດ ປາກພາສາກຣີກ ແລະຮູ້ຈັກປະເພນີຂອງຊາວກຣີກ.ບາຣະນາບາຮູ້ວ່າ ໂປໂລຈະເປັນປໂຍດຫລາຍໃນການປະກາດ.

ບາຣະນາບາ ມີນ້ຳໃຈຂອງຜູ້ຮັບໃຊ້. ໃນຂະນະ ທີ່ຢູ່ໃນເມືອງຕາໂຊ, ເຂົາໄດ້ໄປຊອກຫາໂປໂລ. ເມື່ອພົບແລ້ວເຂົາກໍໄດ້ພັກຢູ່ໃນເມືອງອັນຕີໂອເຂັຽ ກັບໂປໂລເຖິງ ນຶ່ງປີ. ທັງສອງໄດ້ທຳງານຮ່ວມກັນເພື່ອເສີມສ້າງຄຣິສຕະຈັກໃນເຂດນັ້ນໃຫ້ເຂັ້ມແຂງ. ຖ້າພວກເຮົາຢູ່ໂດດດ່ຽວເຫມືອນຄຣິສຕະຈັກໃນກຸງເຢຣູຊາເລັມ ເຮົາຈະບໍ່ສາມາດເຕີບໃຫຍ່ໄດ້. ການທຳງານຮ່ວມກັນເປັນວິທີນຶ່ງທີ່ຈະຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຕີບໃຫຍ່. ແຕ່ຫນ້າເສັຽດາຍເພາະມີຄຣິສຈັກຫລາຍແຫ່ງໃນເທັກຊັດຄິດວ່າ ເຂົາເຈົ້າບໍ່ຕ້ອງການຄົນອື່ນ ແລະບໍ່ປາຖນາ ທີ່ຈະໄປປະກາດກັບຊາວໂລກທັງຫລາຍທີ່ກຳລັງຈະຈິບຫາຍ. ພວກເຮົາຄວນຈະເອົາຕົວຢ່າງເຣື່ອງການທຳງານຮ່ວມກັນຂອງຄຣິສຕະຈັກ ທີ່ເມືອງອັນຕີໂອເຂັຽ ສຳລັບການນຳຂ່າວປະເສີດໃຫ້ໄປເຖິງທຸກໆຄົນໃນໂລກ(ກິຈການ13:1-3).

<u>ຄຳຖາມ</u>

1. ເປັນຫຍັງຄຣິສຕະຈັກໃນກຸງເຢຣູຊາເລັມຈຶ່ງພາກັນຕຳຫນິ ເປໂຕ?
2. ຄຣິສຕຽນຢິວທີ່ໄດ້ຮັບພິທີຕັດ ໃຊ້ພື້ນຖານຈາກພຣະຄັມພີຕອນໃດ ເພື່ອກ່າວຫາ ເປໂຕ?
3. ເປັນຫຍັງເປໂຕ ຈຶ່ງບໍ່ຕໍ່ຕ້ານພຣະວິນຍານບໍຣິສຸດບໍ່ໃຫ້ມາເຖິງພວກຄົນຕ່າງຊາດ?
4. ຄຣິສຕະຈັກທີ່ເມືອງ ອັນຕີໂອເຂັຽຢູ່ໃນສະພາບໃດ?
5. ຄຣິສຕະຈັກທີ່ອັນຕີໂອເຂັຽປຽ່ນແປງແນວໃດ ເພາະຣິດອຳນາດຂອງພຣະເຈົ້າ?
6. ຄຣິສຕະຈັກຂອງທ່ານຈະຕ້ອງປຽ່ນແປງແນວໃດເພື່ອຈະເຫັນຜົນຄ້າຍຄືກັນນັ້ນ?

## ບົດຮຽນທີ 9

## ຕ້ອນຮັບທຸກຄົນເຫມືອນດັ່ງພຣະເຈົ້າໄດ້ຊົງກະທຳ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ກິຈການ 15:1-22
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ກິຈການ 13:1-15:35
ຈຸດສຳຄັນຂອງບົດຮຽນນີ້: ການປະຊຸມໃນກຸງເຢຣູຊາເລັມຍອມຮັບຮູ້ວ່າຂ່າວປະເສີດເປັນຂອງທຸກໆຄົນຜ່ານພຣະຄຸນທາງຄວາມເຊື່ອແລະກອງປະຊຸມໄດ້ຂໍໃຫ້ຄຣິສຕຽນຊາວຕ່າງຊາດພາກັນຫລີກເວັ້ນການປະພຶດທີ່ຈະກີດກັ້ນຄວາມສັມພັນ.

ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ທີ່ເຮົາໄດ້ເພີ້ມເຕີມໃສ່ຂ່າວປະເສີດເຣື່ອງຄວາມລອດພົ້ນ? ມີຫຍັງແດ່ທີ່ຄຣິຕະຈັກຂອງທ່ານໄດ້ເຮັດເພື່ອໃຫ້ຄວາມສັມພັນແຜ່ໄປເຖິງຄົນທຸກຄົນທີ່ພຣະເຈົ້າໄດ້ຊົງຮັບໄວ້ແລ້ວ?
ຈຸດປະສົງຂອງບົດຮຽນນີ້: ເພື່ອທ່ານແລະຄຣິສຕະຈັກຂອງທ່ານຈະຕຽມພ້ອມທີ່ຈະຕ້ອນຮັບຄົນທັງຫລາຍທີ່ພຣະເຈົ້າໄດ້ຊົງຮັບໄວ້ແລ້ວ.

| ເຣື່ອງທີ່ກຳລັງເນັ້ນກັນໃນເທັກຊັດ: |
|---|
| . ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດ ກັບທຸກຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ |
| . ຈັດຕຽມຄຣິສຕຽນເພື່ອການຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ |
| . ຊ່ວຍຄຣິສຕະຈັກທີ່ມີຢູ່ແລ້ວໃຫ້ເຂັ້ມແຂງ ແລະ ເປີດຄຣິສຕະຈັກໃຫມ່ |

### ຄຳນຳ

ພວກເຮົາຄວນຈະຍອມຮັບທຸກຄົນເຫມືອນດັ່ງພຣະເຈົ້າຜູ້ໄດ້ຊົງຮັບເຮົາແລ້ວ; ພວກເຮົາຄວນແກ້ໄຂຄວາມແຕກຕ່າງກັນຂອງພວກເຮົາແບບຄຣິສຕຽນ; ແລະພວກເຮົາຄວນເຮັດວຽກເຣື່ອງການປະກາດຂ່າວປະເສີດຕໍ່ໄປ ບັນຫາມັກຈະມີຢູ່ໃນທຸກໆອົງການຈັດຕັ້ງ, ແມ່ນແຕ່ໃນຄຣິສຕະຈັກກໍຫລີກເວັ້ນບໍ່ໄດ້. ໃນຄຣິສຕະຈັກທີ່ກຳລັງເຕີບໃຫຍ່ແລະມີການປຽ່ນແປງ, ຄົນບາງກຸ່ມອາດຈະມີການຕໍ່ສູ້ເພື່ອຮັກສາສິ່ງທີ່ເຄີຍເຮັດມາກ່ອນຫລື ຮີດຄອງທີ່ເຄີຍປະຕິບັດມາ.

ໃນບົດຮຽນພາກນີ້ເຮົາຈະໄດ້ເຫັນບັນຫາທີ່ເກີດຂຶ້ນໃນຄຣິສຕະຈັກສມັຍແລກທີ່ຖືກບັນທຶກໄວ້ໃນພຣະທັມ ກິຈການ. ການເຕີບໃຫຍ່ຂອງຄຣິສຕະຈັກໃນເມືອງຊາມາເຣັຽ, ເມືອງອັນຕີໂອເຂັຽ ແລະເມືອງອື່ນໆ ເຮັດໃຫ້ຄຣິສຕະຈັກທີ່ກຸງເຢຣູຊາເລັມມີຄວາມຫ່ວງໃຍ. ຄຣິສຕະຈັກໃນກຸງເຢຣູຊາເລັມມີຫນ້າທີ່ດູແລການເຮັດວຽກ ແລະການສັ່ງສອນຂອງ ຄຣິສຕະຈັກໃນທົ່ວເມືອງຕ່າງໆ. ຄົນກຸ່ມນຶ່ງໃນຄຣິສຕະຈັກເຢຣູຊາເລັມຄິດວ່າ ທຸກໆ ຄຣິສຕະຈັກ, ຊາວຢິວ ແລະຊາວຕ່າງຊາດ,ຈະຕ້ອງເຮັດທຸກຢ່າງຕາມຕົວຢ່າງຂອງຄຣິສຕະຈັກທີ່ກຸງເຢຣູຊາເລັມ. ບັນຫາໃຫຍ່ທີ່ສຸດໃນຕອນນີ້ ແມ່ນເຣື່ອງພິທີຕັດຂອງຄົນຢິວ. ຄຣິສຕະຈັກເກີດມີການແບ່ງພວກເພາະບັນຫານີ້ ສະນັ້ນຈະຕ້ອງມີການແກ້ໄຂເພື່ອ ຢັບຢັ້ງການເຂົ້າໃຈຜິດແລະເພື່ອຮັກສາຄວາມສັມພັນ.

**ເລີ້ມດ້ວຍຄົນຜູ້ດຽວ**

ຄົນສ່ວນຫລາຍຄິດວ່າ ຄຣິສຕະຈັກຈະຕ້ອງມີຄົນຫລາຍສົມຄວນ ແລະມີຖານະດ້ານການເງິນເຂັ້ມແຂງ ກ່ອນທີ່ເຂົາເຈົ້າຈະສາມາດໄປສ້າງຄຣິສຕະຈັກບ່ອນໃຫມ່ເພີ້ມເຕີມ. ຄວາມຈິງແລ້ວການສ້າງຄຣິສຕະຈັກໃຫມ່ ຫລືການສ້າງກຸ່ມໃຫມ່ສາມາດຈະເລີ້ມຂຶ້ນໄດ້ ຈາກຄົນຜູ້ນຶ່ງທີ່ຍອມຮັບການຊົງເອີ້ນຂອງພຣະເຈົ້າໃຫ້ອອກໄປຮັບໃຊ້.

## ບັນຫາໃນອັນຕີໂອເຂັຽ (15:1-3)

ມີຄົນພວກນຶ່ງທີ່ມາເມືອງອັນຕີໂອເຂັຽ ໄດ້ເລີ້ມສັ່ງສອນວ່າ ຖ້າຜູ້ໃດບໍ່ຮັບພິທີຕັດຕາມຮີດຄອງຂອງໂມເຊ ຈະບໍ່ພົ້ນໄດ້ (15:1); ເມື່ອເຣື່ອງນີ້ໄປເຖິງໂປໂລແລະບາຣະນາບາ, ພວກເຂົາທັງສອງກໍໄດ້ໂຕ້ຖຽງກັບຄົນພວກນັ້ນຢ່າງຮ້າຍແຮງ. ໂປໂລຕອບເຂົາເຫລົ່ານັ້ນວ່າ ທຸກຄົນທີ່ເຊື່ອວາງໃຈໃນພຣະເຢຊູເຈົ້າຈະໄດ້ພົ້ນ (16:31). ເມື່ອບໍ່ສາມາດລົງລອຍກັນໄດ້, ຄຣິສຕະຈັກຈຶ່ງຕົກລົງສົ່ງ ໂປໂລ ແລະ ບາຣະນາບາໄປຫາລືກັນກັບພວກອັຄສາວົກ ແລະພວກເຖົ້າແກ່ທີ່ກຸງເຢຣູຊາເລັມ (15:3).

ສິ່ງທີ່ຄວນຈົດຈຳໃນຕອນນີ້ຄື: 1. ເວລາໃດຄຣິສຕະຈັກຂອງພຣະເຈົ້າກຳລັງຈເຣີນກ້າວຫນ້າ, ມານຊາຕານຈະສອດເຂົ້າມາສ້າງຄວາມແຕກແຍກເພື່ອຈະທຳລາຍວຽກງານ, 2. ເຮົາຈະຕ້ອງປ້ອງກັນສິ່ງທີ່ຖືກຕ້ອງ ແລະຕໍ່ສູ້ກັບຄຳສອນທີ່ຜິດ, 3. ການຂໍຄວາມຊ່ວຍເຫລືອຈາກຄົນພາຍນອກ (ທີ່ເປັນຄຣິສຕຽນ) ເພື່ອແກ້ໃຂບັນຫາເປັນສິ່ງຈຳເປັນຖ້າຄົນພາຍໃນແກ້ໃຂບັນຫານັ້ນບໍ່ໄດ້.

ຄຣິສຕະຈັກຂອງພຣະເຈົ້າເກີດການແຕກແຍກກັນເພາະບັນຫາຕ່າງໆ; ບາງຄັ້ງບັນຫາອາດຈະເປັນພຽງການເລືອກສີພົມສຳລັບຫ້ອງນະມັສການ. ຄົນກຸ່ມນຶ່ງມັກສີແດງ, ຄົນອີກກຸ່ມນຶ່ງມັກສີຂຽວ; ການບໍ່ຍອມລົງເອີ່ຍກັນເຮັດໃຫ້ຫລາຍຄົນບໍ່ຍອມມານະມັສການທີ່ຫ້ອງນັ້ນເພາະເພິ່ນບໍ່ມັກສີພົມ. ຫລາຍຄົນເຫັນເຣື່ອງປະເພດນີ້ເປັນເຣື່ອງສຳຄັນ ຈົນຍອມທຳລາຍວຽກງານຂອງພຣະເຈົ້າ ແລະການປະກາດຂ່າວປະເສີດໃຫ້ກັບຄົນທັງຫລາຍທີ່ກຳລັງເດີນທາງໄປສູ່ຄວາມຫາຍຍະນະ.

## ການຕ້ອນຮັບຢ່າງອົບອຸ່ນແລະຂໍ້ກ່າວຫາ (15:4 -5)

ໂປໂລ ແລະ ບາຣະນາບາ ໄດ້ຮັບການຕ້ອນຮັບເປັນຢ່າງດີຈາກ ພວກອັຄສາວົກ ແລະພວກເຖົ້າແກ່ທີ່ຄຣິສຕະຈັກເຢຣູຊາເລັມ. ທຸກຄົນມີຄວາມຊົມຊື່ນຍິນດີທີ່ໄດ້ຟັງຄຳລາຍງານຂອງເຂົາທັງສອງເພາະພຣະເຈົ້າຜູ້ຊົງສະຖິດຢູ່ໄດ້ກະທຳຫລາຍໆຢ່າງຜ່ານ ໂປໂລ ແລະ ບາຣະນາບາ. ແຕ່ພວກຟາຣີຊາຍທີ່ເຊື່ອແລ້ວ ເລີ້ມເປັນຜູ້ສ້າງບັນຫາ ພວກເຂົາປາຖນາໃຫ້ຄົນຕ່າງຊາດທີ່ມາເຊື່ອເຂົ້າຮັບພິທີຕັດ ແລະໃຫ້ຖືຮັກສາພຣະບັນຍັດຂອງໂມເຊ.

ພວກຟາຣີຊາຍຫລາຍໆຄົນໄດ້ກັບໃຈມາເຊື່ອໃນອົງພຣະເຢຊູຄຣິດເຈົ້າ; ແຕ່ຄົນພວກນີ້ບໍ່ຍອມປະຖິ້ມປະເພນີ ແລະ ຮີດຄອງ ອັນເກົ່າແກ່ທີ່ເຄີຍປະຕິບັດມາ. ພວກເຂົາພະຍາຍາມທີ່ຈະປ້ອງກັນພຣະບັນຍັດທີ່ໂມເຊເຄີຍສັ່ງໄວ້; ເຂົາພຍາຍາມທີ່ຈະຮັກສາ ພິທີຕັດ ເພາະເຂົາຄິດວ່າພິທີຕັດນັ້ນເປັນສິ່ງຈຳເປັນເພື່ອຄວາມລອດພົ້ນ.

<u>ເປໂຕກ່າວປາສັຍຕໍ່ກອງປະຊຸມ (15:6-11)</u>

ຫລັງຈາກມີການໂຕ້ຖຽງກັນຢ່າງຍືດຍາວ, ເປໂຕຈຶ່ງໄດ້ຖແລງການຕໍ່ທີ່ປະຊຸມວ່າ: 1. ພຣະເຈົ້າໄດ້ຊົງເລືອກເຂົາໃຫ້ໄປປະກາດກັບຊາວຕ່າງຊາດທີ່ບ້ານຂອງໂກເນຣີໂອ (15:7), 2. ພຣະເຈົ້າໄດ້ໂຜດຄົນຕ່າງຊາດ, ບໍ່ແມ່ນເປໂຕເຮັດໄດ້ເອງ, ແລະພຣະອົງບໍ່ໄດ້ຊົງສັ່ງໃຫ້ພວກເຂົາຮັກສາພຣະບັນຍັດ ຫລື ຖືຮີດຄອງຂອງຊາວຢິວ, 3. ເປັນຫຍັງພວກທ່ານຈຶ່ງປະສົງທີ່ຈະເອົາແອກໃສ່ຄໍພວກສິດ ຊຶ່ງແອກນັ້ນຊາວຢິວເອງກໍແບກບໍ່ໄຫວ, 4.ຄວາມພົ້ນໄດ້ມາໂດຍພຣະຄຸນຂອງພຣະເຈົ້າ ແລະ ເປັນຂອງພຣະຣາຊທານຈາກອົງພຣະເຢຊູຄຣິດ(15:11). ເມື່ອໄດ້ຍິນດັ່ງນັ້ນທີ່ປະຊຸມກໍພາກັນມິດງຽບລົງ ເພາະທຸກໆຄົນນັບຖື ແລະຢຳເກງເປໂຕ.

<u>ບາຣະນາບາ ແລະໂປໂລໃຫ້ຄຳພະຍານ (15:12)</u>

ບາຣະນາບາ ແລະໂປໂລມີໂອກາດອີກເທື່ອນຶ່ງເພື່ອເຫລົ່າເຣື່ອງຫມາຍສຳຄັນແລະສິ່ງອັສຈັນທີ່ພຣະເຈົ້າໄດ້ຊົງກະທຳຜ່ານເຂົາໃນກຸ່ມຄົນຕ່າງຊາດ. ຈຸດສຳຄັນໃນຄຳພະຍານມີດັ່ງນີ້: 1. ພຣະເຈົ້າເປັນຜູ້ຊົງເລືອກໂປໂລ ແລະບາຣະນາບາໃຫ້ເປັນຜູ້ຮັບໃຊ້ໃນພາຣະກິດຂອງພຣະອົງ, 2. ພຣະເຈົ້າໄດ້ຊົງເຮັດສິ່ງອັສຈັນຜ່ານພວກເຂົາທັງສອງ, 3. ໂປໂລ ແລະບາຣະນາບາ ບໍ່ໄດ້ມາເພື່ອປ້ອງກັນຕົວເອງຕໍ່ກອງປະຊຸມ ແຕ່ມາເລົ່າເຣື່ອງທີ່ພຣະເຈົ້າໄດ້ ຊົງກະທຳໃຫ້ທຸກຄົນໄດ້ຮູ້.

ພວກຄຣິສຕຽນຢິວບໍ່ສາມາດຈະປະຕິເສດວ່າທຸກຢ່າງທີ່ໄດ້ຍິນມາແມ່ນການກະທຳຂອງພຣະເຈົ້າ. ຄຳພະຍານມີນ້ຳຫນັກ ແລະຮິດເດດໃນການຊ່ວຍຜູ້ຟັງໃຫ້ໄດ້ເຫັນຄວາມຈິງ. ຄຳພະຍານຄືຄຳບອກກ່າວຂອງຜູ້ທີ່ເຊື່ອໃນເຣື່ອງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳໃນຊີວິດເຂົາ. ບາງຄົນອາດຈະບໍ່ຍອມຮັບຄຳພະຍານ ແຕ່ເຂົາກໍບໍ່ສາມາດປະຕິເສດຄວາມຈິງໄດ້. ຄຣິສຕຽນມີຄຳພະຍານເຣື່ອງຄວາມລອດພົ້ນທີ່ພຣະເຈົ້າຊົງປະທານຜ່ານອົງພຣະເຢຊູຄຣິດ ທີ່ຈະໄປບອກໃຫ້ກັບຊາວໂລກທີ່ກຳລັງຫລົງທາງຢູ່ໃນປັດຈຸບັນນີ້.

<u>ຢາໂກໂບປ້ອງກັນເປໂຕ (15:13-22)</u>

ຢາໂກໂບ, ຊຶ່ງເປັນຜູ້ນຳຄຣິສຕະຈັກທີ່ກຸງເຢຣູຊາເລັມ, ຈຶ່ງກ່າວຕໍ່ກອງປະຊຸມວ່າ: ພຣະເຈົ້າຊົງໃຊ້ ຊີເມໂອນ ຫລື ເປໂຕ ໃຫ້ໄປນຳຊາວຕ່າງຊາດໃຫ້ເຂົ້າມາເປັນຂອງພຣະອົງ; ທຸກຢ່າງໄດ້ເປັນໄປຕາມທີ່ຜູ້ປະກາດພຣະທັມໄດ້ຂຽນໄວ້ໃນ (15:16-18). ຢາໂກໂບ ເປັນຜູ້ນຳຄຣິສຕະຈັກທັງຫມົດທີ່ກຸງເຢຣູຊາເລັມ; ເຂົາເປັນລູກຂອງມາຣີອາ ແລະ ເປັນນ້ອງຊາຍຂອງອົງພຣະເຢຊູຄຣິດ. ທຸກໆຄົນນັບຖື ຢາໂກໂບ ເພາະເປັນຜູ້ນຳທີ່ມີຄວາມສາມາດໃນການຊ່ວຍແກ້ໄຂບັນຫາຕ່າງໆ. ຢາໂກໂບ ເຕືອນທີ່ປະຊຸມເຖິງເຣື່ອງທີ່ເປໂຕໄດ້ເວົ້າຜ່ານໄປ ແລະເຂົາໄດ້ບອກທີ່ປະຊຸມວ່າພຣະເຈົ້າມີຄວາມຫ່ວງໃຍຕໍ່ຄົນຕ່າງຊາດເຫມືອນກັນ ເພາະພວກເຂົາກໍເປັນໄພ່ພົນຂອງ

ພຣະອົງ (15:14).
ຢາໂກໂບຮູ້ດີວ່າທຸກຢ່າງທີ່ເຂົາສເນີຕໍ່ກອງປະຊຸມຈະຕ້ອງເປັນທີ່ພໍໃຈຂອງທຸກໆຝ່າຍ, ເປັນສິ່ງທີ່ຖືກຕ້ອງ, ແລະ ເປັນສິ່ງທີ່ຈະຊ່ວຍຮັກສາຄວາມສັມພັນຂອງກຸ່ມຄຣິສຕຽນທຸກກຸ່ມ, ບໍ່ພຽງແຕ່ໃນເຂດ ເຢຣູຊາເລັມເທົ່ານັ້ນ ແຕ່ ຈະໄປເຖິງທີ່ສຸດປາຍຂອງໂລກດ້ວຍ. ເພາະຄຣິສຕະຈັກມີພາລະທີ່ຈະຕ້ອງປະກາດຂ່າວປະເສີດກັບຄົນທຸກຊາດ ແລະທຸກພາສາ; ສິ່ງເຫລົ່ານັ້ນຄືພຣະປະສົງຂອງພຣະຜູ້ເປັນເຈົ້າສຳລັບພວກເຮົາທຸກໆຄົນ.

ຢາໂກໂບ ເຕືອນທີ່ປະຊຸມບໍ່ໃຫ້ຣົບກວນຄົນຕ່າງຊາດທີ່ກັບໃຈມາຫາພຣະເຈົ້າຈົນເກີນໄປ; ແຕ່ໃຫ້ແນະນຳສັ່ງສອນ ພວກເຂົາເຈົ້າໃນການດຳເນີນຊີວິດຕາມທາງຄຣິສຕຽນທີ່ຖືກຕ້ອງ. ຄຣິສຕຽນຢິວ ຮູ້ດີວ່າ ຄຣິສຕຽນຊາວຕ່າງ ຊາດບໍ່ໄດ້ຖິ້ມນິສັຍ ແລະການປະພຶດອັນເກົ່າໆຂອງເຂົາເຈົ້າຫລັງຈາກທີ່ມີການກັບໃຈໃຫມ່ແລ້ວ. ການປະພຶດຂອງ ຊາວຕ່າງຊາດບາງຢ່າງກໍເປັນແນວທາງຂອງສັງຄົມ ແລະບາງຢ່າງກໍເປັນແນວທາງຂອງສາສນາ ແຕ່ທຸກຢ່າງ ບໍ່ແມ່ນແນວທາງຂອງຄຣິສຕຽນ ຫລື ແນວທາງໃນພຣະຄັມພີ.

ມີຫລາຍໆຄົນຢາກຈະເປັນຄຣິສຕຽນ ແຕ່ເຂົາເຈົ້າບໍ່ຢາກປະຖິ້ມການປະພຶດ ປະຕິບັດທີ່ເຄີຍກະທຳມາກ່ອນ; ບາງ ຢ່າງກໍເປັນການທຳຄວາມຜິດບາບແບບເລັກໆນ້ອຍໆທີ່ເຂົາເຈົ້າອາດຈະຖືວ່າບໍ່ສຳຄັນ. ແຕ່ຄວາມຈິງແລ້ວສິ່ງ ເລັກນ້ອຍເຫລົ່ານີ້ ຈະເປັນອຸປສັກໃນການເປັນພະຍານເຣື່ອງພຣະເຈົ້າໃຫ້ກັບຄົນອື່ນໆ. ຊີວິດທີ່ຈະເປັນພະຍານໄດ້ ຈະຕ້ອງເປັນຊີວິດທີ່ມີການປ່ຽນແປງແລ້ວ; ການທີ່ເຮົາຈະເອີ້ນຕົວເອງວ່າ "ຄຣິສຕຽນ" ແຕ່ຍັງດຳເນີນຊີວິດ ເຫມືອນຜູ້ຄົນທີ່ບໍ່ຮູ້ພຣະເຈົ້ານັ້ນເປັນການເຂົ້າໃຈຜິດ, ເພາະນິສັຍ ແລະການປະພຶດນັ້ນບໍ່ເຫມາະສົມກັບຄຣິສຕຽນ.

ທ້າຍສຸດ, ຢາໂກໂບ ສເນີໃຫ້ມີການຂຽນຈົດຫມາຍໄປເຖິງຄຣິສຕະຈັກທີ່ເກີດໃຫມ່ທັງຫມົດເຣື່ອງໃຫ້ຄຣິສຕຽນ ຊ່ວຍເຫລືອຊຶ່ງກັນແລະກັນ, ບໍ່ໃຫ້ຣົບກວນກັນ ຫລືຕິຕຽນກັນ. ຢ່າຣົບກວນກັນເຣື່ອງພຣະບັນຍັດ ແລະເຣື່ອງພິ ທີຕັດອີກຕໍ່ໄປ. ແຕ່ໃຫ້ສັ່ງສອນຄຣິສຕຽນໃຫມ່ໃຫ້ຫລີກເວັ້ນຈາກການໄຫວ້ພຣະທຽມ, ຈາກການຫລິ້ນຊູ້, ຈາກ ການກິນສັດຕາຍຮັດຄໍ, ແລະຈາກການກິນເລືອດ ເພາະ ສິ່ງເຫລົ່ານີ້ເປັນສິ່ງທີ່ຊາວຕ່າງຊາດເຄີຍກະທຳ ມາ.
ຄຳສເນີຂອງຢາໂກໂບ ໄດ້ຮັບການຕ້ອນຮັບເປັນຢ່າງດີ ຈາກຄຣິສຕຽນຢິວ ແລະຄຣິສຕຽນຊາວຕ່າງຊາດ.
ທີ່ປະຊຸມໄດ້ຮັບເອົາຄຳສເນີມາເປັນຄວາມເຫັນຂອງທີ່ປະຊຸມແລະໄດ້ມອບຈົດຫມາຍໃຫ້ໂປໂລແລະບາຣະນາບາ ນຳໄປ ໃຫ້ເມືອງອັນຕິໂອເຂັຽ. ເມື່ອພວກຄຣິສຕຽນທີ່ອັນຕິໂອເຂັຽ ໄດ້ອ່ານຈົດຫມາຍແລ້ວ
ພວກເຂົາກໍມີຄວາມຍິນດີໃນຄຳຫນູນໃຈ ແລະການສັ່ງສອນເຫລົ່ານັ້ນດ້ວຍ(15:31).

<u>ຄຳຖາມ</u>

1. ທ່ານສັງເກດເຫັນວ່າພຣະເຈົ້າຊົງຮັກຄົນຊາດນຶ່ງ ຫລາຍກ່ວາຄົນອີກຊາດນຶ່ງບໍ່, ໂດຍສເພາະເຣື່ອງຄວາມ ລອດພົ້ນ?
2. ເປັນຫຍັງຈຶ່ງຕ້ອງມີການປະຊຸມທີ່ກຸງເຢຣູຊາເລັມລະຫວ່າງຜູ້ນຳຂອງຊາວຢິວແລະຊາວຕ່າງຊາດ?
3. ເປັນຫຍັງຄຣິສຕຽນຢິວຈຶ່ງຢາກໃຫ້ຄຣິສຕຽນຊາວຕ່າງຊາດນັບຖືຮີດຄອງຂອງຊາວຢິວ?
4. ເປັນຫຍັງການສົ່ງຈົດຫມາຍໄປເຖິງຄຣິສຕະຈັກຕ່າງຊາດຈຶ່ງໄດ້ຜົນດີ?
5. ທ່ານຄິດວ່າຄຣິສຕະຈັກໃນສມັຍນີ້ ຄວນຈະມີກົດລະບຽບເພີ້ມຂຶ້ນຫລື ຄວນຕັດລະບຽບໃຫ້ຫນ້ອຍລົງໄປອີກ ໃນການຮັບຄົນ?

## ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ແກ່ທຸກໆຄົນ
## ບົດຮຽນທີ 10

## ເຮັດຢ່າງໃດຈຶ່ງຈະລອດພົ້ນໄດ້?

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ກິຈການ 16:11-15, 22-34
**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ກິຈການ 15:36-16:40
**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມລອດພົ້ນແມ່ນເພື່ອທຸກໆຄົນທີ່ມີຄວາມເຊື່ອໃນພຣະຄຣິດ

**ຄໍາຖາມເພື່ອການສໍາຣວດ:** ຂ້ອຍຈະເຮັດຫຍັງແດ່?-- ຜູ້ອື່ນໆເດ?--ເພື່ອຈະໄດ້ຮັບຄວາມລອດພົ້ນ
**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຈະແຈ້ງວ່າຜູ້ເຊື່ອໄດ້ຮັບຄວາມລອດຢ່າງໃດ

### ຄໍານໍາ

ການປ່ຽນແປງຂອງນາງລີເດັຽ ແລະຂອງນາຍຄຸກ, ໄດ້ສະແດງໃຫ້ເຫັນວ່າ ຄວາມລອດພົ້ນ ແມ່ນເພື່ອທຸກໆຄົນ ທີ່ມີຄວາມເຊື່ອໃນພຣະເຢຊູຄຣິດ.

ຄອບຄົວນຶ່ງເປັນຄອບຄົວທີ່ມີຄວາມຫ້າວຫັນ,ຂຍັນໄປໂບດທຸກໆອາທິດ,ປະກອບສ່ວນໃນກິຈກັມຕ່າງໆ,ຖວາຍຊັບໃຫ້ຄຣິສຕະຈັກ, ແລະກໍເປັນຜູ້ສໍາຄັນໃນຄຣິສຕະຈັກອີກດ້ວຍ, ມີຈຸດປະສົງຈະອອກໄປປ່າວປະກາດ (ມິດຊັນນາຣີ) ຢູ່ຕ່າງປະເທດ. ແຕ່ວ່າຄອບຄົວທີ່ຢູ່ຂ້າງໆ ເຂົາບໍ່ເຄີຍອອກໄປຢ້ຽມຢາມ ບໍ່ເຄີຍສອບຖາມແລະກໍບໍ່ເຄີຍຖາມສະບາຍດີ ເຂົາບອກວ່າ ຄອບຄົວພວກນີ້ບໍ່ເປັນຄຣິສຕຽນ ພວກເຂົາບໍ່ຮູ້ຈັກພຣະເຈົ້າ. ຂ້າພະເຈົ້າກໍສົງສັຍຢູ່ວ່າ ເວລາພວກເຂົາອອກໄປເປັນມິດຊັນນາຣີແລ້ວ ພວກເຂົາຈະພົບແຕ່ຄຣິສຕຽນບໍ່.

ກ່ອນຈະອອກຈາກເມືອງອັນຕີໂອກ ບາຣະນາບາແລະໂປໂລມີຄວາມບໍ່ເຂົ້າໃຈກັນ ຈຶ່ງໄດ້ແຍກທາງກັນໄປ. ບາຣະນາບາໄປກັບມາຣະໂກ(ໂຢຮັນ) ກຈ. 15:39 ມຸ້ງຫນ້າໄປທາງເກາະກຸບໂຣ. ແຕ່ສ່ວນໂປໂລໄປກັບຊີລາ ມຸ້ງຫນ້າໄປທາງເມືອງຟີລິບປອຍ. ເມືອງຟີລິບປອຍເປັນເມືອງໃຫຍ່ຂຶ້ນກັບມາເກໂດເນັຽ ປະຊາຊົນສ່ວນຫລາຍແມ່ນຍົກຍ້າຍມາຈາກກຸງໂຣມແລະມາຕັ້ງຖິ່ນຖານຢູ່ທີ່ນັ້ນ. ຄົນຢິວມີຈໍານວນນ້ອຍ

ເມື່ອໂປໂລແລະຊີລາໄປເຖິງຟີລິບປອຍ ເຂົາເຈົ້າກໍໄປຊອກຫາກຸ່ມຂອງພວກຢິວທີ່ເຊື່ອໃນພຣະເຈົ້າ ກໍເລີຍໄປພົບກຸ່ມຜູ້ຍິງ(ພວກຢິວ) ຮ່ວມພາກັນນະມັສການພຣະເຈົ້າຢູ່ແຄມນໍ້າ. ເມື່ອກ່າວຕ້ອນຮັບແລ້ວ ຍິງພວກນັ້ນກໍໄດ້ເຊີນອາຈານທີ່ມາຢ້ຽມຢາມຂຶ້ນກ່າວພຣະທັມຕາມທັມນຽມຂອງພວກຢິວ. ໂປໂລກໍໄດ້ກ່າວພຣະທັມກ່ຽວກັບການສິ້ນພຣະຊົນຂອງພຣະເຢຊູ, ແລະການສິ້ນພຣະຊົນນັ້ນກໍເພື່ອຜູ້ທີ່ອ່ອນແອ, ຜູ້ທີ່ຍັງບໍ່ທັນຮູ້ຈັກກັບພຣະເຈົ້າ ຈະເປັນຄົນຢິວຫລືຄົນຕ່າງຊາດກໍຕາມ. ໃນການເທສນານີ້ ບາງເທື່ອໂປໂລກໍອາດຈະກ່າວຄໍາພຍານຂອງຕົວເອງໄປດ້ວຍ. (ກຈ 9:1-18)

## <u>ມີຄຸນຄ່າຫລາຍກວ່າສິ່ງອື່ນ (16:14-15)</u>

ໃນກຸ່ມພວກຜູ້ຍິງທັງຫລາຍນີ້, ມີຍິງຄົນນຶ່ງຊື່ວ່າ ລີເດັຽ. ລາວເປັນນັກການຄ້າ. ລາວເປັນຄົນຕ່າງຊາດ. ລາວເປັນຊາວເມືອງທົວຽໄທຣະ.ລາວເປັນຄົນຂາຍຜ້າສີມ່ວງທີ່ຍ້ອມແລ້ວ (ເປັນຜ້າທີ່ມີຣາຄາແພງຫລາຍ) ລາວເປັນຄົນຮັ່ງມີ....ນາງລີເດັຽແລະຄອບຄົວທັງຫມົດຊຶ່ງຣວມທັງຜູ້ຮັບໃຊ້ ແລະຜູ້ທີ່ຮ່ວມຂາຍຜ້າກໍໄປຮ່ວມໃນການນະມັສການດ້ວຍ. ບາງເທື່ອອາດມີຄົນຍືອບາງຄົນໄດ້ເຊື້ອເຊີນລາວໄປຮ່ວມ. ລາວຕັ້ງໃຈຟັງຄຳສອນຂອງພຣະເຈົ້າ ຊຶ່ງຜ່ານການເທສນາຂອງໂປໂລ, ລາວຟັງແລ້ວເອົາເຂົ້າໄປໃນສມອງ, ຕຶກຕອງແລ້ວກໍເອົາໄປໄວ້ທີ່ຫົວໃຈ. ເມື່ອລາວເຫັນວ່າເປັນຄວາມຈິງແລ້ວລາວຈຶ່ງໄດ້ຕ້ອນຮັບເອົາພຣະເຈົ້າມາເປັນພຣະຜູ້ຊ່ວຍໃຫ້ລອດຂອງລາວ ແລະກໍໄດ້ຮັບສີນບັບຕິສມາໃນທັນໃດນັ້ນໂລດ. ແລະລາວກໍໄດ້ກາຍເປັນຜູ້ທີ່ເຂັ້ມແຂງ ແລະເປັນຕົວຢ່າງໃນຄຣິສຕະຈັກ.

ການຕັ້ງໃຈຮັບຟັງເປັນສິ່ງສຳຄັນທີ່ສຸດໃນການນະມັສການພຣະເຈົ້າ ແລະກໍເປັນຕົວຢ່າງທີ່ດີສຳລັບຜູ້ອື່ນດ້ວຍ. ພຣະຄຳຂອງພະເຈົ້າຈະເຂົ້າໄປສູ່ຈິດໃຈໄດ້ກໍຕໍ່ເມື່ອເຮົາເປີດໃຈຮັບຟັງ, ການເປີດໃຈຮັບຟັງນັ້ນກໍຄືການເປີດໃຈໃຫ້ພຣະວິນຍານບໍຣິສຸດຊາບຊຶມເຂົ້າໄປໃນຫົວໃຈ.ຫລັງຈາກນາງລີເດັຽໄດ້ຕ້ອນຮັບເອົາພຣະເຈົ້າແລ້ວ, ລາວກໍຢາກປະຕິບັດຕໍ່ຜູ້ປະກາດພຣະທັມ. ລາວໄດ້ເຊື້ອເຊີນໂປໂລແລະຊີລາໄປຢາມເຮືອນຂອງລາວ ແລະໃນທີ່ສຸດເຮືອນຂອງລາວກໍກາຍເປັນສະຖານທີ່ນະມັສການພຣະເຈົ້າໃນເມືອງຟີລິບປອຍ.

ຈະເປັນການດີຫລາຍສ່ຳໃດ ໃນການທີ່ເຮົາເຊື້ອເຊີນກຸ່ມຮຽນພຣະຄັມພີມາຮຽນທີ່ເຮືອນຂອງເຮົາ. ພຣະພອນໃນການປະຕິບັດຮັບໃຊ້, ພຣະພອນໃນການສຶກສາພຣະທັມ, ພຣະພອນໃນດ້ານສັງຄົມ, ພຣະພອນໃນດ້ານການປ່າວປະກາດ..ຈະມີສິ່ງໃດອີກແດ່ບໍ່ ທີ່ຈະມີຄຸນຄ່າຫລາຍກວ່າທ່ານໄດ້ຮັບພຣະພອນຂອງພຣະເຈົ້າ. ສ່ວນນາງລີເດັຽນັ້ນລາວບໍ່ເຫັນສິ່ງໃດອີກແລ້ວນອກຈາກພຣະເຈົ້າ.

## <u>ທັມມະໂຮງກາຍມາເປັນຄຣິສຕຽນ (16:16-32)</u>

ໃນຂະນະທີ່ຢູ່ໃນເມືອງຟີລິບປອຍນັ້ນ, ໂປໂລແລະຊີລາກໍໄດ້ປົວຍິງຄົນນຶ່ງ ຊຶ່ງມີຜີຫມໍດູເຂົ້າສິງ. ນາງນີ້ໄດ້ຮັບໃຊ້ຫາເງິນໃຫ້ນາຍຂອງຕົນໄດ້ເປັນຈຳນວນຫລວງລາຍ. ແຕ່ເມື່ອປົວແລ້ວ ພວກນາຍຂອງຍິງນັ້ນກໍເຫັນວ່າຕົວເອງຈະບໍ່ມີລາຍໄດ້ ຈຶ່ງຈັບໂປໂລແລະຊີລາໄປຫາຜູ້ປົກຄອງແລະກໍໄດ້ເວົ້າວ່າ, "ສອງຄົນນີ້ລະ ໄດ້ກໍ່ການວຸ້ນວາຍຂຶ້ນໃນເມືອງຂອງເຮົາ. ເຂົາເປັນຊາວຍິວປະກາດຍັງຮີດຄອງປະເພນີອັນຜິດກົດທີ່ພວກເຮົາຊາວໂຣມ ຈະຮັບເອົາຫລືຂັບຕາມບໍ່ໄດ້. "(ກຈ 16:20-21) ປະຊາຊົນກໍລຸກຮື້ຂຶ້ນ ແລະພວກເຈົ້ານາຍກໍໄດ້ເອົາແສ້ຂ້ຽນ ແລະຍັດໃສ່ໃນຄຸກໄວ້.

ໂປໂລແລະຊີລາແທນທີ່ຈະໄດ້ຮັບຄວາມໂສກເສົ້າ ກັບຮ້ອງເພງສັຣເສີນພຣະເຈົ້າແລະອ້ອນວອນ. ຕົກທ່ຽງຄືນມາ, ແຜ່ນດິນກໍຫວັ່ນໄຫວ, ຮາກຄຸກສັ່ນສະເທືອນ, ປະຕູທຸກບານໄຂອອກ, ເຄື່ອງທີ່ມັດຢູ່ກໍຫລຸດເມື່ອເຫັນດັ່ງນັ້ນ ນາຍທັມມະໂຮງເສັຽໃຈຫລາຍຈຶ່ງຄິດຈະຂ້າຕົວເອງຕາຍ ເພາະຖ້ານາຍຮູ້ກໍຈະຕ້ອງຖືກປະຫານຊີວິດແນ່ນອນ. ຖອດດາບອອກວ່າຈະແທງຕົວເອງ, ແຕ່ໂປໂລໄດ້ຮ້ອງໃສ່ ຫ້າມບໍ່ໃຫ້ເຮັດ. ເມື່ອ

ໃຕ້ໄຟເບິ່ງແລ້ວ, ຈຶ່ງແລ່ນເຂົ້າໄປຂາບຕີນໂປໂລແລະຊີລາ ແລະ ຖາມວ່າ: "ທ່ານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຕໍ່ໄປຈຶ່ງຈະພົ້ນໄດ້? " ທ່ານທັງສອງຈຶ່ງຕອບວ່າ: "ຈົ່ງເຊື່ອວາງໃຈໃນພຣະເຢຊູແລ້ວທ່ານຈະໄດ້ພົ້ນ ທັງຄົວເຮືອນຂອງທ່ານດ້ວຍ. "ຍັງມີຫລາຍຄົນທີ່ຕ້ອງການຄວາມຣອດພົ້ນ ຈະເປັນເສດຖີຫລືຂໍທານ, ຈະເປັນຜູ້ມີການສຶກສາຫລືດ້ອຍການສຶກສາ, ຈະເປັນເດັກຫລືຜູ້ໃຫຍ່, ຈະເປັນນາຍຫລືຂ້ອຍໃຊ້, ຈະເປັນຄົນຍິວຫລືຕ່າງຊາດ ກໍຕາມທຸກຄົນຕ້ອງການຄວາມຣອດພົ້ນ. ການປະກາດມີໄດ້ທຸກໆສະຖານທີ່ໆພວກເຮົາສັງກັດຢູ່. ແຕ່ຂໍບອກວ່າການປະກາດອາດຈະບໍ່ຮາບລື້ນຕລອດໄປ ບາງຄັ້ງກໍຫຍຸ້ງຍາກ ບາງຄັ້ງກໍຖືກກົດຂີ່ຂົ່ມເຫັງ ບາງຄັ້ງກໍຖືກຢຽດຫຽາມເຍາະເຍີ້ຍ ບາງຄັ້ງກໍອາດມີນໍ້າຕາ ບາງຄັ້ງກໍອາດຈະເອົາຊີວິດບໍ່ລອດ    ແຕ່ກໍຂໍໃຫ້ຊື່ນຊົມຍິນດີເຖີດ ເພາະພຣະເຈົ້າຊົງສະຖິດຢູ່ກັບພວກເຮົາ.

## <u>ຄວາມສັມພັນປ່ຽນແປງ (16:33-34)</u>

ເມື່ອນາຍທັມມະໂຮງ ແລະຄອບຄົວໄດ້ພາກັນຮັບເຊື່ອແລ້ວ, ເຂົາເຈົ້າກໍເຊື້ອເຊີນໂປໂລແລະຊີລາ ໄປຢ້ຽມຢາມເຮືອນຂອງເຂົາເຈົ້າ ແລະກໍໄດ້ພາກັນປິ່ນປົວບາດແຜໃຫ້.ນາຍທັມມະໂຮງກັບໂປໂລ ແຕ່ກ່ອນເປັນນາຍຄຸມແລະຄົນຄຸກ,ຫລັງຈາກນາຍທັມມະໂຮງໄດ້ພົບກັບພຣະເຈົ້າແລ້ວ ຄວາມສັມພັນກໍຖືກປ່ຽນແປງ. ຄວາມສັມພັນໃຫມ່ກໍຄື ເປັນອ້າຍນ້ອງກັນ ແບ່ງປັນຄວາມສຸກທຸກ ແລະມີຄວາມຮັກຕໍ່ກັນ.  ຊີວິດຄຣິສຕຽນກໍເຊັ່ນດຽວກັນ ຖ້າພວກເຮົາຫາກພົບພຣະເຈົ້າແທ້ຈິງ ແລະຜູ້ທີ່ຂົ່ມເຫັງເຮົາຫາກຮັບພຣະເຈົ້າແທ້ແລ້ວ ຄວາມສັມພັນຣະຫວ່າງເຮົາກັບເຂົາກໍຕ້ອງຖືກປ່ຽນແປງແທນທີ່ຈະມີຄວາມອິດສາ, ຄວາມຢ້ານລື່ນ, ຄວາມກຽດຊັງ ແຕ່ກັບກາຍມາເປັນຄວາມສົງສານ.

15 ປີຜ່ານມາ, ຂ້າພະເຈົ້າເປັນຄົນອົພຍົບເຂົ້າມາສູ່ປະເທດສະຫະຣັດອະເມຣິກາໃຫມ່ໆ. ຄົນຜິວຂາວກໍເບິ່ງຂ້າພະເຈົ້າແບບບໍ່ເຕັມຕາ ບາງຄົນກໍຄິດວ່າເຮົາມາຍາດບ່ອນທໍາມາຫາກິນ, ບາງຄົນກໍເວົ້າວ່າເຮົາມີຜິວພັນເປັນຕາຫົວ, ບາງຄົນກໍເວົ້າວ່າເຮົາເປັນສັດຕຣູກັບເຂົາ ສາຣະພັດທີ່ເຂົາຈະເວົ້າ. ແຕ່ເມື່ອພາຍຫລັງທີ່ເຂົາຮູ້ວ່າເຮົາເປັນຄຣິສຕຽນ, ເປັນຄົນທີ່ຮັກພຣະເຈົ້າຢ່າງແທ້ຈິງ ແລ້ວຄວາມສັມພັນຣະຫວ່າງເຮົາກັບເຂົາກໍຖືກປ່ຽນແປງທັນທີ. ພຣະເຈົ້າເປັນຜູ້ທີ່ປ່ຽນແປງຄວາມສັມພັນນີ້, ຄົນທີ່ຮັກພຣະອົງພຣະອົງຈະໃຫ້ຄວາມສັມພັນໃຫມ່.

## <u>ຄໍາຖາມ:</u>

1. ແມ່ນຫຍັງເກີດຂື້ນຫລັງຈາກທີ່ນາງລີເດັຍໄດ້ຮັບເຊື່ອແລ້ວ?

2. ແທນທີ່ຈະຄຽດແຄ້ນ ຫລື ໂສກເສົ້າໃນການທີ່ຖືກຈັບຂັງຄຸກ ໂປໂລແລະຊີລາ ຊໍ້າພັດຮ້ອງເພັງແລະສັຣເສີນພຣະເຈົ້າ  ແມ່ນຫຍັງຄືຄວາມແຕກຕ່າງ?

3. ແມ່ນຫຍັງຈະເກີດຂື້ນ ຖ້າເຮົາຫາກຮັບເອົາພຣະເຈົ້າຢ່າງແທ້ຈິງ?

## ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ທຸກໆຄົນ
## ບົດຮຽນທີ 11
## ໂປໂລເທສນາກ່ຽວກັບພຣະເຈົ້າທີ່ບໍ່ຮູ້ຈັກ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 17:16-34
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ກິຈການ 17
<u>ຈຸດສຳຄັນຂອງບົດຮຽນນີ້:</u> ໂປໂລພົບວິທີທາງທີ່ຈະບອກຄວາມຈິງໃຫ້ແກ່ຊາວກຸງອາແຖນ

<u>ຄຳຖາມເພື່ອການສຳຣວດ:</u> ແມ່ນຫຍັງຄືອົງຕໍ່ ເພື່ອຈະບອກໃຫ້ຄົນທັງຫລາຍໄດ້ຍິນ,ເຂົ້າໃຈ, ແລະຕອບສນອງຕໍ່ການປະກາດພຣະຄຳຂອງພຣະເຈົ້າ
<u>ຈຸດປະສົງຂອງບົດຮຽນນີ້:</u> ແມ່ນເພື່ອຊອກຫາຊ່ອງທາງແບ່ງປັນການປ່າວປະກາດໃຫ້ກັບຜູ້ທີ່ເຄັ່ງຄັດສາສນາ ໃນທຸກວັນນີ້

<u>ບົດຮຽນ</u>

<u>ຄວາມຍິນດີແລະບັນຫາຂອງໂປໂລ (17:1-15)</u>

ໃນບົດຮຽນທີ່ຜ່ານມາ, ໂປໂລແລະຊີລາໄດ້ພົ້ນຈາກການຄຸມຂັງໂດຍແຜ່ນດິນໄຫວ (ກິຈການ 16:25-26) . ເມື່ອຜູ້ນຳເມືອງຟີລິບປອຍຊາບຂ່າວວ່າໂປໂລເປັນຄົນສັນຊາດໂຣມັນ ເຂົາຈຶ່ງມີຄວາມເສັຽໃຈທີ່ໄດ້ຈັບລາວຂັງຄຸກ. ກ່ອນຈາກເມືອງຟີລິບປອຍ ໂປໂລກໍໄດ້ພົບກັບຄຣິສຕຽນຫລາຍຄົນແລະກໍໄດ້ຫນູນໃຈຄົນເຫລົ່ານັ້ນ. (16:38-40). ໂປໂລ ຊີລາ ແລະຕີໂມທຽວ ກໍໄດ້ພາກັນໄປຢ້ຽມຢາມຄຣິສຕະຈັກຕາມເມືອງຕ່າງໆ.

ໂປໂລເທສນາສອນຊາວຍິວແລະຄົນຕ່າງຊາດດ້ວຍການກ່າວວ່າພຣະຄຣິດໄດ້ຍອມທົນທຸກທໍຣະມານແລະໄດ້ຟື້ນຂຶ້ນມາຈາກຄວາມຕາຍ. ເຮົາປະກາດແກ່ທ່ານ ວ່າຜູ້ນີ້ແຫລະເປັນພຣະຄຣິດ. (17:3) ຄົນກຣີກແລະບັນດາຜູ້ນຳຜູ້ຍິງຫລາຍຄົນກໍໄດ້ຮັບເຊື່ອ. ໃນເມືອງເທຊະໂລນີເກນີ້ ຍັງມີພວກຍິວທີ່ຄິດອິດສາບັງບຽດ ຈຶ່ງພາກັນກໍ່ຄວາມວຸ້ນວາຍຂຶ້ນ. ໂປໂລກັບຊີລາຈຶ່ງພາກັນໄປເມືອງເບຣອຍອາ. ໃນເມືອງນີ້ ຊາວຍິວມີຈິດໃຈສູງສົ່ງກ່ວາເມືອງເທຊະໂລນີເກ ພວກເຂົາຍິນດີຮັບຟັງພຣະຄຳຂອງພຣະເຈົ້າ. ແຕ່ພວກຍິວທີ່ເຫິງສາກໍນຳໄປຍຸຍົງປະຊາຊົນອີກ. ເມື່ອເປັນດັ່ງນັ້ນພີ່ນ້ອງກໍໄດ້ໄປສົ່ງໂປໂລ ຈົນເຖິງກຸງອາແຖນຄົງເຫລືອແຕ່ຊີລາແລະຕີໂມທຽວ. ໃນກຸງອາແຖນ ໂປໂລມີຄວາມເສັຽໃຈຫລາຍທີ່ເຫັນ ພຣະທຽມເຕັມທົ່ວເມືອງ.

<u>ອາແຖນ ເມືອງແຫ່ງພຣະທຽມ (ກິຈການ 17:16-21)</u>

ອາແຖນເປັນເມືອງເກົ່າແກ່ແລະສຳຄັນ, ເປັນສູນກາງການສຶກສາ, ສິລປະ,ວັທນະທັມ,ແລະສາສນາ ຂອງໂລກ, ດັ່ງນັ້ນຈຶ່ງມີບ່ອນຖວາຍເຄື່ອງບູຊາໃຫ້ກັບພຣະທຽມຫລາຍ ທົ່ວໆໄປ. ໂປໂລເຫັນ

ພຣະທຽມທີ່ສ້າງດ້ວຍມືມະນຸດ. ຄົນກຸງອາແຖນເປັນຄົນທີ່ນັບຖືສາສນາແລະປະຕິບັດຢ່າງເຄັ່ງຄັດ. ຫນ້າເສັຽໃຈທີ່ພວກເຂົາບໍ່ໄດ້ນະມັສການພຣະເຈົ້າທີ່ແທ້ຈິງແລະມີຊີວິດ. ເມື່ອເຫັນຄົນທັງຫລາຍນະມັສການພຣະທຽມ ແລະຂາບໄຫວ້ສິ່ງທີ່ເຮັດດ້ວຍມືນະນຸດ ຈິດວິນຍານຂອງໂປໂລຈຶ່ງມີບັນຫາທັນທີ.

ຂ້າພະເຈົ້າກໍຮູ້ສຶກເຊັ່ນດຽວກັບໂປໂລ, ເມື່ອເຫັນຄົນກຸ່ມນ້ອຍໆນຶ່ງ ພາກັນສ້າງຮູບເຄົາຣົບ ແລ້ວກໍປະກາດໃຫ້ທຸກໆຫລັງຄາເຮືອນໄປຂາບໄຫວ້ຮູບນັ້ນ. ເມື່ອໄປເຖິງຮູບປັ້ນນັ້ນ ທຸກຄົນກໍຖອດເກີບ ແລ້ວກໍຄານໄປຂາບໄຫວ້ ດ້ວຍຄວາມຢຳເກງ. ພວກເຂົາເຂົ້າໃຈວ່າຮູບປັ້ນເຮັດດ້ວຍຫີນນັ້ນເປັນພຣະເຈົ້າຂອງພວກເຂົາ. ພວກເຂົາຫວັງວ່າພຣະເຈົ້າຫີນຈະເຮັດໃຫ້ເຂົາສຸກສະບາຍ, ມີຄວາມແຂງແຮງ. ບາງຄົນໃນກຸ່ມນັ້ນບອກກັບຂ້າພະເຈົ້າວ່າ ພຣະຂອງເຂົາເຈົ້າມີຫລາຍເກືອບເຖິງຮ້ອຍອົງ ຖ້າຈະນັບເອົາແທ້ໆ. ບາງເຮືອນກໍຍັງມີຫ້ອງໄວ້ສຳຫລັບຮູບເຄົາຣົບນັ້ນ, ຂ້າພະເຈົ້າຮັກຄົນພວກນັ້ນຫລາຍ ແຕ່ສິ່ງທີ່ເຮັດໃຫ້ຂ້າພະເຈົ້າບໍ່ດີໃຈນັ້ນຄືຮູບປັ້ນນັ້ນເອງ.

ໂປໂລກ່າວໃຫ້ພວກຢືວຟັງໃນສະຖານທີ່ເຂົານະມັສການ, ເວົ້າກັບບາງຄົນຢູ່ຕລາດ,ມີຫລາຍຄົນກໍຢາກຟັງແລະຢາກເຊື່ອສິ່ງໃຫມ່ໆ. ເກີດມີສອງພວກທີ່ມາຖົກຖຽງກັບໂປໂລ. ພວກທຳອິດແມ່ນພວກ ເອປີກໍຣັສ ພວກນີ້ເຊື່ອວ່າ ຄວາມສຸກ ເປັນສິ່ງທີ່ສຳຄັນກວ່າຫມູ່ໃນຊີວິດ, ຖ້າຕາຍໄປແລ້ວ ກໍຫມົດໄປຊື່ໆ. ພວກທີສອງແມ່ນພວກ ຊີໂນ ພວກນີ້ເຊື່ອວ່າຄວາມຮູ້ ແລະ ການບັງຄັບຕົວເອງໄດ້ນັ້ນແມ່ນມີຄວາມສຸກ, ພວກນີ້ມີພຣະເຈົ້າຫລາຍຢ່າງ.

ຄົນສ່ວນຫລາຍບໍ່ເຂົ້າໃຈ ວ່າພຣະເຢຊູຟື້ນຄືນມາຈາກຕາຍໄດ້ຢ່າງໃດ? ແຕ່ຍັງມີຫລາຍຄົນຢາກຟັງໂປໂລສອນຕໍ່ ຈຶ່ງໄດ້ເຊີນເພີ່ນສອນອີກ.

<u>ໂປໂລທີ່ສະພາ ອາເຣໂອປາກັສ (ກິຈການ 17:22-32)</u>

ຝູງຊົນຕັ້ງໃຈຟັງໂປໂລ ໃນເວລາລາວສອນ. ໂປໂລໄດ້ເລີ້ມຕົ້ນຈາກຕົວເມືອງທີ່ລາວຜ່ານມາແລະບ່ອນທີ່ລາວໄດ້ເຫັນສິ່ງຕ່າງໆ. ແລະລາວກໍຍັງໄດ້ເຫັນບ່ອນທີ່ພວກເຂົາຂຽນໄວ້ວ່າ "ແດ່ພຣະເຈົ້າທີ່ບໍ່ຮູ້ຈັກ" ໂປໂລກໍໄດ້ບອກເຖິງຄຳວ່າ "ບໍ່ຮູ້ຈັກ" ນັ້ນລະ ຄືພຣະເຈົ້າຜູ້ຊົງສ້າງໂລກແລະທຸກໆສິ່ງທີ່ອາສັຍຢູ່ໃນນັ້ນ. ພວກທ່ານນະມັສການພຣະອົງ ແລະບໍ່ຮູ້ຈັກພຣະອົງ. ນີ້ຄືຄຳເວົ້າທີ່ໂປໂລກ່າວເຖິງພຣະເຈົ້າຜູ້ຊົງພຣະຊົນຢູ່ :

1. ພຣະເຈົ້າເປັນເຈົ້າຂອງຟ້າສວັນແລະແຜ່ນດິນໂລກ (ຮູບເຄົາຣົບບໍ່ມີອຳນາດຫຍັງ)
2. ພຣະເຈົ້າບໍ່ໄດ້ຢູ່ໃນຕົວອາຄານທີ່ສ້າງດ້ວຍມືມະນຸດ (ພຣະເຈົ້າຢູ່ທົ່ວທຸກບ່ອນ)
3. ພຣະເຈົ້າບໍ່ຕ້ອງການຫຍັງຈາກມະນຸດ (ກຸງອາແຖນມີຫລາຍບ່ອນຖວາຍເຄື່ອງບູຊາ)
4. ພຣະເຈົ້າໃຫ້ຊີວິດແລະອາກາດຫາຍໃຈ (ກ້ອນຫີນ ຫລື ທ່ອນໄມ້ ໃຫ້ຊີວິດບໍ່ໄດ້)
5. ພຣະເຈົ້າບໍ່ໄດ້ຢູ່ໄກພວກເຮົາ (ພວກເຮົາມີຊີວິດກໍຍ້ອນພຣະອົງ)
6. ພວກເຮົາເປັນລູກພຣະເຈົ້າ (ພວກເຮົາຄືພຣະເຈົ້າ ບໍ່ຄືພຣະທຽມ)
7. ພຣະເຈົ້າບອກທຸກຄົນໃຫ້ກັບມາ ຫັນຫນີຈາກທາງບາບ.
8. ພຣະເຈົ້າຈະສົ່ງພຣະເຢຊູມາເປັນຜູ້ຕັດສິນໃນວັນນຶ່ງ

9. ພຣະເຈົ້າເຮັດໃຫ້ພຣະເຢຊູຄືນພຣະຊົນ ນັ້ນຫມາຍຄວາມວ່າພຣະເຢຊູເປັນຜູ້ທີ່ພຣະເຈົ້າຊົງເລືອກ.

## ບໍ່ແມ່ນທຸກຄົນທີ່ຫລົງຫາຍ (17:32-34)

ໂປໂລໄດ້ກ່າວຄວາມຈິງໃຫ້ຊາວກຸງອາແຖນຟັງ. ລາວສັດຊື່ຕໍ່ການເປັນພຍານ. ບາງຄົນກໍຫົວເຢາະເຢີ້ຍໃນຄວາມເຊື່ອຂອງລາວ. ແຕ່ກໍມີບາງຄົນວາງໃຈໃນພຣະເຢຊູ. ທີ່ນັ້ນຍັງບໍ່ທັນມີຄຣິສຕະຈັກເກີດຂື້ນເທື່ອ. ຂ້າພະເຈົ້າດີໃຈທີ່ເຫັນຊາວເກົາຫລີ ຫລາຍລ້ານຄົນ ຫັນຈາກການນັບຖືຮູບເຄົາຣົບມາຫາພຣະເຈົ້າຜູ້ຊົງພຣະຊົນຢູ່. ທຸກວັນນີ້ໂບດທີ່ ໃຫຍ່ທີ່ສຸດກໍຢູ່ໃນປະເທດເກົາຫລີ. ແຕ່ກໍປາສຈາກບໍ່ໄດ້, ຍັງມີບາງຄົນຍັງໄປຂາບໄຫວ້ກ້ອນຫີນໃຫຍ່,ອະທິຖານຂໍໃຫ້ລູກຢູ່ສຸກສະບາຍ.ຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງກະທໍາຕໍ່ປະເທດນີ້.

ມີພຣະທຽມອັນໃດແດ່ຢູ່ໃນຊີວິດເຮົາ? ພວກເຮົານະມັສການຫຍັງຫລື ເອົາຫຍັງໄວ້ກ່ອນພຣະເຈົ້າ? ເງິນບໍ່, ວຽກງານບໍ່, ສຸຣາຢາເມົາບໍ່, ຄວາມເຫັນແກ່ຕົວບໍ່, ອໍານາດບໍ່, ຫລືວ່າຊື່ສຽງ...ສິ່ງຕາ່ງໆເຫລົ່ານີ້ອາດເປັນພຣະທຽມກໍໄດ້ ຖ້າຫາກພວກເຮົາຫາກປ່ອຍໃຫ້ມັນເປັນ. ຂ້ອຍອະທິຖານເພື່ອທຸກໆຄົນທີ່ຈະໄດ້ຕິດຕາມພຣະເຈົ້າທີ່ແທ້ຈິງ ແລະໃຫ້ພຣະອົງມາກ່ອນ. ແລະຂ້ອຍກໍອະທິຖານໃຫ້ທຸກໆຄົນໄດ້ວາງໃຈໃນອົງພຣະເຢຊູຄຣິດ. "ພຣະອົງບໍ່ໄດ້ຢູ່ໄກຈາກພວກເຮົາ" ກິຈການ 17:27

## ຄໍາຖາມຊວນຄິດ:

1. ໂປໂລມີຄວາມຮູ້ສຶກຢ່າງໃດເວລາລາວເຫັນຊາວກຸງອາແຖນກາບໄຫວ້ພຣະທຽມ ?

2. ສອງພວກທີ່ມາຖົກຖຽງກັບໂປໂລແມ່ນພວກໃດແດ່? ແຕ່ລະພວກເຊື່ອຢ່າງໃດ ?

3. ເວລາໂປໂລເທສນາຢູ່ສະພາອາເຣໂອປາກັສ, ລາວໄດ້ກ່າວຄວາມຈິງຫລາຍຢ່າງກ່ຽວກັບພຣະເຈົ້າ ຄວາມຈິງອັນໃດທີ່ທ່ານເຫັນພ້ອມ ? ແລະຄວາມຈິງອັນໃດທີ່ທ່ານບໍ່ເຫັນພ້ອມ ?

4. ເປັນຫຍັງຈິ່ງມີບາງຄົນບໍ່ເຊື່ອວ່າພຣະເຢຊູຟື້ນຂື້ນມາຈາກຄວາມຕາຍ? ເປັນການຍາກສໍາລັບທ່ານ ຫລືສໍາລັບບາງຄົນບໍ່ ? ເປັນຫຍັງ ?

<u>ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ທຸກໆຄົນ</u>

<u>ບົດຮຽນທີ 12</u>

<u>ຈະຮັບໃຊ້ພຣະເຈົ້າດ້ວຍຄວາມສັດຊື່ຢ່າງໃດ</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ກິຈການ 20:17-37

<u>**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:**</u> ກິຈການ 20

<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ຊີວິດແລະການປ່າວປະກາດຂອງໂປໂລທີ່ເມືອງເອເຟໂຊເປັນຕົວຢ່າງທີ່ດີຂອງຜູ້ນຳຄຣິສຕຽນຄວນຕາມ.

<u>**ຄຳຖາມເພື່ອການສຳຣວດ:**</u> ແມ່ນຫຍັງແມ່ນທ່າທີແລະການກະທຳພິເສດທີ່ສະແດງເຖິງລັກສະນະການຮັບໃຊ້ຂອງຄຣິສຕຽນ.

<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອພິຈາລາຄາທ່າທີແລະການກະທຳຂອງທ່ານກັບຄຸນລັກສະນະຊີວິດແລະການປ່າວປະກາດຂອງໂປໂລ.

## <u>ບົດຮຽນ</u>

ລຸງບົວເກດເປັນຜູ້ຊ່ວຍອາຈານຢູ່ໃນໂບດບັບຕິສແຫ່ງນຶ່ງ. ລາວມີອາຍຸໄດ້ 60 ປີແລ້ວ, ລາວຫາກໍ່ເຊົາເຮັດວຽກເຕັມເວລາ, ຫັນມາເຮັດວຽກເຄິ່ງເວລາ. ໂບດທີ່ລາວສັງກັດຢູ່ນັ້ນ ມີຄວາມຈະເຣີນຫລາຍ,ຜູ້ຄົນທ້າວທັນຫລາຍ ພວກເຂົາເຈົ້າຮັກລຸງບົວເກດ ເພາະລາວຮັກພີ່ ຮັກນ້ອງ ເປັນຫ່ວງເປັນໃຍ. ຖ້າຜູ້ໃດຂາດ ລາວກໍຖາມຫາໂລດແລະກໍຍັງໄປຢື້ຢາມຖາມຂ່າວ ດ້ວຍໃນຕຣີຈິດມິຕພາບອັນດີ. ຍັງບໍ່ພໍທໍ່ນັ້ນ, ເມັຽຂອງລຸງບົວເກດກໍຍັງຊົດຊ່ວຍຜົວແລະຜູ້ອື່ນໆອີກດ້ວຍ. ເຂົາເຈົ້າອະທິຖານເພື່ອຄົນອື່ນຢູ່ສເມີແລະທູນຂໍໃຫ້ພຣະເຈົ້ານຳພາການເຮັດວຽກ.

ເມື່ອມີອາຍຸ 65 ປີເຕັມ ລຸງບົວເກດ ກໍອອກກິນເງິນເບັ້ຽບຳນານ. ເຂົາເຈົ້າຍ້າຍໄປຢູ່ຕ່າງເມືອງເພື່ອໃຫ້ໄກ້ກັບຄອບຄົວລູກໆ. ທາງໂບດກໍມີຄວາມໂສກເສົ້າ ແລະບໍ່ຢາກໃຫ້ເຂົາເຈົ້າຍົກຍ້າຍ. ບາງຄົນກໍຮ້ອງໃຫ້. ບາງຄົນກໍຄິດວ່າຈະບໍ່ເຫັນຄອບຄົວລຸງບົວເກດອີກ.

ຕົວຢ່າງນີ້ ກໍຄ້າຍກັບໂປໂລທີ່ອຳລາພາຈາກໂບດເມືອງເອເຟໂຊ. ໂປໂລປຽບເຫມືອນພໍ່ຂອງຄຣິສຕຽນ. ລາວຮູ້ວ່າເປັນຄັ້ງສຸດທ້າຍທີ່ລາວຈະໄດ້ຮ່ວມກັບເຂົາເຈົ້າ. ຜູ້ນຳຄຣິສຕຽນຫລາຍຄົນກໍເສັຽໃຈເມື່ອໄດ້ຍິນວ່າເຂົາເຈົ້າຈະບໍ່ເຫັນໂປໂລອີກ.

## <u>ພົບກັນອີກເທື່ອນຶ່ງ (20:17-24)</u>

ໂປໂລຢູ່ເມືອງມີເລຕັສ, ຊຶ່ງໄກຈາກເມືອງເອເຟໂຊປະມານ 30 ໄມ, ເພື່ອລໍຖ້າເຮືອຈະມາຮັບເອົາ. ໂປໂລຢາກຈະເຫັນຜູ້ນຳຈາກເມືອງເອເຟໂຊອີກເທື່ອນຶ່ງ. ຈະມີຄວາມຊື່ນຊົມຍິນດີຫລາຍປານໃດ ທີ່ໂປ

ໂລໄດ້ພົບເພື່ອນເກົ່າ ເພາະລາວມີຫລາຍສິ່ງຫລາຍຢ່າງຈະເວົ້າລົມນຳ. ແຕ່ວ່າເວລາມີໜ້ອຍໂພດ. ລາວກ່າວດ້ວຍຄວາມຖ່ອມໃຈ ແລະດ້ວຍນ້ຳຕາໄຫລ, ແລະຍັງບອກອີກວ່າ ພວກເຮົາໄດ້ແບ່ງປັນຄວາມຍິນດີແລະຄວາມໂສກເສົ້າມາດ້ວຍກັນ.

ໂປໂລໃຊ້ເວລາ 3 ປີຢູ່ເມືອງເອເຟໂຊ(ກິຈການ 19:1-41) . ລາວໄດ້ສ້າງຕັ້ງໂບດ ແລະສິດສອນຜູ້ນຳທີ່ນັ້ນ. ພຣະເຈົ້າໃຊ້ໂປໂລໃຫ້ເຮັດວຽກດ້ວຍພລັງອຳນາດ ແລະສຳແດງອັສຈັນຫລາຍຢ່າງ. ຜູ້ຄົນຖືກປິ່ນປົວໃຫ້ຫາຍຈາກພະຍາດໂຣຄາ (ກິຈການ 19:11) ໂປໂລເຮັດວຽກທັງວັນທັງຄືນ,ສິດສອນ,ເທສນາ, ແລະຊົດຊ່ວຍເຫລືອຜູ້ອື່ນ. ແຕ່ກໍມີຢິວບາງຄົນເຮັດໃຫ້ລາວມີບັນຫາ.

ໂປໂລສອນທັງຄົນຕ່າງຊາດ ແລະຄົນຢິວໃນເມືອງເອເຟໂຊ. ລາວສອນທັງຢູ່ທີ່ເປີດແປນແລະຫລັງຄາເຮືອນ ຕໍ່ ຫລັງຄາເຮືອນ. ການສອນຂອງໂປໂລກໍເປັນໄປຕາມຄຳຮຽກຮ້ອງຕ້ອງການຂອງຄຣິສຕຽນ. ສ່ວນຫລາຍຫົວຂໍ້ທີ່ລາວສອນຈະແມ່ນ " ຈົ່ງຫັນໜີຈາກຄວາມບາບແລ້ວເຊື່ອໃນອົງພຣະເຢຊູຄຣິດ "

ໂປໂລບອກວ່າ ພຣະວິນຍານບໍຣິສຸດໄດ້ນຳລາວໃຫ້ໄປກຸງເຢຣູຊາເລັມ. ລາວຮູ້ວ່າບັນຫາແລະເຄື່ອງຈອງຈຳຕ່າງໆລໍຖ້າລາວທີ່ນັ້ນ. ແຕ່ລາວກໍບໍ່ມີຄວາມຢ້ານກົວເລີຍ.ລາວຮູ້ວ່າບໍ່ມີສິ່ງໃດຈະແຍກລາວອອກຈາກຄວາມຮັກຂອງພຣະເຈົ້າໄດ້ເລີຍ. (ໂຣມ 8:38-39). ຄວາມເປັນຫ່ວງຂອງໂປໂລກໍຄືໂບດຂອງພຣະເຈົ້າ ເພາະລາວຮູ້ວ່າເວລາລາວຈາກໄປແລ້ວພວກເຂົາຕ້ອງມີບັນຫາ. ໂປໂລຢາກຈະເຮັດວຽກຂອງພຣະເຈົ້າໃຫ້ສຳເຣັດ.

<u>ໂປໂລສັ່ງໃຫ້ຜູ້ນຳເຮັດວຽກ (20:25-31)</u>
ໂປໂລເວົ້າຢ້ຳເຖິງຄວາມຈິງຕ່າງໆ, ລາວກ່າວຫລາຍຢ່າງທີ່ລາວສາມາດເວົ້າໄດ້. ບັດນີ້ເປັນເວລາທີ່ທ່ານຄວນຈະຮັບໃຊ້. ພຣະວິນຍານໄດ້ເຮັດໃຫ້ທ່ານກາຍເປັນຜູ້ນຳ, ບໍ່ແມ່ນຄວາມຕ້ອງການຂອງທ່ານ, ບໍ່ແມ່ນຄວາມຕ້ອງການຂອງໂປໂລ. ພຣະວິນຍານບໍຣິສຸດຈະນຳພາເຂົາເອງ.

ຜູ້ນຳຈະຕ້ອງຣະມັດຣະວັງຕົນເອງແລະໂບດດ້ວຍ. ຊີວິດຂອງເຂົາເຈົ້າຕ້ອງບໍຣິສຸດແລະສັດຊື່. ຜູ້ນຳຈະຕ້ອງເປັນຕົວຢ່າງໃຫ້ແກ່ຜູ້ຕິດຕາມ. ຄົນລ້ຽງແກະຕ້ອງລ້ຽງເກືອແກະແລະເປັນຫ່ວງເປັນໃຍແກະ, ເຊັ່ນດຽວກັນພວກເຂົາຕ້ອງລ້ຽງເກືອ ແລະ ເປັນຫ່ວງນຳໂບດຂອງພຣະເຈົ້າ. ຜູ້ນຳຕ້ອງປ້ອງກັນໂບດຂອງພຣະເຈົ້າ ໃຫ້ພົ້ນຈາກມານຮ້າຍ. ພຣະເຢຊູຮັກໂບດແລະໄດ້ຖວາຍຕົວເພື່ອໂບດ. (ເອເຟໂຊ 5:25)

ໂປໂລຍັງໄດ້ບອກພວກເຂົາໃຫ້ຣະມັດຣະວັງຄຣູສອນປອມ. ພວກນີ້ຈະມາຢ່າງໝາໄນກຳລັງຫິວອາຫານ. ບາງພວກກໍພຍາຍາມຈະທຳລາຍໂບດດ້ວຍ. ຄຣູສອນປອມມັກຈະອະລຸ້ມອະລ່ວຍຕໍ່ຄຳສອນຢູ່ສເມີ. ຣະວັງຜູ້ນຳຈະຕ້ອງປ້ອງກັນໂບດ.

<u>ອຳລາພາຈາກດ້ວຍຄວາມໂສກເສົ້າ (ກິຈການ20:32-38)</u>
ຄຣິສຕຽນມີຄວາມສັມພັນຊຶ່ງກັນແລະກັນດ້ວຍອົງພຣະຄຣິດ. ຜູ້ທີ່ບໍ່ທັນໄດ້ເກີດໃນອົງພຣະຄຣິດກໍຍັງບໍ່ທັນເປັນສະມາຊິກຂອງຄອບຄົວນີ້ເທື່ອ. ຄັ້ງທີ່ຂ້າພະເຈົ້າຢູ່ສູນອົພຍົບ, ກ່ອນຄຣິສຕຽນ

ຈະຈາກໄປຕ່າງປະເທດຂ້າພະເຈົ້າໄດ້ສັ່ງເຂົາວ່າ ໃຫ້ອ່ານພຣະຄັມພີທຸກວັນ, ຮັກສາຄວາມເຊື່ອໃຫ້ເຂັ້ມແຂງ, ຢ່າຫລົງລືມພຣະເຈົ້າ. ພວກເຮົາກໍໄດ້ເຮັດເຫມືອນໂປໂລສັ່ງ ໃນຂໍ້ທີ 32 ພວກເຮົາໄດ້ບອກເຂົາເວລາພວກເຂົາໄປສະຖານທີ່ແຫ່ງອື່ນຫລືປະຈໍາທີ່ເດີມກໍດີ. ພາຍຫລັງມາ ຂ້າພະເຈົ້າໄດ້ຮັບຈົດຫມາຍຈາກພວກເຂົາ. "ພຣະເຈົ້ານໍາພາຊີວິດພວກເຮົາ." ຂ້າພະເຈົ້າຈຶ່ງເຫັນໄດ້ວ່າ ສິ່ງສໍາຄັນທີ່ສຸດທີ່ຊາບຊຶ້ມໃນຊີວິດມະນຸດນັ້ນກໍຄືພຣະຄໍາຂອງພຣະເຈົ້າ ແລະພຣະຄໍາກໍຊົງນໍາຊີວິດຂອງມະນຸດດ້ວຍ.

ໂປໂລຮັກພີ່ນ້ອງຄຣິສຕຽນ. ລາວບໍ່ໄດ້ຮຽກຮ້ອງຫຍັງຈາກເຂົາເຈົ້າ. ລາວທໍາງານດ້ວຍຄວາມເຕັມໃຈ. ໂປໂລກ່າວຕໍ່ເພື່ອນຄຣິສຕຽນກ່ອນຈາກເມືອງເອເຟໂຊ. ລາວຄຸເຂົ່າອະທິຖານ ຮ່ວມກັບເຂົາເຈົ້າ. ຜູ້ນໍາເຫລົ່ານັ້ນກໍພາກັນຮ້ອງໄຫ້ ແລ້ວກໍກອດໂປໂລ. ນີ້ເປັນການອໍາລາທີ່ໂສກເສົ້າສໍາລັບພວກເຂົາທຸກຄົນ. ພວກເຂົາເສັຽໃຈຫລາຍທີ່ວ່າຈະບໍ່ເຫັນຫນ້າກັນອີກ.

## <u>ການພົບກັນຢ່າງມີຄວາມສຸກ</u>

ການອໍາລາເປັນການໂສກເສົ້າ, ແຕ່ບໍ່ແມ່ນອໍາລາຕລອດໄປ. ໂປໂລເທສນາວ່າ ພຣະເຢຊູຊົງຟື້ນຈາກຄວາມຕາຍ. ຜູ້ໃດກໍຕາມທີ່ວາງໃຈເຊື່ອໃນພຣະເຢຊູ ກໍຈະຟື້ນມາຈາກຄວາມຕາຍເຫມືອນກັນ. ໂປໂລຮູ້ວ່າລາວຈະໄດ້ພົບເພື່ອນຄຣິສຕຽນອີກຢູ່. ລາວຈະພົບພວກເຂົາໃນຟ້າສວັນ. ນີ້ແມ່ນຄໍາສັນຍາຂອງພຣະເຈົ້າ.

ການພົບກັນທີ່ເມືອງມີເລຕັສ ມີຄວາມດີໃຈຫລາຍ, ແຕ່ການພົບກັນອີກໃນຟ້າສວັນຈະມີຄວາມຍິນດີຫລາຍສໍ່າໃດ. ໃຫ້ພວກເຮົາຂອບພຣະຄຸນພຣະເຈົ້າທີ່ພຣະອົງຊົງມີຄວາມຮັກ. ຍັງມີຫົນທາງສໍາລັບພວກເຮົາ ທີ່ຈະພົບກັນອີກໃນວັນນຶ່ງ. ໃຫ້ພວກເຮົາຂອບພຣະຄຸນພຣະເຈົ້າທີ່ພວກເຮົາມີຜູ້ນໍາທີ່ສັດຊື່. ພວກເພິ່ນ ຮັກພວກເຮົາ, ສອນພວກເຮົາ, ແລະນໍາພາພວກເຮົາໃນການດໍາເນີນຊີວິດຄຣິສຕຽນ.

## <u>ຄໍາຖາມຊວນຄິດ:</u>

1. ໂປໂລຮັບໃຊ້ດ້ວຍຄວາມສັດຊື່ໃນດ້ານໃດແດ່ ? ເຮົາຈະເປັນຕົວຢ່າງໄດ້ຢ່າງໃດ?

2. ຄໍາສອນຂອງໂປໂລແນໃສ່ອັນໃດ?

3. ຂໍ້ຫຍຸ້ງຍາກທີ່ຄຣິສຕຽນ ແລະ ໂບດທັງຫລາຍມີບັນຫາທີ່ຈະປະເຊີນນັ້ນຄືຫຍັງແດ່ ?

4. ຄົນຮັບໃຊ້ພຣະເຈົ້າມີວິທີໃດແດ່ ? ພວກເຂົາຮັບໃຊ້ຢ່າງໃດ ?

## <u>ແບ່ງປັນຂ່າວປະເສີດຂອງພຣະເຈົ້າໃຫ້ແກ່ທຸກໆຄົນ</u>
## <u>ບົດຮຽນທີ 13</u>

## <u>ຈະປະກາດໃຫ້ສຳເລັດຜົນຢ່າງໃດໃນຊີວິດ?</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> ກິຈການ 28:16-31
<u>**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:**</u> ກິຈການ ບົດ 27 ແລະ 28
<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ແມ່ນເພື່ອໃຫ້ເຫັນວ່າ ໂປໂລໄປບ່ອນໃດລາວກໍປະກາດທີ່ນັ້ນ, ແລະຄຣິສຈັກຂອງພວກເຮົາກໍແມ່ນພຍານໃຫ້ທຸກໆຄົນເຫັນການປະກາດ.
<u>**ຄຳຖາມເພື່ອການສຳຣວດ:**</u> ຂ້ອຍຈະເຮັດຢ່າງໃດກັບຊີວິດຂອງຂ້ອຍ? ຊີວິດຂອງໂປດຂ້ອຍມີສ່ວນກ່ຽວພັນກັບຊີວິດຂ້ອຍບໍ່ ?
<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອຊ່ວຍໃຫ້ທ່ານເຫັນວ່າ ຊີວິດຂອງການປະກາດທີ່ປະສົບຜົນສຳເລັດນັ້ນແມ່ນຂຶ້ນຢູ່ກັບຄວາມສັດຊື່ຕໍ່ພຣະເຈົ້າ.

## <u>ບົດຮຽນ</u>

ຍິງຄົນນຶ່ງມີອາຍຸ ປະມານ 100 ປີ. ລາວເກີດປີ 1899. ຫລັງຈາກລາວເກີດມາບໍ່ພໍທໍ່ໃດຄອບຄົວຂອງລາວກໍຖືກຍົກຍ້າຍໄປຢູ່ ຄາລີຟໍເນັຍ. ເມື່ອອາຍຸໄດ້ 12 ປີອ້າຍຂອງລາວກໍມາຕາຍ. ຫລາຍມື້ຕໍ່ມາລາວໄດ້ຕັດສິນໃຈໄປໂບດ ດ້ວຍຄວາມສົງສັຍ. ແຕ່ຫລັງຈາກທີ່ລາວອອກຈາກໂບດມາແລ້ວ ແນວຄິດຂອງລາວກໍປ່ຽນ. ຕໍ່ມາລາວກໍໄດ້ຮັບເອົາພຣະເຈົ້າເປັນພຣະຜູ້ຊ່ວຍໃຫ້ລອດພົ້ນຂອງລາວ.
ເມື່ອອາຍຸໄດ້ 24 ປີ ລາວກໍໄດ້ສມັກໄປຢາມຄົນໂທດໃນຄຸກຮ່ວມກັບອາຈານຂອງລາວ. ຄັ້ງແຮກລາວກໍຮູ້ສຶກບໍ່ສະບາຍໃຈ ທີ່ເຫັນພວກຜູ້ຍິງທັງຫລາຍໂສກເສົ້າ, ໂດດດ່ຽວ. ລາວອະທິຖານ ແລະກໍເລີ້ມເວົ້າຈາກັບເຂົາ. ຫລັງຈາກນັ້ນມາລາວກໍໄດ້ກາຍເປັນຜູ້ນຳອະທິຖານໃນການນະມັສການທຸກໆຄັ້ງ. ລາວຮັບໃຊ້ມາໄດ້ 75 ປີແລ້ວ. ລາວເວົ້າວ່າ ພຣະເຈົ້າຊົງເອີ້ນລາວມາ ໃຫ້ອອກໄປຊ່ວຍແລະໃຫ້ຄວາມຫວັງແກ່ຍິງພວກນີ້. ນີ້ຄືຊີວິດການຖືກເອີ້ນໃຫ້ອອກໄປ.

ບົດຮຽນນີ້ ແມ່ນກ່ຽວກັບໂປໂລແລະການຖືກເອີ້ນໃຫ້ອອກໄປຂອງລາວ. ກ່ອນໂປໂລຈະພົບກັບພຣະເຈົ້າ, ການຖືກເອີ້ນຂອງລາວແມ່ນໃຫ້ໄປຂົ່ມເຫັງ ແລະໄປຂ້າແລະໄປຫາຈັບຄຣິສຕຽນ. ແຕ່ເມື່ອພຣະເຈົ້າຊົງເອີ້ນລາວແລ້ວ, ພຣະອົງກໍເອົາການອອກໄປແບບໃຫມ່ໃຫ້ລາວ. ພຣະເຈົ້າໄດ້ບອກໂປໂລວ່າໃຫ້ອອກໄປປະກາດຂ່າວດີໃຫ້ແກ່ທຸກໆຄົນ ທັງຜູ້ທີ່ບໍ່ເປັນຍິວດ້ວຍ. ການຮຽກເອີ້ນນີ້ລະ ປ່ຽນແປງໂປໂລແບບຫນ້າມືເປັນຫລັງມືເລີຍ.

ໂປໂລເທສນາ, ສອນ, ໃນຫລາຍໆສະຖານທີ່. ລາວກໍ່ສ້າງຕັ້ງໂບດໃນຫລາຍໆຫົວເມືອງ. ແຕ່ວ່າສິ່ງທີ່ລາວຕ້ອງການຫລາຍກວ່າຫມູ່ນັ້ນແມ່ນໄປກຸງໂຣມ. ລາວໄດ້ຂຽນຫນັງສືໄປຫາຄຣິສຕຽນທີ່ກຸງໂຣມ. ລາວເວົ້າວ່າລາວມີແຜນການຈະໄປຢ້ຽມຢາມພີ່ນ້ອງທີ່ນັ້ນ. ສຸດທ້າຍລາວກໍມາເຖິງໃຫ້ໄດ້, ແຕ່ບໍ່ໄດ້ມາເຖິງຢ່າງນັກເທດຫລືຄຣູສອນ ຄືມາແບບນັກໂທດ. ແຜນການຂອງພຣະເຈົ້າບໍ່ແມ່ນແຜນການຂອງເຮົາ. ແຕ່ແຜນການຂອງພຣະເຈົ້ານັ້ນຈະຕ້ອງດີກວ່າແຜນການຂອງເຮົາຕລອດໄປ.

## ການເດີນທາງອັນຫຍຸ້ງຍາກແລະຍາວນານ (ກິຈການ 27:21-26)

ບົດຮຽນຜ່ານມາ ໂປໂລໄດ້ເດີນທາງໄປກຸງເຢລູຊາເລັມ. ລາວໄດ້ນຳເງິນໄປຊ່ວຍພວກຄຣິສຕຽນທີ່ນັ້ນ. ເພື່ອນຂອງລາວກໍໄດ້ຕັກເຕືອນວ່າຈະມີບັນຫາ. ແຕ່ໂປໂລກໍໄດ້ຕອບເຂົາເຈົ້າວ່າ: "ຂ້າພະເຈົ້າພ້ອມແລ້ວທີ່ຈະຕາຍເພື່ອວຽກງານຂອງພຣະເຈົ້າ" (ກຈ 21:13) ຄົນຢິວຈາກເອເຊັຽໄດ້ມາລ້າງສມອງຄົນຢູ່ກຸງເຢຣູຊາເລັມໃຫ້ຫັນໄປຕໍ່ສູ້ໂປໂລ. ພວກເຂົາເວົ້າວ່າ ຄົນນີ້ທຳລາຍກົດຫມາຍຂອງຢິວ ໂດຍນຳຄົນກຣີກເຂົ້າມາສະຖານທີ່ຂອງພຣະເຈົ້າ. ປະຊາຊົນກໍເສັຽໃຈໃຫ້ໂປໂລຫວັງຈະຂ້າຖິ້ມ ແລະທະຫານມາເຖິງກ່ອນ

ທະຫານໂຣມັນກໍນຳໂປໂລໄປເພື່ອປ້ອງກັນລາວ. ຫລັງຈາກນັ້ນເຂົາກໍໄດ້ວາງແຜນຕ່າງໆນາໆ ຫວັງຈະຂ້າ ແຕ່ແຜນການກໍລົ້ມເຫລວ. ໂປໂລຮູ້ວ່າລາວຈະບໍ່ໄດ້ຮັບຄວາມເປັນທັມໃນການຕັດສິນທີ່ກຸງເຢຣູຊາເລັມ. ໂປໂລຮ້ອງຂໍວ່າ ໃນຖານະທີ່ລາວເປັນຄົນໂຣມັນ ຂໍໃຫ້ສົ່ງລາວໄປຫາຊີຊາ ທີ່ກຸງໂຣມເຖີດ. ການເດີນທາງໄປກຸງໂຣມແມ່ນໃຊ້ເວລາແລະຫຍຸ້ງຍາກຫລາຍ. ຊຶ່ງມີພາຍຸທັງໃນແລະນອກແຕ່ໂປໂລກໍໄດ້ສະແດງຄວາມເຊື່ອ (ກຈ 27:22-26,35) ເຮືອໄດ້ໄປຄ້າງຢູ່ເກາະແຫ່ງນຶ່ງ. ຫລັງຈາກທີ່ງູກັດໂປໂລແລ້ວ, ພວກເຂົາຈຶ່ງລໍຄອຍເບິ່ງລາວຕາຍ ແຕ່ລາວຊ້ຳພັດປິ່ນປົວຄົນໄຂ້ໃນທີ່ນັ້ນ. ລາວປະກາດເຣື່ອງຄວາມຮັກຂອງພຣະເຢຊູໃຫ້ຄົນອື່ນຟັງຊ້ຳ. ທຸກໆຄັ້ງທະຫານໂຣມັນຈະຢູ່ຝ່າຍໂປໂລ.

ນີ້ຄືຄວາມຍິນດີຂອງໂປໂລໃນການເດີນທາງ. ທຸກໆບ່ອນທີ່ເຮືອຈອດ ຈະມີຄຣິສຕຽນມາຖາມຂ່າວຄາວຈາກລາວ. ເມື່ອໂປໂລພົບພວກເຂົາລາວກໍມີຄວາມດີໃຈຫລາຍແລະໄດ້ຫນູນໃຈພວກເຂົາດ້ວຍ. ລາວຮູ້ວ່າພຣະຄຳຂອງພຣະເຈົ້າຖືກຂຍາຍອອກໄປ. ສິ່ງນຶ່ງທີ່ສຳຄັນທີ່ສຸດໃນພຣະພອນກໍຄືຄຣິສຕຽນມີເພື່ອນທີ່ແທ້ຈິງ. ພວກເຮົາແບ່ງປັນຄວາມຍິນດີ, ຄວາມໂສກເສົ້າ, ແລະໃຫ້ກຳລັງໃຈຊຶ່ງກັນແລະກັນ.

## ສຸດທ້າຍກໍເຖິງໂຣມ (ກິຈການ 28:16-28)

ໃນທີ່ສຸດໂປໂລກໍມາເຖິງກຸງໂຣມ. ລາວສາມາດເຊົ່າເຮືອນຢູ່ເອງໄດ້ແຕ່ວ່າຕ້ອງຖືກມັດໂສ້ທັງວັນທັງຄືນ ຫລັງຈາກສາມວັນໂປໂລກໍໄດ້ເອີ້ນຫົວຫນ້າພວກຢິວມາຫາລາວ. ໂປໂລເປັນຄົນຢິວ. ລາວຮັກຄົນຢິວ ບໍ່ວ່າລາວຈະໄປໃສລາວຕ້ອງໄປຊອກຫາຄົນຢິວກ່ອນ.

ຢິວໃນກຸງໂຣມ ບໍ່ໄດ້ຍິນເຣື່ອງບໍ່ດີຫຍັງເລີຍ ກ່ຽວກັບໂປໂລ. ແຕ່ໂປໂລກໍກ່າວວ່າເປັນຫຍັງລາວຈຶ່ງເອີ້ນພວກເຂົາມາ: "ເພາະວ່າຊົນຊາດຢິວທີ່ຂ້າພະເຈົ້າເປັນຢູ່ນີ້ມັນໄດ້ມັດຂ້າພະເຈົ້າກັບພວກທ່ານ." (ກຈ 28:20) ຫລາຍຄົນກໍເຂົ້າມາຟັງໂປໂລເທສນາ. ລາວເທສນາຫມົດມື້. ລາວຢາກໃຫ້ຄົນຢິວທັງຫລາຍ

ວາງໃຈເຊື່ອໃນພຣະເຢຊູຄຣິດ. ເພາະພຣະເຢຊູອົງດຽວເທົ່ານັ້ນທີ່ເປັນຄວາມຫວັງໃຫ້ກັບພວກຢິວ. ໂປໂລຍັງໄດ້ຍົກຕົວຢ່າງທີ່ພຣະເຈົ້າກ່າວໄວ້ໃນບັນຍັດຂອງໂມເຊ ແລະຜູ້ພະຍາກອນຕ່າງໆ ໄດ້ເລົ່າເຖິງພຣະເຈົ້າໄດ້ສັນຍາວ່າຈະສົ່ງພຣະເຢຊູລົງມາໂຜດຄົນບາບທັງຫລາຍ. ບາງຄົນກໍເຊື່ອ ແລະບາງຄົນກໍບໍ່ເຊື່ອ.ກ່ອນຄົນຈະຈາກໄປໂປໂລໄດ້ຍົກຫນັງສືເອຊາຢາອ່ານ. ເພາະພວກຢິວບໍ່ຍອມຮັບນີ້ລະ, ຂ່າວປະເສີດຈຶ່ງຕ້ອງປ່າວປະກາດໄປເຖິງພວກຕ່າງຊາດ. ແລະພວກຕ່າງຊາດທັງຫລາຍຈະຮັບເອົາ. ໂປໂລມີຄວາມເສັຽໃຈຫລາຍທີ່ຊົນຊາດຕົນເອງບໍ່ຍອມຮັບ. (ກຈ 28:25-28)

## <u>ປະກາດໄປທົ່ວໂລກ (ກິຈການ 28:30-31)</u>

ສອງປີທີ່ຢູ່ໃນກຸງໂຣມ, ໂປໂລປ່າວປະກາດເຣື່ອງຂອງພຣະເຈົ້າໂດຍບໍ່ມີຜູ້ໃດຫ້າມປາມເລີຍ. ຈົດຫມາຍທີ່ເຮົາກຳລັງຮຽນດຽວນີ້ ກໍແມ່ນລາວຂຽນຂຶ້ນໃນເວລານີ້ແຫລະ. ຈົດຫມາຍນີ້ກໍມີອາຍຸເກືອບ 2000 ປີແລ້ວ, ທີ່ສິດສອນຄຣິສຕຽນໃຫ້ດຳເນີນຊີວິດ.

ກ່ອນທີ່ພຣະເຢຊູຄຣິດຈະສະເດັດກັບສູ່ສວັນ, ພຣະອົງໄດ້ບອກສາວົກຂອງພຣະອົງກ່ຽວກັບ ກຸງເຢຣູຊາເລັມ, ຢູດາຍ, ຊາມາເຣັຽ ແລະ ສຸດປາຍແຜ່ນດິນໂລກ. (ກຈ 1:8) ກຸງໂຣມເປັນສູນກາງທີ່ໂລກຮັບຮູ້. ໂປໂລໄດ້ມາເຖິງກຸງໂຣມກໍຫມາຍຄວາມວ່າລາວໄດ້ອອກໄປທົ່ວໂລກແລ້ວຕາມຄຳສັ່ງຂອງພຣະເຢຊູຄຣິດ.

ໃນແຕ່ລະປີ ຄຣິສຕະຈັກຂອງຂ້າພະເຈົ້າໄດ້ອອກໄປປ່າວປະກາດໃຫ້ກັບຄົນທີ່ຢູ່ຊາຍແດນ ປະເທດແມັກຊິໂກໄປຢ້ຽມຢາມ, ຊ່ວຍສອນພຣະຄັມພີ,ປົວແປງບ້ານເຮືອນ ແລະອື່ນໆ..ການໄປເຮັດດັ່ງນັ້ນ ໄດ້ເຮັດໃຫ້ຊາວບ້ານມີຄວາມດີໃຈຫລາຍ. ຫລັງຈາກພວກເຮົາກັບຄືນມາແລ້ວກໍໄດ້ມີຈົດຫມາຍຂອບໃຈຫລາຍສະບັບ ຕາມມາ. ນີ້ເປັນວິທີນຶ່ງທີ່ຄຣິສຕຽນສາມາດເຮັດໄດ້ ແລະກໍຍັງມີອີກຫລາຍໆວິທີ ສຸດແລ້ວແຕ່ກໍຣະນີແລະເງື່ອນໄຂ.

ທ່ານເຄີຍຄິດໃນການສົ່ງອອກໄປຫລືບໍ່ ? ພຣະເຈົ້າຮຽກຮ້ອງໃຫ້ເຮັດຫຍັງແດ່ ? ຄວາມສຸກທີ່ແທ້ຈິງແມ່ນຂຶ້ນກັບແຜນການທີ່ພໍພະທັຍພຣະເຈົ້າ. ບາດກ້າວທຳອິດກໍຄື ເຊື່ອແລະວາງໃຈ. ໂປໂລກໍໃຊ້ເວລາຫລາຍປີກັບພຣະເຢຊູ. ໂປໂລຖືກເອີ້ນໃຫ້ອອກໄປປະກາດທຸກບ່ອນທີ່ລາວໄປ. ຊີວິດຂອງລາວປ່ຽນ, ຊີວິດຂອງທ່ານກໍສາມາດປ່ຽນໄດ້ເຫມືອນກັນ.

## <u>ຄຳຖາມຊວນຄິດ:</u>

1. ການເອີ້ນໃຫ້ອອກໄປຄັ້ງແຣກຂອງໂປໂລແມ່ນໃຫ້ອອກໄປກວາດລ້າງຄຣິສຕຽນ. ແມ່ນຫຍັງເກີດຂຶ້ນຫລັງຈາກພຣະເຈົ້າເອີ້ນລາວ?

2. ໂປໂລຖືກເອີ້ນໃຫ້ອອກໄປປະກາດໃຫ້ພວກຕ່າງຊາດ. (ພວກທີ່ບໍ່ເປັນຢິວ) ເປັນຫຍັງໂປໂລຍັງເທສນາໃຫ້ພວກຢິວຟັງຢູ່ເລີຍໆ?

3. ທ່ານຈະຮູ້ຈັກຢ່າງໃດວ່າຊີວິດຂອງທ່ານໄດ້ຖືກເອີ້ນໃຫ້ອອກໄປແລ້ວ?

4. ມີວິທີທາງໃດ ທີ່ຄອບຄົວຂອງທ່ານແລະ ໂບດຈະເປັນພາກສ່ວນຮ່ວມກັນ?